ERNST & YOUNG COPY

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນລວມກິດຈະການ ສຳລັບໄລຍະ 6 ເດືອນຕົ້ນປີ ອີງຕາມ ມາດຕະຖານສາກົນດ້ານການລາຍງານການເງິນ

ວັນທີ 30 ມິຖຸນາ 2015

EY

Building a better

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປຂອງທະນາຄານ	1 - 3
ບົດລາຍງານຈາກການທົບທວນຄືນເອກະສານລາຍງານການເງິນລວມກິດຈະການ ສຳລັບໄລຍະ 6 ເດືອນຕົ້ນປີ	4 - 5
ໃບລາຍງານຜົນໄດ້ຮັບໃນການທຸລະກິດລວມກິດຈະການ	6
ໃບລາຍງານຜົນໄດ້ຮັບນອກການທຸລະກິດລວມກິດຈະການ	7
ໃບລາຍງານຖານະການເງິນລວມກິດຈະການ	8 - 9
ໃບລາຍງານສ່ວນປ່ຽນແປງຂອງທຶນລວມກິດຈະການ	10
ໃບລາຍງານກະແສເງິນສົດລວມກິດຈະການ	11 - 12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ	13 – 72

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນທົ່ວໄປຂອງທະນາຄານ

ທະນາຄານ

ທະນາຄານການຄ້າຕ່າງປະເທດລາວມະຫາຊົນ (ໃນນີ້ເອີ້ນວ່າ "ທະນາຄານ") ເປັນທະນາຄານມະຫາຊົນ ທີ່ດຳເນີນທຸລະກິດ ແລະ ຈົດທະບຽນຢູ່ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ).

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນະຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989 ອອກໂດຍທະນາຄານແຫ່ງ ສປປ ລາວ ແລະ ໃບອະນຸຍາດດຳເນີນທຸລະກິດດ້ານການທະນາຄານ ສະບັບປຸງຄັ້ງລ່າສຸດ ເລກທີ 4284/ທຫລ, ລົງວັນທີ 11 ພະຈິກ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED (''COFIBRED''). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150,235,349,000 ກີບໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ອີງຕາມການແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ, ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 30 ມິຖຸນາ 2015 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*%*
ລັດຖະບານ	95,604,321	70%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ)	13,657,760	10%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	13,657,759	10%
ນັກລົງທຶນຕ່າງປະເທດ	13,657,760	10%
	136,577,600	**100%**

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 30 ມິຖຸນາ 2015 ແມ່ນ 682,888 ລ້ານກີບ (ນະວັນທີ 31 ທັນວາ 2014 : 682,888 ລ້ານກີບ)

ທະນາຄານ (ຕໍ່)

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ. ນະວັນທີ 30 ມິຖຸນາ 2015 ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ສີ່ (4) ບໍລິສັດຮ່ວມທຶນ, ສິບເກົ້າ (19) ສາຂາຫລັກ, ເຈັດສິບຫ້າ (75) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ບໍລິສັດໃນເຄືອ

ນະວັນທີ 30 ມິຖຸນາ 2015 ທະນາຄານມີ ໜຶ່ງ (01) ບໍລິສັດໃນເຄືອຄື:

ຊື່	*ໃບທະບຽນ ເລກທີ*	*ຂະແໜງການ*	*% ຮຸ້ນຂອງ ທະນາຄານ*
ບໍລິສັດຫລັກຊັບ ທຄຕລ-ກທ ຈຳກັດ	ເລກທີ 180 -10 ລົງວັນທີ 14 ທັນວາ 2010 ໂດຍກົມ ສົ່ງເສີມການລົງທຶນຂອງກະຊວງແຜນການ ແລະ ການລົງທຶນ ຂອງ ສປປ ລາວ	ຫລັກຊັບ	70%

ບໍລິສັດຮ່ວມທຶນ

ນະວັນທີ 30 ມິຖຸນາ 2015 , ທະນາຄານມີ ສີ່ (04) ບໍລິສັດຮ່ວມທຶນຄື:

ຊື່	*ໃບທະບຽນ ເລກທີ*	*ຂະແໜງການ*	*% ຮຸ້ນຂອງ ທະນາຄານ*
ທະນາຄານຮ່ວມ ທຸລະກິດ ລາວ-ຫວຽດ	ເລກທີ 232/11 ລົງວັນທີ 08 ກັນຍາ 2011 ໂດຍທະນາຄານ ແຫ່ງ ສປປ ລາວ.	ການທະນາຄານ & ການເງິນ	35%
ທະນາຄານລາວ- ຝຣັ່ງ ຈຳກັດ	121-09/ຜທ ລົງວັນທີ 26 ສິງຫາ 2009 ໂດຍກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ	ການທະນາຄານ & ການເງິນ	46%
ບໍລິສັດປະກັນໄພ ລາວ-ຫວຽດ	ເລກທີ 077/08/FIMC ລົງວັນທີ 09 ມິຖຸນາ 2008 ໂດຍ ຄະນະກຳມະການລົງທຶນ ຕ່າງປະເທດ ຂອງສປປ ລາວ.	ປະກັນໄພ	35%
ທະນາຄານ ລາວ-ຈີນ ຈຳກັດ	ເລກທີ 041/ຫຈທ ລົງວັນທີ 27 ມັງກອນ 2014 ໂດຍ ພະແນກທະບຽນວິສາຫະກິດ ຂອງ ສປປ ລາວ.	ການທະນາຄານ & ການເງິນ	49%

ທະນາຄານ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນຊ່ວງເວລາ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2015 ແລະ ນະວັນທີທີ່ອອກບົດລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ບຸນເຫຼືອ ສິນໄຊໂຍຣະວົງ	ປະທານ	ແຕ່ງຕັ້ງ ວັນທີ 9 ເມສາ 2015
ທ່ານ ຄຳສຸກ ສູນດາລາ	ຮອງປະທານ	ແຕ່ງຕັ້ງ ວັນທີ 9 ເມສາ 2015
ທ່ານ ພູຂົງ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງ ວັນທີ 9 ເມສາ 2015
ທ່ານ ພັນຊະນະ ຄຸນນຸວົງ	ສະມາຊິກ	ແຕ່ງຕັ້ງ ວັນທີ 9 ເມສາ 2015
ທ່ານ ຂັນທະລີ ວົງໄຊຍະລາດ	ສະມາຊິກ	ແຕ່ງຕັ້ງ ວັນທີ 9 ເມສາ 2015
ທ່ານ ມາກ ໂຮເບີດ	ສະມາຊິກ	ແຕ່ງຕັ້ງ ວັນທີ 9 ເມສາ 2015
ທ່ານ ວຽງໄຊ ຈັນທະວິສຸກ	ສະມາຊິກ	ແຕ່ງຕັ້ງ ວັນທີ 9 ເມສາ 2015

ຄະນະຜູ່ອຳນວຍການ

ສະມາຊິກຄະນະຜູ່ອຳນວຍການຂອງທະນາຄານ ພາຍໃນຊ່ວງເວລາ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2015 ແລະ ນະວັນທີທີ່ອອກບົດລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ວັນຄຳ ວໍຣະວົງ	ຜູ່ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 13 ມັງກອນ 2012 ຍ້າຍອອກໄປຮັບໜ້າທີ່ໃໝ່ ວັນທີ 16 ກຸມພາ 2015
ທ່ານ ພູຂົງ ຈັນທະຈັກ	ຮັກສາການຜູ່ອຳນວຍການ	ແຕ່ງຕັ້ງ ວັນທີ 17 ກຸມພາ 2015
ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ່ອຳນວຍການ	ແຕ່ງຕັ້ງ ວັນທີ 06 ມິຖຸນາ 2008
ທ່ານ ນ. ຂັນທະລີ ວົງໄຊຍະລາດ	ຮອງຜູ່ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ລາໃຈ ຂັນພຣະວົງ	ຮອງຜູ່ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ່ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ຈາກວັນທີ 1 ມັງກອນ 2015 ຫາ ວັນທີ 16 ກຸມພາ 2015 ແມ່ນ ທ່ານ ວັນຄຳ ວໍຣະວົງ - ຜູ່ອຳນວຍການໃຫຍ່.

ຕົວແທນທາງດ້ານກົດໝາຍຂອງທະນາຄານ ຈາກວັນທີ 17 ກຸມພາ 2015 ຮອດ ວັນທີ ອອກບົດລາຍງານສະບັບນີ້ ແມ່ນ ທ່ານ ພູຂົງ ຈັນທະຈັກ - ຮັກສາການຜູ່ອຳນວຍການ

ຜູ່ກວດສອບບັນຊີ

ຜູ່ກວດສອບບັນຊີຂອງທະນາຄານແມ່ນບໍລິສັດ ເອີນ ແອນ ຢັງລາວ ຈຳກັດ.

Ernst & Young Lao Limited
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : + 856 21 455 077
Fax: + 856 21 455 078
ey.com

Building a better working world

ເລກທີອ້າງອີງ: 60790273/17933508-HY-IFRS - CS

ບົດລາຍງານຈາກການທົບທວນຄືນເອກະສານລາຍງານການເງິນລວມກິດຈະການ ສຳລັບໄລຍະ 6 ເດືອນ ຕົ້ນປີ

ຮຽນ: ຜູ້ຖືຮຸ້ນ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທີ່ນັບຖື,

ຄຳນຳ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ເອກະສານລາຍງານການເງິນລວມກິດຈະການຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ທະນາຄານ"), ທີ່ໄດ້ຄັດຕິດມາກັບບົດລາຍງານຂອງນັກກວດສອບອິດສະຫຼະສະບັບນີ້, ມີຢູ່ໃນໜ້າທີ 6 ຫາ 72 ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນລວມກິດຈະການ ນະວັນທີ 30 ມິຖຸນາ 2015, ໃບລາຍງານຜົນໄດ້ຮັບໃນການທຸລະກິດລວມກິດຈະການ, ໃບລາຍງານຜົນໄດ້ຮັບນອກການທຸລະກິດລວມກິດຈະການ, ໃບລາຍງານສ່ວນປ່ຽນແປງທຶນຕົນເອງລວມກິດຈະການ ແລະ ໃບລາຍງານກະແສເງິນສິດລວມກິດຈະການ ສຳລັບ ຫົກ ເດືອນຕົ້ນປີ ແລະ ສະຫຼຸບນະໂຍບາຍບັນຊີຕ່າງໆ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ.

ຄະນະອຳນວຍການຂອງທະນາຄານແມ່ນມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນສະບັບນີ້ຢ່າງຖືກຕ້ອງໂດຍອີງຕາມມາດຕະຖານສາກົນດ້ານການລາຍງານການເງິນ. ສຳລັບຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນຂອກຂໍ້ສະຫຼຸບກ່ຽວກັບເອກະສານລາຍງານການເງິນລວມກິດຈະການ ສຳລັບໄລຍະ 6 ເດືອນຕົ້ນປີ ໂດຍອີງໃສ່ພື້ນຖານຜົນການທົບທວນຄືນຂອງພວກຂ້າພະເຈົ້າ.

ຂອບເຂດຂອງການທົບທວນຄືນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນໂດຍອີງຕາມມາດຕະຖານສາກົນໃນດ້ານສັນຍາການທົບທວນຄືນ ເລກທີ 2410, ກ່ຽວກັບ "ການທົບທວນຄືນເອກະສານລາຍງານການເງິນສຳລັບໄລຍະ 6 ເດືອນຕົ້ນປີ ເຊິ່ງດຳເນີນໂດຍນັກກວດສອບອິດສະຫຼະຂອງທະນາຄານ". ການທົບທວນຄືນເອກະສານລາຍງານການເງິນພາຍໃນໄລຍະກອບມີ ການປຶກສາຫາລືກັບພະນັກງານທີ່ຮັບຜິດຊອບດ້ານການເງິນ ແລະ ການບັນຊີ ແລະ ນຳໃຊ້ຂະບວນການວິເຄາະ ແລະ ກວດຄືນຕ່າງໆ. ການທົບທວນຄືນແມ່ນມີຂອບເຂດທີ່ບໍ່ກວ້າງເທົ່າການກວດສອບທີ່ປະຕິບັດຕາມມາດຕະຖານສາກົນໃນການກວດສອບ ແລະ ບໍ່ສາມາດເຮັດໃຫ້ພວກຂ້າພະເຈົ້າເກັບກຳຂໍ້ມູນພຽງພໍທີ່ຈະຮັບປະກັນເຖິງບັນດາບັນຫາສຳຄັນຕ່າງໆ ເຊິ່ງສາມາດພົບເຫັນໄດ້ໃນເວລາກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າຈຶ່ງບໍ່ຂໍອອກຄຳເຫັນໃນຮູບແບບໃດໆຕໍ່ເອກະສານລາຍງານການເງິນລວມກິດຈະການ ສຳລັບໄລຍະ 6 ເດືອນຕົ້ນປີ.

ພື້ນຖານໃນການສະຫຼຸບແບບມີເງື່ອນໄຂ

ເນື່ອງຈາກມີຂໍ້ຈຳກັດຂອງຂໍ້ມູນ. ສະນັ້ນ, ທາງຄະນະອຳນວຍການຂອງທະນາຄານຍັງບໍ່ສາມາດເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງກັບ ມູນຄ່າຍຸດຕິທຳ ແລະ ການບໍລິຫານຄວາມສ່ຽງຂອງເຄື່ອງມືທາງການເງິນທີ່ໄດ້ກຳນົດໄວ້ພາຍໃຕ້ ມາດຕະຖານຂອງ IFRS "ເລກທີ 7 – ເຄື່ອງມືທາງການເງິນ: ການເປີດເຜີຍຂໍ້ມູນ" ແລະ "ເລກທີ 13 - ການຕີມູນຄ່າຍຸດຕິທຳ".

Building a better working world

ການສະຫຼຸບແບບມີເງື່ອນໄຂ

ອີງຕາມການທົບທວນຄືນຂອງພວກຂ້າພະເຈົ້າເຫັນວ່າ ບໍ່ມີສິ່ງໃດ (ຍົກເວັ້ນບັນຫາທີ່ໄດ້ອະທິບາຍໄວ້ໃນວັກ ພື້ນຖານການສະຫຼຸບແບບມີເງື່ອນໄຂ) ທີ່ເຮັດໃຫ້ພວກຂ້າພະເຈົ້າເຊື່ອວ່າ ເອກະສານລາຍງານການເງິນລວມກິດຈະການ ສຳລັບໄລຍະ 6 ເດືອນຕົ້ນປີນີ້ບໍ່ໄດ້ສະແດງເຖິງຄວາມເປັນຈິງຂອງ ຖານະການເງິນຂອງທະນາຄານ ນະວັນທີ 30 ມິຖຸນາ 2015 ລວມທັງຜົນປະກອບການ ແລະ ໃບລາຍງານກະແສເງິນສົດລວມກິດຈະການ ສຳລັບໄລຍະ 6 ເດືອນຕົ້ນປີ ທີ່ຖືກກະກຽມໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າຍັງສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເລກທີ 31 - ການເປີດເຜີຍພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຂາຍດິນ 36 ຕອນ ໃຫ້ກັບທະນາຄານແຫ່ງ ສປປ ລາວ. ເຊິ່ງລາຄາສຳລັບດິນທີ່ຂາຍ ແມ່ນຂຶ້ນຢູ່ກັບການຕີລາຄາ ລະຫວ່າງ ທະນາຄານ ແລະ ທະນາຄານແຫ່ງ ສປປ ລາວເທົ່ານັ້ນ.

Ernst & Young

ນະຄອນຫລວງວຽງຈັນ, ສປປ ລາວ

28 ສິງຫາ 2015

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບໃນການທຸລະກິດລວມກິດຈະການ
ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸນ ວັນທີ 30 ມິຖຸນາ 2015

	ບົດອະທິບາຍເລກທີ	*ສຳລັບໄລຍະ 6 ເດືອນ ຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2015 ລ້ານກີບ*	*ສຳລັບໄລຍະ 6 ເດືອນ ຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2014 ລ້ານກີບ*
ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ	3	519,288	514,220
ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ	4	(406,353)	(311,947)
ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ		**112,935**	**202,273**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ	5	77,670	67,028
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	5	(6,483)	(12,569)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**5**	**71,187**	**54,459**
(ຂາດທຶນ)/ກຳໄລ ສຸດທິຈາກການຄ້າ	6	(264,682)	46,057
ລາຍຮັບຈາກການດຳເນີນງານອື່ນໆ	7	367,872	12,034
ລາຍຮັບທັງໝົດຈາກການດຳເນີນງານ		**287,312**	**314,823**
ລາຍຈ່າຍທີ່ຫັກເປັນເງິນແຮສຳລັບການສູນເສຍເງິນກູ້	14	(83,538)	(72,047)
ເກັບຄືນຄ່າເຊື່ອມມູນຄ່າຂອງການລົງທຶນທາງການເງິນ	8	363	28,289
ເກັບຄືນຄ່າເຊື່ອມມູນຄ່າຂອງຊັບສິນອື່ນໆ		-	5,886
ລາຍຮັບສຸດທິຈາກການດຳເນີນງານ		**204,137**	**276,951**
ລາຍຈ່າຍພະນັກງານ	9	(94,782)	(92,158)
ຄ່າຫລຸ້ຍຫ້ຽນ ແລະ ຄ່າເຊື່ອມ		(30,484)	(28,817)
ລາຍຈ່າຍອື່ນໆຈາກການດຳເນີນງານ	10	(41,805)	(47,616)
ລາຍຈ່າຍທັງໝົດຈາກການດຳເນີນງານ		**(167,071)**	**(168,591)**
ສ່ວນແບ່ງກຳໄລ ຂອງບໍລິສັດຮ່ວມທຶນ		38,522	16,896
ກຳໄລກ່ອນອາກອນ		**75,588**	**125,256**
ລາຍຈ່າຍອາກອນກຳໄລພາຍໃນໄລຍະ	24.1	(3,447)	(20,078)
ລາຍຈ່າຍອາກອນກຳໄລເຍື້ອນຊຳລະ	24.1	(3,291)	(787)
ກຳໄລສຸດທິພາຍໃນໄລຍະ		**68,850**	**104,391**
ແບ່ງເຂົ້າ:			
ສ່ວນໄດ້ສ່ວນເສຍທີ່ບໍ່ສາມາດຄວບຄຸມ		303	349
ຜູ້ຖືຮຸ້ນຂອງບໍລິສັດແມ່		68,547	104,042
ກຳໄລຕໍ່ຮຸ້ນ (ກີບ)	**39**	**502**	**762**

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ທອງລິດ ສາວຈັນທະລາ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນ້ຳທະລາດ ແກ້ວປະເສີດ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
28 ສິງຫາ 2015

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບນອກການທຸລະກິດລວມກິດຈະການ
ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸມ ວັນທີ 30 ມິຖຸນາ 2015

	ບົດ ອະທິບາຍ ເລກທີ	*ສຳລັບໄລຍະ 6 ເດືອນ ຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2015 ລ້ານກີບ*	*ສຳລັບໄລຍະ 6 ເດືອນ ຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2014 ລ້ານກີບ*
ກຳໄລສຸດທິພາຍໃນໄລຍະ		**68,850**	**104,391**
ລາຍຮັບນອກການທຸລະກິດອື່ນໆ			
ກຳໄລສຸດທິຈາກການລົງທຶນໃນຫຼັກຊັບມີໄວ້ເພື່ອຂາຍ		1,306	11,079
ອາກອນກຳໄລທີ່ກ່ຽວຂ້ອງກັບອົງປະກອບຂອງລາຍຮັບນອກ ການທຸລະກິດ	24.4	(4,256)	(2,105)
ລາຍຮັບນອກການທຸລະກິດພາຍໃນໄລຍະ ຫຼັງຫັກອາກອນ		**(2,950)**	**8,974**
ຍອດລວມລາຍຮັບນອກການທຸລະກິດພາຍໃນໄລຍະ ຫຼັງຫັກ ອາກອນ		**65,900**	**113,365**
ແບ່ງເຂົ້າ:			
ຜູ້ຖືຮຸ້ນຂອງບໍລິສັດແມ່		65,597	113,016
ສ່ວນໄດ້ສ່ວນເສຍທີ່ບໍ່ສາມາດຄວບຄຸມ		303	349

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ລຳມະນີເສງ ໄຊຍະເພັດ	ທ່ານ ນ. ທອງລິດ ສາວຈັນທະລາ	ທ່ານ ນັນທະລາດ ແກ້ວປະເສີດ
ຫົວໜ້າພະແນກບັນຊີສັງລວມ	ຮອງຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
28 ສິງຫາ 2015

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ
ນະ ວັນທີ 30 ມິຖຸນາ 2015

	ບົດ ອະທິບາຍ ເລກທີ	*30 ມິຖຸນາ 2015 ລ້ານກີບ*	*31 ທັນວາ 2014 ລ້ານກີບ*
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ ທຫລ	11	9,028,527	7,271,254
ເງິນຝາກຢູ່ທະນາຄານອື່ນ	12	2,197,709	3,774,198
ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ	13	9,411,587	9,622,905
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຄ້າ		5,504	3,906
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ	15	223,244	222,332
ການລົງທຶນທາງດ້ານການເງິນ - ປະເພດຖືໄວ້ຈົນຄົບກຳນົດ	16	1,512,812	1,266,732
ການລົງທຶນໃນບັນດາ ບໍລິສັດຮ່ວມທຶນ	17	547,173	534,430
ຊັບສິນບັດຄົງທີ່ ແລະ ອຸປະກອນ	18	259,668	250,393
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	19	256,799	271,569
ຊັບສິນອາກອນເຍື້ອນຊຳລະ	24.4	6,529	5,999
ຊັບສິນອື່ນໆ	20	280,528	265,441
ລວມຊັບສິນ		**23,730,080**	**23,489,159**
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ	21	2,246,327	2,861,725
ໜີ້ຕ້ອງສົ່ງລູກຄ້າ	22	19,946,638	19,101,649
ກູ້ຢືມຈາກ ທຫລ	23	247,886	121,287
ໜີ້ສິນອາກອນພາຍໃນໄລຍະ	24.**2**	19,431	20,028
ໜີ້ສິນອາກອນເຍື້ອນຊຳລະ	24.4	25,471	17,394
ໜີ້ສິນອື່ນໆ	25	58,846	216,385
ລວມໜີ້ສິນ		**22,544,599**	**22,338,468**
ທຶນ			
ທຶນຈົດທະບຽນ	26	682,888	682,888
ຄັງສະສົມຕາມລະບຽບການ ແລະ ອື່ນໆ	27	314,782	279,157
ຄັງແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ	28	61,192	64,142
ຮຸ້ນທີ່ໄດ້ຊື້ຄືນ		(1,010)	(1,010)
ກຳໄລສະສົມ		94,424	92,612
		1,152,276	**1,117,789**
ສ່ວນໄດ້ສ່ວນເສຍທີ່ບໍ່ສາມາດຄວບຄຸມ		33,205	32,902
ລວມທຶນ		**1,185,481**	**1,150,691**
ລວມໜີ້ສິນ ແລະ ທຶນ		**23,730,080**	**23,489,159**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ (ຕໍ່)
ນະວັນທີ 30 ມິຖຸນາ 2015

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ລຳມະນີແສງ ໄຊຍະເພັດ	ທ່ານ ນ. ທອງລິດ ສາຈັນທະລາ	ທ່ານ ນັນທະລາດ ແກ້ວປະເສີດ
ຫົວໜ້າພະແນກບັນຊີສັງລວມ	ຮອງຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
28 ສິງຫາ 2015

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ອນປ່ຽນແປງຂອງທຶນຕົນເອງລວມກິດຈະການ
ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015

	ທຶນຈົດທະບຽນ ລ້ານກີບ	*ຄັງສະສົມຕາມລະບຽບການ ລ້ານກີບ*	*ຄັງສະສົມອື່ນໆ ລ້ານກີບ*	*ຮຸ້ນທີ່ໄດ້ຊື້ຄືນ ລ້ານກີບ*	*ເງິນແຮ່ຄ່າເຊື່ອມ ສຳລັບ ຫລັກຊັບ ມີໄວ້ເພື່ອຂາຍ ລ້ານກີບ*	*ກຳໄລ/ຂາດທຶນ ສະສົມ ລ້ານກີບ*	*ສ່ວນໄດ້ສ່ວນ ເສຍທີ່ບໍ່ ສາມາດຄວບ ຄຸມ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອນະວັນທີ 31 ທັນວາ 2014	**682,888**	**279,157**	-	**(1,010)**	**64,142**	**92,612**	**32,902**	**1,150,691**
ລາຍຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ	-	-	-	-	-	(31,811)	-	(31,811)
ກຳໄລສຸດທິໃນໄລຍະ	-	-	-	-	-	68,547	303	68,850
ແບ່ງສ່ວນກຳໄລເຂົ້າຄັງສະສົມສຳລັບປີ 2014	-	23,350	12,275	-	-	(35,625)	-	-
ປ່ຽນແປງສຸດທິໃນເງິນແຮ່ຂອງການລົງທຶນ ມີໄວ້ເພື່ອຂາຍ	-	-	-	-	(2,950)	-	-	(2,950)
ສ່ວນຜິດຕ່ຽງຈາກອັດຕາແລກປ່ຽນ	-	-	-	-	-	701	-	701
ຍອດເຫຼືອນະວັນທີ 30 ມິຖຸນາ 2015	**682,888**	**302,507**	**12,275**	**(1,010)**	**61,192**	**94,424**	**33,205**	**1,185,481**

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ທອງລິດ ສາຈັນທະລາ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນ.ນ.ທະລາ ແກ້ວປະເສີດ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
28 ສິງຫາ 2015

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດລວມກິດຈະການ
ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015

	ບົດ ອະທິບາຍ ເລກທີ່	*ສຳລັບໄລຍະ 6 ເດືອນ ຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2015 ລ້ານກີບ*	*ສຳລັບໄລຍະ 6 ເດືອນ ຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2014 ລ້ານກີບ*
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		75,588	125,256
ການດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ		30,484	28,817
ລາຍຈ່າຍທີ່ຫັກເປັນເງິນແຮສຳລັບການສູນເສຍເງິນກູ້ ແລະ ຄ່າເຊື່ອມຂອງການລົງທຶນທາງການເງິນ		83,175	37,872
ສ່ວນແບ່ງກຳໄລຂອງບໍລິສັດພາຍໃຕ້ວິທີສ່ວນໄດ້ເສຍ		(38,522)	-
ກຳໄລຈາກການຂາຍຊັບສິນບັດຄົງທີ່		(358,194)	-
ລາຍຮັບເງິນປັນຜົນ		(7,739)	-
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ ໃນການດຳເນີນງານ		**(215,208)**	**191,945**
ການປ່ຽນແປງຂອງຊັບສິນຈາກການດຳເນີນງານ			
ເງິນຝາກຢູ່ທະນາຄານອື່ນ		(209,157)	115,559
ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແລະ ທະນາຄານອື່ນ		128,356	57,789
ການລົງທຶນໃນເຄື່ອງມືທາງການເງິນມີໄວ້ເພື່ອຄ້າ		(1,598)	-
ການລົງທຶນໃນເຄື່ອງມືທາງການເງິນມີໄວ້ເພື່ອຂາຍ		(912)	-
ການລົງທຶນໃນເຄື່ອງມືທາງການເງິນທີ່ຖືໄວ້ຈົນຄົບກຳນົດ		(245,717)	-
ຊັບສິນອື່ນໆ		(15,087)	126,141
ການປ່ຽນແປງຂອງໜີ້ສິນຈາກການດຳເນີນງານ			
ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ ແລະ ທຫລ		(488,798)	644,449
ເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງລູກຄ້າ		844,988	2,272,647
ໜີ້ສິນອື່ນໆ		(153,447)	(54,666)
ອາກອນກຳໄລທີ່ໄດ້ຈ່າຍພາຍໃນໄລຍະ		(6,127)	(13,474)
ກະແສເງິນສົດສຸດທິ ຈາກ/(ໃຊ້ໃນ) ກິດຈະກຳການດຳເນີນງານ		**(362,707)**	**3,340,390**
ກິດຈະກຳການລົງທຶນ			
ການຈັດຊື້ ແລະ ການກໍ່ສ້າງຊັບສິນບັດຄົງທີ່		(36,514)	(83,328)
ຮັບຈາກການຂາຍຊັບສິນບັດຄົງທີ່		369,719	478
ລາຍຈ່າຍສຳລັບການລົງທຶນໃນຫລັກຊັບ		-	(22,075)
ລາຍຈ່າຍສຳລັບການລົງທຶນໃນນິຕິບຸກຄົນອື່ນ		-	(154,491)
ເງິນປັນຜົນ ທີ່ໄດ້ຮັບ		33,518	-
ກະແສເງິນສົດສຸດທິ ທີ່ຈາກ/(ໃຊ້ໃນ) ກິດຈະກຳການລົງທຶນ		**366,723**	**(259,416)**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດລວມກິດຈະການ (ຕໍ່)
ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015

	ບົດອະທິບາຍເລກທີ່	*ສຳລັບໄລຍະ 6 ເດືອນ ຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2015 ລ້ານກີບ*	*ສຳລັບໄລຍະ 6 ເດືອນ ຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2014 ລ້ານກີບ*
ກິດຈະກຳຈັດຫາເງິນ			
ຈ່າຍເງິນປັນຜົນ		(31,811)	(76,789)
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳຈັດຫາເງິນ		**(31,811)**	**(76,789)**
(ຫຼຸດລົງ)/ເພີ່ມຂຶ້ນ ສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ		**(27,795)**	**3,004,185**
ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນໄລຍະ		**10,081,167**	**4,362,710**
ສ່ວນຜິດຕ່າງຈາກອັດຕາແລກປ່ຽນ		**(576)**	**(147)**
ເງິນສົດ ແລະ ທຽບເທົ່າເງິນສົດທ້າຍໄລຍະ	**29**	**10,052,796**	**7,366,748**

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ທອງລິດ ສາຈັນທະລາ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນ້ຳທະສາດ ແກ້ວປະເສີດ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
28 ສິງຫາ 2015

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ
ນະວັນທີ ແລະ ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວມະຫາຊົນ (ໃນນີ້ເອີ້ນວ່າ "ທະນາຄານ") ເປັນທະນາຄານມະຫາຊົນ ທີ່ດຳເນີນທຸລະກິດ ແລະ ຈົດທະບຽນຢູ່ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ).

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນະຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989 ອອກໂດຍທະນາຄານແຫ່ງ ສປປ ລາວ ແລະ ໃບອະນຸຍາດດຳເນີນທຸລະກິດດ້ານການທະນາຄານ ສະບັບປຸງຄັ້ງລ່າສຸດ ເລກທີ 4284/ທຫລ, ລົງວັນທີ 11 ພະຈິກ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງ ຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED (“COFIBRED”). ອີງຕາມສັນຍາການຊື້ ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150,235,349,000 ກີບໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ອີງຕາມການແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ, ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 30 ມິຖຸນາ 2015 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	ຈຳນວນຮຸ້ນ	%
ລັດຖະບານ	95,604,321	70%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ)	13,657,760	10%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	13,657,759	10%
ນັກລົງທຶນຕ່າງປະເທດ	13,657,760	10%
	136,577,600	**100%**

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການ ບໍລິການການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 30 ມິຖຸນາ 2015 ແມ່ນ 682,888 ລ້ານກີບ. (ນະວັນທີ 31 ທັນວາ 2014 : 682,888 ລ້ານ ກີບ)

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ (ຕໍ່)
ນະວັນທີ ແລະ ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015

1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 30 ມິຖຸນາ 2015 ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ສີ່ (4) ບໍລິສັດຮ່ວມທຶນ, ສິບເກົ້າ (19) ສາຂາຫລັກ, ເຈັດສິບຫ້າ (75) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ບໍລິສັດໃນເຄືອ

ນະວັນທີ 30 ມິຖຸນາ 2015 ທະນາຄານມີ ໜຶ່ງ (01) ບໍລິສັດໃນເຄືອຄື:

ຊື່	*ໃບທະບຽນວິສາຫະກິດເລກທີ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ບໍລິສັດຫລັກຊັບ ທຄຕລ-ภทห ຈຳກັດ	ເລກທີ 18-10 ລົງວັນທີ 14 ທັນວາ 2010 ໂດຍກົມສົ່ງເສີມການລົງທຶນ ຂອງກະຊວງແຜນການ ແລະ ການລົງທຶນ ຂອງ ສປປ ລາວ	ຫລັກຊັບ	70%

ບໍລິສັດຮ່ວມທຶນ

ນະວັນທີ 30 ມິຖຸນາ 2015 , ທະນາຄານມີ ສີ່ (04) ບໍລິສັດຮ່ວມທຶນຄື:

ຊື່	*ໃບທະບຽນວິສາຫະກິດເລກທີ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ທະນາຄານຮ່ວມ ທຸລະກິດ ລາວ-ຫວຽດ	ເລກທີ 232/11 ລົງວັນທີ 08 ກັນຍາ 2011 ໂດຍ ທະນາຄານແຫ່ງ ສປປ ລາວ.	ການທະນາຄານ & ການເງິນ	35%
ທະນາຄານລາວ- ฝรั่ง ຈຳກັດ	121-09/ผห ລົງວັນທີ 26 ສິງຫາ 2009 ໂດຍ ກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ	ການທະນາຄານ & ການເງິນ	46%
ບໍລິສັດປະກັນໄພ ລາວ-ຫວຽດ	ເລກທີ 077/08/FIMC ລົງວັນທີ 09 ມິຖຸນາ 2008 ໂດຍ ຄະນະກຳມະການລົງທຶນ ຕ່າງປະເທດ ຂອງສປປ ລາວ.	ປະກັນໄພ	35%
ທະນາຄານ ລາວ-ຈີນ ຈຳກັດ	ເລກທີ 041/ຫຈຫ ລົງວັນທີ 27 ມັງກອນ 2014 ໂດຍພະແນກທະບຽນວິສາຫະກິດ ຂອງ ສປປ ລາວ.	ການທະນາຄານ & ການເງິນ	49%

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ (ຕໍ່)
ນະວັນທີ ແລະ ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015

1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນຊ່ວງເວລາ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2015 ແລະ ນະວັນທີທີ່ ອອກເອກະສານລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ບຸນເຫຼືອ ສິນໄຊວໍລະວົງ	ປະທານ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ຄຳສຸກ ສູນດາລາ	ຮອງປະທານ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ພູຂົງ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ພັນຊະນະ ຄຸນນຸວົງ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ນ. ຂັນທະລີ ວົງໄຊຍະລາດ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ມາກ ໂຣເບີດ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ວຽງໄຊ ຈັນທະວິສຸກ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ພາຍໃນໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2015 ແລະ ນະວັນທີ ທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ວັນຄຳ ວໍຣະວົງ	ຜູ່ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 13 ມັງກອນ 2012 ຍ້າຍອອກໄປຮັບໜ້າທີ່ໃໝ່ ວັນທີ 16 ກຸມພາ 2015
ທ່ານ ພູຂົງ ຈັນທະຈັກ	ຮັກສາການຜູ່ອຳນວຍການ	ແຕ່ງຕັ້ງ ວັນທີ 17 ກຸມພາ 2015
ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ່ອຳນວຍການ	ແຕ່ງຕັ້ງ ວັນທີ 06 ມິຖຸນາ 2008
ທ່ານ ນ. ຂັນທະລີ ວົງໄຊຍະລາດ	ຮອງຜູ່ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ລາໃຈ ຂັນພຣະວົງ	ຮອງຜູ່ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ່ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014

ພະນັກງານ

ຈຳນວນພະນັກງານຂອງທະນາຄານນະວັນທີ 30 ມິຖຸນາ 2015 ແມ່ນ 1,488 ຄົນ (31 ທັນວາ 2014 ແມ່ນ 1,470 ຄົນ).

2. ນະໂຍບາຍການບັນຊີ

2.1 ພື້ນຖານການກະກຽມ

ທະນາຄານສ້າງເອກະສານລາຍງານການເງິນລວມກິດຈະການ ສຳລັບໄລຍະຫົກເດືອນຕົ້ນປີ ອີງຕາມມາດຕະຖານສາກົນດ້ານການລາຍງານການເງິນ ("IFRS"). ເອກະສານລາຍງານການເງິນລວມກິດຈະການໄດ້ຖືກສ້າງຂຶ້ນບົນພື້ນຖານຄວາມຕໍ່ເນື່ອງຂອງຂໍ້ມູນ, ເວັ້ນແຕ່ໄດ້ເປີດເຜີຍຢູ່ໃນບົດອະທິບາຍຊ້ອນທ້າຍເລກທີໃດໜຶ່ງຂອງເອກະສານລາຍງານການເງິນສະບັບນີ້.

ທະນາຄານຮັກສາການບັນທຶກບັນຊີເປັນເງິນກີບ ("ກີບ") ເຊິ່ງເປັນສະກຸນ ເງິນຫລັກຂອງທະນາຄານ ແລະ ໄດ້ສ້າງເອກະສານລາຍງານການເງິນລວມກິດຈະການເປັນຫົວໜ່ວຍລ້ານກີບ.

ທະນາຄານຍັງໄດ້ສ້າງ ແລະ ອອກເອກະສານລາຍງານການເງິນສະເພາະກິດຈະການຕາມ IFRS ລົງວັນທີ 28 ສິງຫາ 2015.

2.2 ປີການບັນຊີ

ປີການບັນຊີຂອງທະນາຄານແມ່ນເລີ່ມຕົ້ນແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດ 31 ທັນວາ.

2.3 ການນຳສະເໜີເອກະສານລາຍງານການເງິນລວມກິດຈະການ

ທະນາຄານນຳສະເໜີເອກະສານລາຍງານຖານະການເງິນຂອງຕົນເອງຕໍ່ສາທາລະນະຕາມຄວາມຕ້ອງການຂອງມະຫາຊົນ. ຊັບສິນການເງິນ ແລະ ໜີ້ສິນການເງິນ ແມ່ນຖືກຫັກລົບກັນ ແລະ ມູນຄ່າຍັງເຫລືອຫລັງຈາກລົບກັນແລ້ວຈະຖືກລາຍງານໃນໃບລາຍງານຖານະການເງິນລວມກິດຈະການ, ຖ້າຫາກວ່າທະນາຄານຖືກບັງຄັບທາງກົດໝາຍໃຫ້ຊຳລະສະສາງຈຳນວນເງິນດັ່ງກ່າວນັ້ນ ແລະ ທະນາຄານຕັ້ງໃຈຈະສະສາງຈຳນວນເງິນສຸດທິ ຫລື ຂາຍຊັບສິນເພື່ອຊຳລະໜີ້ສິນໃນເວລາດຽວກັນ. ບັນດາລາຍຮັບ ແລະ ລາຍຈ່າຍຈະບໍ່ຖືກຫັກອອກໃນໃບລາຍງານຜົນໄດ້ຮັບ ຈົນກວ່າຈະມີກິດລະບຽບ ຫລື ຖືກຮຽກຮ້ອງໂດຍມາດຕະຖານການບັນຊີ ຫລື ການແປຄວາມໝາຍ, ໂດຍສະເພາະແມ່ນຕ້ອງໄດ້ລະບຸຢູ່ໃນນະໂຍບາຍການບັນຊີຂອງທະນາຄານ.

2.4 ພື້ນຖານການລວມກິດຈະການ

ເອກະສານລາຍງານການເງິນລວມກິດຈະການ ປະກອບມີ ເອກະສານລາຍງານການເງິນຂອງທະນາຄານ ແລະ ບໍລິສັດໃນເຄືອ ສຳລັບໄລຍະ ຈາກວັນທີ 1 ມັງກອນ 2015 ຫາ ວັນທີ 30 ມິຖຸນາ 2015. ເອກະສານລາຍງານການເງິນຂອງບໍລິສັດໃນເຄືອ ແມ່ນໄດ້ຖືກກະກຽມສຳລັບໄລຍະການບັນຊີດຽວກັນກັບໄລຍະການບັນຊີຂອງທະນາຄານ ໂດຍນຳໃຊ້ນັບດາຫຼັກການບັນຊີທີ່ສອດຄ່ອງກັນ.

ຍອດເຫຼືອພາຍໃນກຸ່ມ, ລາຍການເຄື່ອນໄຫວ, ລາຍຮັບ ແລະ ລາຍຈ່າຍທີ່ພົວພັນກັນພາຍໃນ ໄດ້ຕັດອອກເຕັມມູນຄ່າ.

ບັນດາບໍລິສັດໃນເຄືອ ແມ່ນໄດ້ຖືກສົງລວມເຂົ້າກັບທະນາຄານນັບຕັ້ງແຕ່ວັນທີທີ່ການຄວບຄຸມໄດ້ໂອນມາໃຫ້ແກ່ທະນາຄານ. ການຄວບຄຸມ ແມ່ນໄດ້ຮັບເມື່ອທະນາຄານໄດ້ມີອຳນາດໃນການບໍລິຫານບໍ່ວ່າທາງກົງ ຫຼື ທາງອ້ອມ ຕໍ່ກັບນະໂຍບາຍທາງການເງິນ ແລະ ການດຳເນີນງານຂອງບໍລິສັດດັ່ງກ່າວ ລວມທັງການໄດ້ຮັບຜົນປະໂຫຍດຈາກບັນດາບໍລິສັດເຫຼົ່ານັ້ນ.

2. ນະໂຍບາຍການບັນຊີ (ຕໍ່)

2.4 ພື້ນຖານການລວມກິດຈະການ (ຕໍ່)

ສ່ວນໄດສ່ວນເສຍທີ່ບໍ່ສາມາດຄວບຄຸມໄດ້ສະແດງອັດຕາສ່ວນຂອງກຳໄລ ແລະ ຂາດທຶນ ພ້ອມທັງຊັບສິນສຸດທິທີ່ບໍ່ໄດ້ຖືກຳມະສິດໂດຍທະນາຄານ ບໍ່ວ່າທາງກົງ ຫຼື ທາງອ້ອມ ຜ່ານບັນດາບໍລິສັດໃນເຄືອ ແມ່ນໄດ້ຖືກສະແດງແຍກຕ່າງຫາກ ໃນໃບລາຍງານຜົນໄດ້ຮັບລວມກິດຈະການ ແລະ ທຶນ ໃນໃບສະຫຼຸບຊັບສິນບັດລວມກິດຈະການ, ແຍກຈາກທຶນຂອງທະນາຄານ. ການສູນເສຍໃດໆທີ່ກ່ຽວຂ້ອງກັບສ່ວນໄດ້ສ່ວນເສຍທີ່ບໍ່ສາມາດຄວບຄຸມແມ່ນຖືກແບ່ງສ່ວນໄດ້ເສຍເຂົ້າກັບສ່ວນໄດ້ສ່ວນເສຍທີ່ບໍ່ສາມາດຄວບຄຸມ ເຖິງວ່າຈະສົ່ງຜົນໃຫ້ມີການຂາດດຸນ. ສ່ວນໄດ້ສ່ວນເສຍທີ່ບໍ່ມີອຳນາດຄວບຄຸມ ໄດ້ບັນທຶກບັນຊີໂດຍນຳໃຊ້ວິທີການຂະຫຍາຍກິດຈະການບໍລິສັດແມ່ ດ້ວຍເຫດນີ້ ຄວາມແຕກຕ່າງລະຫວ່າງ ການພິຈາລະນາ ແລະ ມູນຄ່າຍຸດຕິທຳ ຂອງຮຸ້ນຂອງຊັບສິນທີ່ໄດ້ມາແມ່ນຖືກບັນທຶກໃນພາກສ່ວນທຶນ.

2.5 ການພິຈາລະນາການບັນຊີທີ່ສຳຄັນ, ການຄາດຄະເນ ແລະ ຂໍ້ສົມມຸດຖານ

ໃນການກະກຽມສ້າງເອກະສານລາຍງານການເງິນລວມກິດຈະການຂອງທະນາຄານ, ຄະນະຜູ້ອຳນວຍການຂອງທະນາຄານ ຖືກຮຽກຮ້ອງໃຫ້ນຳໃຊ້ການພິຈາລະນາຢ່າງສົມເຫດສົມຜົນ, ການຄາດຄະເນ ແລະ ການສົມມຸດຕິຖານວ່າບັນດາຕົວເລກທີ່ຖືກລາຍງານນັ້ນມີຜົນກະທົບຕໍ່ລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ, ແລະ ການເປີດເຜີຍ, ເຊັ່ນດຽວກັນກັບການເປີດເຜີຍບັນດາໜີ້ສິນທີ່ອາດຈະເກີດຂຶ້ນເນື່ອງຈາກຄວາມບໍ່ແນ່ນອນຂອງການສົມມຸດຕິຖານ ແລະ ການຄາດຄະເນອາດຈະເຮັດໃຫ້ມີການດັດແກ້ບັນດາຍອດຍົກມາຂອງຊັບສິນ ແລະ ໜີ້ສິນ ເຊິ່ງອາດຈະກະທົບຕໍ່ຕົວເລກໃນອະນາຄົດ.

ບັນດາສົມມຸດຖານທີ່ສຳຄັນກ່ຽວກັບອານາຄົດ ແລະ ແຫຼ່ງຂໍ້ມູນອື່ນໆທີ່ສຳຄັນ ທີ່ມີຄວາມບໍ່ແນ່ນອນ ນະວັນທີຂອງເອກະສານລາຍລາຍງານການເງິນ ເຊິ່ງຖືວ່າມີຄວາມສ່ຽງທີ່ສຳຄັນທີ່ຈະກໍ່ໃຫ້ເກີດການດັດແກ້ມູນຄ່າທີ່ຍັງເຫຼືອຕາມບັນຊີຂອງຊັບສິນ ແລະ ໜີ້ສິນ ພາຍໃນໄລຍະການບັນຊີຕໍ່ໄປ ແມ່ນມີດັ່ງນີ້. ທະນາຄານໄດ້ອີງໃສ່ສົມມຸດຖານ ແລະ ການຄາດຄະເນ ທີ່ສາມາດຊອກຫາໄດ້ ນະເວລາທີ່ກະກຽມເອກະສານລາຍງານການເງິນ. ເຖິງຢ່າງໃດກໍ່ຕາມ, ບັນດາຂໍ້ສົມມຸດຖານ ແລະ ການຄາດຄະເນທີ່ຈະສົ່ງຜົນໃຫ້ມີການປ່ຽນແປງໃນອະນາຄົດເຫຼົ່ານີ້ ອາດຈະມີການປ່ຽນແປງ ເນື່ອງຈາກການປ່ຽນແປງຂອງຕະຫລາດ ແລະ ສະຖານະການໃດໜຶ່ງທີ່ຢູ່ເໜືອການຄວບຄຸມຂອງທະນາຄານ, ເຊິ່ງບັນດາການປ່ຽນແປງເຫຼົ່ານີ້ ໄດ້ສະແດງໃນຂໍ້ສົມມຸດຖານ ເມື່ອເກີດຂຶ້ນຈິງ.

(i) ຄວາມສືບເນື່ອງໃນການດຳເນີນທຸລະກິດ

ຄະນະອຳນວຍການຂອງທະນາຄານ ໄດ້ປະເມີນຄວາມອາດສາມາດຂອງທະນາຄານເພື່ອສືບຕໍ່ໃນການດຳເນີນທຸລະກິດ ແລະ ມີຄວາມເພິ່ງພໍໃຈວ່າທະນາຄານມີແຫລ່ງຊັບພະຍາກອນທີ່ຈະສືບຕໍ່ໃນການດຳເນີນທຸລະກິດໃນອະນາຄົດທີ່ຄາດຄະເນໄດ້. ນອກຈາກນີ້, ຄະນະອຳນວຍການຍັງບໍ່ຮັບຮູ້ເຖິງຄວາມເປັນໄປໄດ້ທີ່ອາດຈະສົ່ງຜົນກະທົບທີ່ສຳຄັນ ຕໍ່ຄວາມສາມາດໃນການດຳເນີນທຸລະກິດຢ່າງຕໍ່ເນື່ອງ. ດັ່ງນັ້ນ, ເອກະສານລາຍງານການເງິນລວມກິດຈະການຍັງສືບຕໍ່ຖືກກະກຽມບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ.

(ii) ການເຊື່ອມຄ່າຂອງເງິນກູ້ ແລະ ເງິນລ່ວງໜ້າ

ທະນາຄານໄດ້ທົບທວນຄືນ ບັນດາເງິນກູ້ ແລະ ເງິນລ່ວງໜ້າທີ່ປ່ອຍໃຫ້ລູກຄ້າສຳລັບບັນດາລາຍການທີ່ມີມູນຄ່າສູງເປັນລາຍບຸກຄົນ ນະວັນທີຂອງເອກະສານລາຍງານການເງິນເພື່ອປະເມີນວ່າສົມຄວນຖືກບັນທຶກມູນຄ່າເຊື່ອມລົງໃນໃບລາຍງານຜົນໄດ້ຮັບລວມກິດຈະການ ສຳລັບໄລຍະ ຫົກເດືອນຕົ້ນປີ ຫຼື ບໍ່. ໂດຍສະເພາະແລ້ວຜູ້ອຳນວຍການຕ້ອງໄດ້ພິຈາລະນາຄາດຄະເນຈຳນວນ ແລະ ໄລຍະເວລາຂອງກະແສເງິນສົດໃນອະນາຄົດເມື່ອກຳນົດມູນຄ່າເຊື່ອມ. ໃນການປະເມີນກະແສເງິນສົດ ທະນາຄານໄດ້ພິຈາລະນາອີງໃສ່ຂໍ້ສົມມຸດຖານຂອງບັນດາເງື່ອນໄຂ ແລະ ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງ ເຊິ່ງຈະເປັນຜົນໃຫ້ມີການປ່ຽນແປງຄ່າເຊື່ອມໃນອະນາຄົດ. ບັນດາລາຍການເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າລາຍບຸກຄົນທີ່ຖືກປະເມີນແລ້ວ ເຫັນວ່າບໍ່ມີການເຊື່ອມຄ່າ ຈະຖືກຈັດເຂົ້າກັບບັນດາເງິນກູ້ ແລະ ເງິນລ່ວງໜ້າລາຍການອື່ນໆທີ່ເປັນລາຍການຍ່ອຍ ອີງຕາມປະເພດຂອງກຸ່ມຊັບສິນທີ່ມີຄວາມສ່ຽງ.

2. ນະໂຍບາຍການບັນຊີ (ຕໍ່)

2.5 ການພິຈາລະນາການບັນຊີທີ່ສຳຄັນ, ການຄາດຄະເນ ແລະ ຂໍ້ສົມມຸດຖານ (ຕໍ່)

(ii) ການເຊື່ອມຄ່າຂອງເງິນກູ້ ແລະ ເງິນລ່ວງໜ້າ (ຕໍ່)

ໃນລັກສະນະຄ້າຍຄືກັນ ເພື່ອປະເມີນຄ່າເຊື່ອມແບບເປັນກຸ່ມ, ເພື່ອກຳນົດວ່າສົມຄວນສ້າງເງິນແຮ ຫຼື ບໍ່ ເພື່ອກໍລະນີເກີດການຂາດທຶນ ເຖິງແມ່ນວ່າບັນດາຫຼັກຖານຢັ້ງຢືນຂອງການເຊື່ອມຄ່າຍັງບໍ່ທັນຈະແຈ້ງກໍ່ຕາມ.

(iii) ການເຊື່ອມມູນຄ່າຂອງການລົງທຶນທາງການເງິນມີໄວ້ເພື່ອຂາຍ

ທະນາຄານຍັງໄດ້ບັນທຶກຄ່າເຊື່ອມມູນຄ່າຂອງການລົງທຶນທີ່ມີໄວ້ເພື່ອຂາຍ ເມື່ອເກີດການຫຼຸດລົງທີ່ສຳຄັນ ຫຼື ການຫຼຸດລົງ ໃນມູນຄ່າຍຸດຕິທຳທີ່ຕ່ຳກວ່າຕົ້ນທຶນເປັນເວລາດົນ. ຂໍ້ກຳນົດທີ່ກຳນົດວ່າ “ສຳຄັນ” ຫຼື “ຍາວນານ” ຕ້ອງຖືກພິຈາລະນາ. ໃນການພິຈາລະນາດັ່ງກ່າວນີ້ ທະນາຄານໄດ້ປະເມີນລະຫວ່າງຫຼາຍປັດໃຈ ແລະ ການເໜັງຕີງຂອງລາຄາຮຸ້ນທີ່ຜ່ານມາ ແລະ ໄລຍະເວລາ ແລະ ກຳນົດຂອບເຂດຂອງມູນຄ່າຍຸດຕິທຳທີ່ຕ່ຳກວ່າຕົ້ນທຶນ.

2.6 ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ

2.6.1 *ລາຍການທີ່ເປັນເງິນຕາຕ່າງປະເທດ*

ລາຍການທີ່ເປັນເງິນຕາຕ່າງປະເທດໂດຍພື້ນຖານແມ່ນຖືກບັນທຶກໂດຍການນຳໃຊ້ອັດຕາແລກປ່ຽນທັນທີໃນມື້ທີ່ລາຍການດັ່ງກ່າວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນ ທາງການເງິນໄດ້ຄິດໄລ່ເປັນສະກຸນເງິນຕາຕ່າງປະເທດໃນທ້າຍປີ ແລະ ແລກປ່ຽນເປັນເງິນກີບດ້ວຍອັດຕາແລກປ່ຽນທັນທີໃນມື້ເຮັດ ເອກະສານລາຍງານ (ເບິ່ງລາຍການອັດຕາແລກປ່ຽນຂອງເງິນຕາຕ່າງປະເທດຕໍ່ເງິນກີບໃນ 30 ມິຖຸນາ 2015 ແລະ ວັນທີ 31 ທັນວາ 2014 ໃນບົດອະທິບາຍຊ້ອນທ້າຍເລກທີ 41). ສ່ວນຜິດຜ່ຽງຈາກອັດຕາແລກປ່ຽນທີ່ເກີດຈາກບັນດາຊັບສິນ ແລະ ໜີ້ສິນທີ່ຢູ່ໃນເອກະສານລາຍງານການເງິນລວມກິດຈະການແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບລວມກິດຈະການ.

2.6.2 *ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ*

2.6.2.1 *ວັນທີຂອງການຮັບຮູ້*

ຊັບສິນ ແລະ ໜີ້ສິນການເງິນທັງໝົດ ທີ່ຖືກຮັບຮູ້ໃນເບື້ອງຕົ້ນໃນມື້ທີ່ຖືກຊື້ຂາຍເຊັ່ນ: ມື້ທີ່ທະນາຄານກາຍເປັນພາກສ່ວນໜຶ່ງຂອງການໃຫ້ຄຳໝັ້ນສັນຍາຂອງເຄື່ອງມື. ນີ້ລວມທັງ "ວິທີການຄ້າປົກກະຕິ", ການຊື້ ຫລື ການຂາຍຂອງ ຊັບສິນທາງການເງິນ ທີ່ຮຽກຮ້ອງໃຫ້ມີການນຳສົ່ງໃຫ້ທັນເວລາ ຫລື ຕາມສັນຍາໃນທ້ອງຕະຫລາດ.

2.6.2.2 *ການຕີມູນຄ່າເບື້ອງຕົ້ນຂອງເຄື່ອງມືທາງການເງິນ*

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ເບື້ອງຕົ້ນແມ່ນຂຶ້ນກັບຈຸດປະສົງ ແລະ ຄວາມຕັ້ງໃຈຂອງຜູ້ບໍລິຫານຕໍ່ເຄື່ອງມືທາງການເງິນທີ່ຕ້ອງການ ແລະ ຕາມລັກສະນະເດັ່ນຂອງເຄື່ອງມືເຫລົ່ານັ້ນ. ເຄື່ອງມືທາງການເງິນທັງໝົດແມ່ນຖືກຕີມູນຄ່າຍຸດຕິທຳເບື້ອງຕົ້ນ, ຍົກເວັ້ນໃນກໍລະນີຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ຖືກບັນທຶກຕາມມູນຄ່າຍຸດຕິທຳໂດຍຜ່ານກຳໄລ ແລະ ຂາດທຶນ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ (ຕໍ່)

***2.6.2** ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ* (ຕໍ່)

***2.6.2.3** ຊັບສິນທາງການເງິນ ຫລື ໜີ້ສິນທາງການເງິນທີ່ມີໄວ້ເພື່ອການຄ້າ*

ຊັບສິນທາງການເງິນ ຫລື ໜີ້ສິນທາງການເງິນທີ່ມີໄວ້ເພື່ອການຄ້າ ແມ່ນຖືກບັນທຶກໃນໃບລາຍງານຖານະການເງິນສັງລວມ ກິດຈະການ ຕາມມູນຄ່າຍຸດຕິທຳ. ການປ່ຽນແປງຂອງມູນຄ່າຍຸດຕິທຳແມ່ນຖືກບັນທຶກເປັນ "ກຳໄລ/(ຂາດທຶນ) ສຸດທິໃນ ຫລັກຊັບ ແລະ ການຊື້-ຂາຍເງິນຕາຕ່າງປະເທດ". ລາຍຮັບດອກເບ້ຍ ແລະ ເງິນປັນຜົນ ແມ່ນຖືກບັນທຶກເປັນ "ກຳໄລ/ (ຂາດທຶນ) ສຸດທິ ຈາກຫລັກຊັບ ແລະ ການຊື້ - ຂາຍເງິນຕາຕ່າງປະເທດ". ອີງຕາມ ກຳນົດເວລາຂອງສັນຍາ ຫລື ເມື່ອສິດໃນ ການຈ່າຍໄດ້ເກີດຂຶ້ນ.

ເຊິ່ງລວມຢູ່ໃນປະເພດນີ້ແມ່ນມີຫລັກຊັບລົງທຶນ ທີ່ມີຈຸດປະສົງເພື່ອຊື້ - ຂາຍໃນໄລຍະສັ້ນ.

***2.6.2.4** ມື້ທີ 1 ກຳໄລ ຫລື ຂາດທຶນ*

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸດຕິທຳຂອງລາຄາຕາມທ້ອງຕະຫລາດໃນປັດຈຸບັນຂອງເຄື່ອງມື ການເງິນອັນດຽວກັນ ຫລື ອີງຕາມມູນຄ່າທີ່ໄດ້ສຳຫລວດໃນຕະຫລາດ, ທະນາຄານຮັບຮູ້ສ່ວນຜິດຕ່າງລະຫວ່າງລາຄາໃນມື້ທີ່ ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸດຕິທຳ ("ມື້ທີ 1 "ກຳໄລ ຫລື ຂາດທຶນ) ໃນ "ລາຍຮັບສຸດທິຈາກການຄ້າ". ໃນກໍລະນີ ທີ່ມູນຄ່າຍຸດຕິທຳຖືກກຳນົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສຳຫລວດ, ສ່ວນຜິດຕ່າງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດ ຂຶ້ນ ແລະ ມູນຄ່າທີ່ໄດ້ຈາກນຳໃຊ້ເຕັກນິກການຕີມູນຄ່າດັ່ງກ່າວ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ ກໍ່ຕໍ່ເມື່ອ ຂໍ້ມູນທີ່ ນຳໃຊ້ສາມາດສັງເກດເຫັນໄດ້ຈະແຈ້ງ ຫຼື ເມື່ອເຄື່ອງມືທາງການເງິນຖືກສະສາງອອກຈາກບັນຊີ.

***2.6.2.5** ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ*

ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ ປະກອບມີ ຫຼັກຊັບທຶນ ແລະ ຫຼັກຊັບໜີ້. ຫຼັກຊັບທຶນຈະຖືກຈັດປະເພດເປັນ ຫຼັກຊັບປະເພດມີໄວ້ເພື່ອຂາຍ ຖ້າໃນກໍລະນີທີ່ຫຼັກຊັບດັ່ງກ່າວ ບໍ່ໄດ້ຖືກຈັດເປັນປະເພດຫຼັກຊັບມີໄວ້ເພື່ອການຄ້າ ຫລື ຫຼັກຊັບ ທີ່ບັນທຶກມູນຄ່າຍຸດຕິທຳ ໂດຍຜ່ານ ກຳໄລ ແລະ ຂາດທຶນໂດຍກົງ. ຫຼັກຊັບໜີ້ແມ່ນຫຼັກຊັບທີ່ມີຄວາມຕັ້ງໃຈຖືໄວ້ໃນໄລຍະ ເວລາທີ່ແນ່ນອນ ແລະ ອາດຈະຖືກຂາຍອອກໄປເພື່ອເຮັດໃຫ້ມີສະພາບຄ່ອງ ຫລື ເພື່ອຕອບສະໜອງກັບການປ່ຽນແປງຂອງ ເງື່ອນໄຂໃນຕະຫຼາດ.

ທະນາຄານຍັງບໍ່ທັນໄດ້ມີການຮັບຮູ້ບັນດາເງິນກູ້ ຫລື ໜີ້ຕ້ອງຮັບເປັນການລົງທຶນມີໄວ້ເພື່ອຂາຍ.

ຫລັງຈາກການຕີມູນຄ່າໃນເບື້ອງຕົ້ນ, ການລົງທຶນທາງການເງິນມີໄວ້ເພື່ອຂາຍ ແມ່ນຈະຖືກຕີມູນຄ່າພາຍຫຼັງຕາມມູນຄ່າຍຸດຕິ ທຳ.

ກຳໄລ ຫລື ຂາດທຶນບໍ່ທຳມະດາ ແມ່ນຖືກຮັບຮູ້ໂດຍກົງໃນປະເພດທຶນ (ໃນໃບລາຍງານຜົນໄດ້ຮັບນອກການທຸລະກິດ) ເປັນ "ເງິນແຮຄ່າເຊື່ອມສຳລັບຫລັກຊັບມີໄວ້ເພື່ອຂາຍ". ເມື່ອການລົງທຶນດັ່ງກ່າວໝົດກຳນົດ, ກຳໄລ ຫລື ຂາດທຶນສະສົມກ່ອນໜ້າ ນີ້ ຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບລວມກິດຈະການ ວ່າແມ່ນ " ລາຍຮັບອື່ນໆຈາກການດຳເນີນງານ " ເມື່ອທະນາຄານ ລົງທຶນຫລາຍກວ່າໜຶ່ງລາຍການໂດຍນຳໃຊ້ຫລັກຊັບຄ້ຳປະກັນດຽວກັນ, ມັນຈະຖືກສະສາງອອກຕາມຫລັກການເຂົ້າກ່ອນ-ອອກກ່ອນ. ເງິນປັນຜົນທີ່ຫາມາໄດ້ໃນຊ່ວງໄລຍະການຖືຊັບສິນການເງິນມີໄວ້ເພື່ອຂາຍ ຖືກຮັບຮູ້ໃນໃບລາຍງານຜົນໄດ້ ຮັບສລວມກິດຈະການ ວ່າເປັນ "ລາຍຮັບອື່ນໆຈາກການດຳເນີນງານອື່ນໆ " ເມື່ອສິດຂອງການໄດ້ຮັບເງິນປັນຜົນຂອງ ທະນາຄານ ຖືກສ້າງຂຶ້ນ. ເມື່ອການຂາດທຶນເພີ່ມຂຶ້ນເນື່ອງຈາກການເຊື່ອມມູນຄ່າຂອງການລົງທຶນດັ່ງກ່າວນັ້ນ ຈະຖືກຮັບຮູ້ໃນ ໃບລາຍງານຜົນໄດ້ຮັບລວມກິດຈະການ ວ່າເປັນ " ການຫັກຄ່າເຊື່ອມຂອງການລົງທຶນທາງການເງິນ " ໂດຍປ່ຽນຈາກ "ເງິນ ແຮສຳລັບຫລັກຊັບມີໄວ້ເພື່ອຂາຍ".

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ (ຕໍ່)

2.6.2 *ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ* (ຕໍ່)

2.6.2.6 *ການລົງທຶນທີ່ຖືໄວ້ຈົນຄົບກຳນົດ*

ການລົງທຶນທີ່ຖືໄວ້ຈົນຄົບກຳນົດແມ່ນຊັບສິນທາງການເງິນທີ່ບໍ່ແມ່ນອະນຸພັນທາງການເງິນ ເຊິ່ງມີການກຳນົດໄວ້ຢ່າງຈະແຈ້ງ ຫຼື ສາມາດກຳນົດໄດ້ໄລຍະເວລາໃນການຊຳລະ ແລະ ໄດ້ກຳນົດວັນຄົບກຳນົດໄວ້ແລ້ວ, ເຊິ່ງທະນາຄານມີຄວາມຕັ້ງໃຈ ແລະ ສາມາດຖືໄວ້ຈົນຄົບກຳນົດ. ພາຍຫລັງການຮັບຮູ້ມູນຄ່າເບື້ອງຕົ້ນ, ການລົງທຶນປະເພດຖືໄວ້ຈົນຄົບກຳນົດຈະຖືກບັນທຶກອີງຕາມລາຄາທຶນຕັດຈຳໜ່າຍ ໂດຍການນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ (“EIR”). ການລົງທຶນປະເພດຖືໄວ້ຈົນຄົບກຳນົດ ຈະຖືກປະເມີນຄ່າເຊື່ອມເປັນແຕ່ລະໄລຍະ. ຈະມີການຫັກຄ່າເຊື່ອມຂອງຫລັກຊັບປະເພດນີ້ ຖ້າຫາກມູນຄ່າຍຸດຕິທຳມີການຫຼຸດລົງຫຼາຍ ຫຼື ຫຼຸດລົງຕ່ຳກວ່າຕົ້ນທຶນຊື້ ເປັນໄລຍະຍາວນານ.ຄ່າເຊື່ອມທີ່ເກີດຈາກຫລັກຊັບແບບນີ້ຈະຖືກບັນທຶກໃນໃບລາຍງານຜົນໄດ້ຮັບສະເພາະການກິດຈະການ ໃນພາກສ່ວນຂອງ “ລາຍຈ່າຍທີ່ຫັກເປັນຄ່າເຊື່ອມ”.

ຖ້າທະນາຄານຕ້ອງການຂາຍ ຫລື ຈັດປະເພດການລົງທຶນທີ່ຖືໄວ້ຈົນຄົບກຳນົດໃໝ່ກ່ອນມື້ຄົບກຳນົດ (ນອກເໜືອຈາກມີເຫດການໃດໜຶ່ງສະເພາະ), ລາຍການຄ້າງຫລັກຊັບທີ່ຖືກຈັດເປັນປະເພດ ຖືໄວ້ຈົນຄົບກຳນົດທັງໝົດຈະຖືກປ່ຽນແປງ ແລະ ຈະຕ້ອງຖືກຈັດປະເພດຄືນໃໝ່ເປັນ ຫລັກຊັບມີໄວ້ເພື່ອຂາຍ. ນອກຈາກນີ້, ທະນາຄານຈະຖືກຫ້າມບໍ່ໃຫ້ຈັດປະເພດຊັບສິນການເງິນໃດໆໃຫ້ເປັນຊັບສິນການເງິນທີ່ຖືໄວ້ຈົນຄົບພາຍໃນ 2 ປີ.

2.6.2.7 *ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ*

“ໜີ້ຕ້ອງຮັບຈາກທະນາຄານອື່ນ” ແລະ “ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ”, ລວມມີ ຊັບສິນການເງິນທີ່ບໍ່ແມ່ນອານຸພັນທີ່ມີກຳນົດ ຫລື ການຊຳລະທີ່ສາມາດກຳນົດໄດ້ເຊິ່ງບໍ່ໄດ້ກຳນົດລາຄາຢູ່ໃນຕະຫຼາດ, ຍົກເວັ້ນ:

- ທະນາຄານມີຄວາມຕັ້ງໃຈທີ່ຈະຂາຍທັນທີ ຫລື ທະນາຄານສາມາດຂາຍໄດ້ໃນເວລາທີ່ສັ້ນ, ບົນພື້ນຖານການຮັບຮູ້ເບື້ອງຕົ້ນ, ກຳນົດຕາມມູນຄ່າຍຸດຕິທຳຜ່ານກຳໄລ ຫລື ຂາດທຶນ;
- ສິ່ງເຫຼົ່ານັ້ນທະນາຄານໄດ້ຮັບຮູ້ມູນຄ່າເບື້ອງຕົ້ນ ແລະ ກຳນົດເປັນປະເພດມີໄວ້ເພື່ອຂາຍ;
- ສິ່ງເຫຼົ່ານັ້ນທະນາຄານອາດຈະບໍ່ໄດ້ກຳໄລຈາກການລົງທຶນທັງໝົດ, ເນື່ອງຈາກການເຊື່ອມຄ່າຂອງສິນເຊື່ອ

ຫຼັງຈາກການປະເມີນເບື້ອງຕົ້ນ, ຕໍ່ມາ ມູນຄ່າ “ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ” ແລະ “ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ” ຈະຖືກປະເມີນຕາມລາຄາທຶນຕັດຈຳໜ່າຍ ໂດຍໃຊ້ອັດຕາດອກເບ້ຍທີ່ແທ້ຈິງ ລົບໃຫ້ ເງິນແຮສຳລັບຄ່າເຊື່ອມມູນຄ່າ. ລາຄາທຶນຕັດຈຳໜ່າຍ ຈະຖືກຄິດໄລ່ໂດຍລວມເອົາບັນດາສ່ວນຫຼຸດ ຫຼື ຄ່າທຳນຽມທີ່ນຳໃຊ້ເພື່ອເຂົ້າຄອບຄອງ ແລະ ຄ່າບໍລິການ ແລະ ຕົ້ນທຶນທີ່ເປັນສ່ວນປະກອບຂອງອັດຕາດອກເບ້ຍທີ່ແທ້ຈິງ. ຄ່າເຊື່ອມຈະຖືກລວມຢູ່ໃນ “ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ” ໃນໃບລາຍງານຜົນໄດ້ຮັບລວມກິດຈະການ. ການຂາດທຶນຈາກການເຊື່ອມຄ່າຈະຖືກຮັບຮູ້ເປັນ “ລາຍຈ່າຍທີ່ຫັກເປັນເງິນແຮສຳລັບການສູນເສຍເງິນກູ້” ໃນໃບລາຍງານຜົນໄດ້ຮັບລວມກິດຈະການ.

ທະນາຄານອາດຈະອອກຂໍ້ຜູກພັນໃຫ້ແກ່ເງິນກູ້ທີ່ແນ່ນອນ ເມື່ອເງິນກູ້ຖືກຖອນ ແລະ ເງິນກູ້ດັ່ງກ່າວນັ້ນຈະຖືກຈັດປະເພດເປັນການເຄື່ອນໄຫວທີ່ມີໄວ້ເພື່ອຄ້າຂາຍ ເພາະວ່າຈຸດປະສົງແມ່ນຂາຍເງິນກູ້ໄລຍະສັ້ນ. ຂໍ້ຜູກພັນເຫລົ່ານີ້ຈະຖືກບັນທຶກເປັນອານຸພັນ ແລະ ຖືກປະເມີນມູນຄ່າຍຸດຕິທຳຜ່ານກຳໄລ ຫລື ຂາດທຶນ. ເມື່ອເງິນກູ້ຖືກຖອນເງິນກູ້ນັ້ນຄາດວ່າຈະຖືກຮັກສາໂດຍທະນາຄານ ແລະ ຈະບໍ່ຂາຍໃນໄລຍະສັ້ນ ຂໍ້ຜູກພັນຈະຖືກບັນທຶກເມື່ອສັນຍາໄດ້ຖືກເຮັດຂຶ້ນ ແລະ ມີແນວໂນ້ມບົ່ງບອກວ່າການຂາດທຶນຈະເພີ່ມຂຶ້ນ (ຕົວຢ່າງ: ໜີ້ຕ້ອງສົ່ງສິນເຊື່ອໃຫ້ຄູ່ສັນຍາ).

2. ນະໂຍບາຍການບັນຊີ (ຕໍ່)

2.6 *ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ* (ຕໍ່)

2.6.2 *ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ* (ຕໍ່)

2.6.2.8 *ການອອກຫຼັກຊັບໜີ້ ແລະ ເງິນກູ້ຢືມອື່ນໆ*

ເຄື່ອງມືທາງການເງິນທີ່ອອກໂດຍທະນາຄານ ທີ່ບໍ່ໄດ້ກຳນົດມູນຄ່າຍຸດຕິທຳ ຜ່ານກຳໄລ ຫລື ຂາດທຶນ ຈະຖືກຈັດປະເພດເປັນ ໜີ້ສິນ ພາຍໃຕ້ "ຫຼັກຊັບໜີ້ ແລະ ເງິນກູ້ຢືມອື່ນໆ", ເມື່ອຂໍ້ຕົກລົງ ຫລື ສັນຍາໄດ້ຖືກເຮັດຂຶ້ນ ແລະ ເຮັດໃຫ້ທະນາຄານມີ ພັນທະທີ່ຕ້ອງຈ່າຍເງິນສົດ ຫລື ຊັບສິນການເງິນອື່ນໆໃຫ້ແກ່ເຈົ້າຂອງສັນຍາ ຫລື ເຮັດໃຫ້ພັນທະດັ່ງກ່າວ ສາມາດສ້າງຜົນ ປະໂຫຍດອື່ນນອກຈາກການປ່ຽນເປັນຊັບສິນ ຫລື ເງິນສົດ ຫລື ຊັບສິນການເງິນອື່ນໆເປັນຊັບສິນຂອງຮຸ້ນທຶນ.

ຫລັງຈາກມີການປະເມີນເບື້ອງຕົ້ນ, ຫຼັກຊັບໜີ້ ແລະ ເງິນກູ້ຢືມອື່ນໆກໍ່ຈະຖືກປະເມີນຕີມູນຄ່າຕາມລາຄາທຶນຕັດຈຳໜ່າຍໃນ ໄລຍະຕໍ່ມາ ໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ ("EIR"). ລາຄາທຶນຕັດຈຳໜ່າຍຈະຖືກຄິດໄລ່ໂດຍອີງຕາມສ່ວນຫລຸດ ແລະ ຄ່າທຳນຽມທີ່ກ່ຽວພັນກັບການອອກຫຼັກຊັບ ແລະ ຕົ້ນທຶນທີ່ເປັນສ່ວນໜຶ່ງຂອງການຄິດໄລ່ EIR.

ເຄື່ອງມືທາງການເງິນແບບປະສົມປະສານ ເຊັ່ງມີທັງໜີ້ສິນ ແລະ ທຶນເປັນສ່ວນປະກອບ ແມ່ນຖືກແຍກໃນມື້ອອກເຄື່ອງມື. ສ່ວນແບ່ງທີ່ໄດ້ຈາກການຂາຍເຄື່ອງມືຈະຖືກແບ່ງໄປເປັນສ່ວນປະກອບຂອງໜີ້ໃນມື້ອອກເຄື່ອງມື ຕາມມູນຄ່າຍຸດຕິທຳ (ເຊັ່ງ ຈະກຳນົດຕາມລາຄາຕະຫລາດທີ່ມີຢູ່ສຳລັບເຄື່ອງມືໜີ້ທີ່ຄ້າຍຄືກັນ). ສຳລັບສ່ວນທີ່ເປັນທຶນແມ່ນຖືກແບ່ງສ່ວນທີ່ເຫລືອ ຫລັງ ຈາກຫັກມູນຄ່າຍຸດຕິທຳຂອງເຄື່ອງມື ໃນຈຳນວນທັງໝົດທີ່ແຍກຈາກສ່ວນປະກອບທີ່ເປັນໜີ້. ມູນຄ່າຂອງຊັບສິນທີ່ເປັນອານຸ ພັນ ທີ່ໄດ້ມາທັງໝົດ (ເຊັ່ນ: Call option) ທີ່ຢູ່ໃນເຄື່ອງມືການເງິນທີ່ກ່ຽວຂ້ອງ (ນອກເໜືອຈາກສ່ວນປະກອບຂອງທຶນ) ແມ່ນຈະຖືກລວມຢູ່ໃນສ່ວນປະກອບຂອງໜີ້.

2.6.2.9 *ການຈັດປະເພດຊັບສິນການເງິນຄືນໃໝ່*

ເລີ່ມຈາກວັນທີ 1 ກໍລະກົດ 2008, ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ສຳລັບບັນດາຊັບສິນທາງການເງິນ (ອີງໃສ່ສະຖານະການທີ່ແນ່ນອນໃດໜຶ່ງ) ເຊັ່ງສາມາດຈັດຈາກ "ຫລັກຊັບປະເພດມີໄວ້ເພື່ອການຄ້າ" ໄປເປັນ: "ຫລັກຊັບ ປະເພດ ມີໄວ້ເພື່ອຂາຍ", "ຫລັກຊັບປະເພດເງິນກູ້ ແລະ ໜີ້ຕ້ອງຮັບ", ຫລື "ຫລັກຊັບປະເພດຖືໄວ້ຈົນຄົບກຳນົດ". ນັບຈາກ ວັນທີ ດັ່ງກ່າວ, ທະນາຄານຍັງໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ບັນດາ ເຄື່ອງມືທາງການເງິນ (ອີງໃສ່ສະຖານະການທີ່ ແນ່ນອນໃດໜຶ່ງ) ທີ່ເປັນປະເພດ "ຫລັກຊັບມີໄວ້ເພື່ອຂາຍ" ໄປເປັນ "ຫລັກຊັບປະເພດເງິນກູ້ ແລະ ໜີ້ຕ້ອງຮັບ". ການຈັດ ປະເພດຄືນໃໝ່ມູນຄ່າຈາກການຈັດປະເພດຄືນໃໝ່ຈະຖືກບັນທຶກອີງຕາມມູນຄ່າຍຸດຕິທຳໃນມື້ທີ່ຈັດປະເພດຄືນໃໝ່, ເຊັ່ງມູນ ຄ່າດັ່ງກ່າວນັ້ນຈະກາຍເປັນມູນຄ່າຕົ້ນທຶນໃໝ່.

ສຳລັບຊັບສິນການເງິນທີ່ຖືກຈັດເປັນປະເພດ "ຫລັກຊັບມີໄວ້ເພື່ອຂາຍ", ທຸກໆກຳໄລ ແລະ ຂາດທຶນທີ່ຜ່ານມາຂອງຊັບສິນ ດັ່ງກ່າວ ແມ່ນຖືກບັນທຶກລົງໃນທຶນຕົນເອງ ເປັນຄ່າເຊື່ອມ ເຂົ້າໃນໃບລາຍງານຜົນໄດ້ຮັບຕາມຈຳນວນອາຍຸທີ່ຍັງເຫຼືອຂອງ ຫລັກຊັບດັ່ງກ່າວ ໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ (EIR). ທຸກໆສ່ວນຜິດຕ່ຽງລະຫວ່າງລາຄາທຶນຕັດຈຳໜ່າຍໃໝ່ ແລະ ກະແສເງິນສົດຄາດຄະເນ ແມ່ນຈະຖືກບັນທຶກບັນຊີ ອີງຕາມອາຍຸການຂອງລາຍການຊັບສິນດັ່ງກ່າວທີ່ຍັງເຫລືອ ໂດຍນຳໃຊ້ ອັດຕາດອກເບ້ຍທີ່ແທ້ຈິງ (EIR). ຖ້າຕໍ່ມາຊັບສິນມີການເຊື່ອມຄ່າ ທີ່ລົງບັນຊີເປັນທຶນຕົນເອງນັ້ນແມ່ນຈະຖືກນຳມາເຂົ້າໃໝ່ ໃນໃບລາຍງານຜົນໄດ້ຮັບລວມກິດຈະການ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ (ຕໍ່)

2.6.2 *ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ* (ຕໍ່)

2.6.2.9 *ການຈັດປະເພດຊັບສິນການເງິນຄືນໃໝ່* (ຕໍ່)

ທະນາຄານອາດຈະຈັດປະເພດຊັບສິນການຄ້າທີ່ບໍ່ແມ່ນອານຸພັນ ອອກຈາກ " ຊັບສິນທີ່ມີໄວ້ເພື່ອການຄ້າ " ແລະ ຈັດເຂົ້າໃນ " ເງິນກູ້ ແລະ ໜີ້ຕ້ອງຮັບ " ຖ້າການເຄື່ອນໄຫວຂອງມັນສອດຄ່ອງກັບຄວາມໝາຍຂອງເງິນກູ້ ແລະ ໜີ້ຕ້ອງຮັບ ແລະ ທະນາຄານມີຄວາມຕັ້ງໃຈ ແລະ ຄວາມສາມາດທີ່ຈະຖືໄວ້ຕໍ່ໄປ ຫລື ຈົນຄົບກຳນົດ. ຖ້າຫາກຊັບສິນຖືກຈັດປະເພດຄືນໃໝ່ ແລະ ຖ້າທະນາຄານສືບຕໍ່ເພີ່ມການຄາດຄະເນເງິນສົດທີ່ຈະໄດ້ຮັບໃນອະນາຄົດວ່າເປັນຜົນມາຈາກການເພີ່ມຂຶ້ນຂອງຄວາມສາມາດທີ່ຈະໄດ້ຮັບຈາກເງິນສົດດັ່ງກ່າວ, ຜົນກະທົບຂອງການເພີ່ມຂຶ້ນນັ້ນແມ່ນຖືກຮັບຮູ້ເປັນການດັດແກ້ອັດຕາດອກເບ້ຍທີ່ແທ້ຈິງຈາກມື້ທີ່ການຄາດຄະເນມີການປ່ຽນ.

ການຈັດປະເພດຄືນໃໝ່ແມ່ນການເລືອກໂດຍຄະນະອຳນວຍການ ແລະ ຖືກກຳນົດເຄື່ອງມືໂດຍພື້ນຖານເຄື່ອງມື. ທະນາຄານ ບໍ່ໄດ້ຈັດປະເພດຄືນໃໝ່ຕາມມູນຄ່ายุดติທຳໂດຍຜ່ານກຳໄລ ແລະ ຂາດທຶນຫລັງຈາກການຮັບຮູ້ເບື້ອງຕົ້ນ.

2.6.3 *ການສະສາງຊັບສິນ ແລະ ໜີ້ສິນທາງການເງິນ*

2.6.3.1 *ຊັບສິນທາງການເງິນ*

ຊັບສິນທາງການເງິນ (ຫລື ສ່ວນໜຶ່ງຂອງຊັບສິນການເງິນ ຫລື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກສະສາງອອກຈາກຊັບສິນກໍ່ຕໍ່ເມື່ອ:

- ສິດໃນການຮັບກະແສເງິນສົດຈາກຊັບສິນໄດ້ໝົດກຳນົດແລ້ວ;
- ທະນາຄານໄດ້ໂອນກຳມະສິດໃນການຮັບກະແສເງິນສົດຈາກຊັບສິນ ຫລື ໄດ້ຍອມຮັບພັນທະໃນການຈ່າຍເງິນສົດທີ່ໄດ້ຮັບທັງໝົດຕາມກຳນົດເວລາໃຫ້ແກ່ບຸກຄົນທີສາມພາຍໃຕ້ຮູບແບບ "ການຕິດພັນ" ແລະ ລວມທັງ:
  - ທະນາຄານໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນຂອງຊັບສິນທັງໝົດ,
  - ຫຼືບໍ່ໄດ້ໂອນຮັກສາຄວາມສ່ຽງ ແລະ ຜົນຕອບແທນຂອງຊັບສິນທັງໝົດ, ແຕ່ໄດ້ໂອນການຄຸ້ມຄອງຊັບສິນ

ເມື່ອທະນາຄານໄດ້ໂອນສິດໃນການໄດ້ຮັບເງິນສົດຈາກຊັບສິນ ຫລື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ ແລະ ບໍ່ໄດ້ໂອນ ຫລື ຍັງຄົງຮັກສາຄວາມສ່ຽງທັງໝົດ ແລະ ຜົນຕອບແທນຂອງຊັບສິນ ຫລື ໄດ້ໂອນສິດໃນການຄຸ້ມຄອງຊັບສິນ, ຊັບສິນທີ່ເພີ່ມຂຶ້ນຂອງທະນາຄານ. ໃນກໍລະນີນີ້, ທະນາຄານຍັງຮັບຮູ້ເປັນໜີ້ສິນໃນເຄືອ, ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ທະນາຄານຕ້ອງຮັບຜິດຊອບ ຖືກຄິດໄລ່ຢ່າງຖືກຕ້ອງ ບົນພື້ນຖານທີ່ວ່າມັນຈະມີຜົນກະທົບຕໍ່ສິດ ແລະ ຂໍ້ຜູກພັນຂອງທະນາຄານ ຫລື ບໍ່.

ເອກະສານທີ່ກ່ຽວຂ້ອງກັບການຄ້ຳປະກັນການໂອນຊັບສິນແມ່ນ ຕ້ອງໃສ່ມູນຄ່າທີ່ຕ່ຳກວ່າມູນຄ່າຕາມບັນຊີໃນເບື້ອງຕົ້ນ ແລະ ທະນາຄານຕ້ອງຊຳລະຄືນຕາມມູນຄ່າສູງສຸດຂອງຊັບສິນ.

2.6.3.2 *ໜີ້ສິນທາງການເງິນ*

ໜີ້ສິນການເງິນຈະໝົດໄປເມື່ອໜີ້ສິນຖືກຊຳລະ ຫລື ຖືກຍົກເລີກ ຫລື ໝົດກຳນົດ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫລື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ເຊັ່ນ: ການປ່ຽນແປງ ຫລື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່. ແລະ ສ່ວນຜິດຕ່າງ ຂອງ ຍອດຍົກມາຂອງໜີ້ສິນທາງການເງິນ ແລະ ຄ່າຕອບແທນທີ່ຈ່າຍຈະຖືກລາຍງານໃນໃບລາຍງານຜົນໄດ້ຮັບ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ (ຕໍ່)

2.6.4 *ການກຳນົດມູນຄ່າຍຸດຕິທຳ*

ມູນຄ່າຍຸດຕິທຳຂອງຊັບສິນທາງການເງິນ ທີ່ມີການຊື້-ຂາຍໃນຕະຫຼາດນະມື້ທີ່ເຮັດເອກະສານລາຍງານແມ່ນອີງຕາມລາຄາປະກາດຂາຍຂອງຕະຫຼາດ ຫຼື ລາຄາປະກາດຂອງຜູ້ຂາຍ (ລາຄາທີ່ຜູ້ຊື້ສະເໜີຊື້ ສຳລັບຖານະຊື້ເກັບໄວ້ ແລະ ລາຄາທີ່ຜູ້ຂາຍສະເໜີຂາຍ ສຳລັບຖານະຂາຍຢືມ) ໂດຍບໍ່ຍັງບໍ່ໄດ້ຫັກຄ່າໃຊ້ຈ່າຍທີ່ໃຊ້ເຂົ້າໃນທຸລະກຳດັ່ງກ່າວ.

ສຳລັບເຄື່ອງມືທາງການເງິນອື່ນໆທັງໝົດທີ່ມີການຊື້-ຂາຍໃນຕະຫຼາດ, ລາຄາຍຸດຕິທຳແມ່ນພິຈາລະນາໂດຍການນຳໃຊ້ວິທີການປະເມີນມູນຄ່າຕາມແບບທີ່ເໝາະສົມ. ວິທີການປະເມີນມູນຄ່າແມ່ນລວມມີ: ວິທີສ່ວນລຸດກະແສເງິນສົດ, ການສົມທຽບກັບລາຄາຂອງລາຍການທີ່ຄ້າຍຄືກັນ ຖ້າຫາກມີລາຄາທີ່ມີການຊື້ຂາຍໃນຕະຫລາດເຊິ່ງລາຄາສາມາດສັ່ງເກດເຫັນໄດ້, ແບບລາຄາທາງເລືອກ (options pricing models), ແບບສິນເຊື່ອ ແລະ ແບບຕີມູນຄ່າອື່ນໆທີ່ກ່ຽວຂ້ອງ.

ບາງເຄື່ອງມືທາງການເງິນແມ່ນບັນທຶກຕາມມູນຄ່າຍຸດຕິທຳທີ່ນຳໃຊ້ວິທີຕີມູນຄ່າທີ່ບໍ່ມີລາຄາປັດຈຸບັນຂອງຕະຫຼາດ ແລະ ຂໍ້ມູນທີ່ສາມາດສັງເກດເຫັນໄດ້ໃນຕະຫຼາດ. ມູນຄ່າຍຸດຕິທຳແມ່ນພິຈາລະນາໂດຍການໃຊ້ວິທີປະເມີນມູນຄ່າທີ່ໄດ້ທົດສອບລາຄາ ຫຼື ປັດໃຈ ທີ່ມີຜົນຕໍ່ລາຍການທີ່ເກີດຂຶ້ນຈິງໃນຕະຫຼາດ ແລະ ນຳໃຊ້ການພິຈາລະນາຂອງທະນາຄານໃນການຄາດຄະເນວິທີທີ່ເໝາະສົມທີ່ສຸດ. ວິທີແມ່ນໄດ້ດັດປັບໃຫ້ສະທ້ອນໃຫ້ຄອບຄຸມເອົາ ລາຄາທີ່ຜູ້ຊື້ສະເໜີຊື້ ແລະ ລາຄາທີ່ຜູ້ຂາຍສະເໜີຂາຍ ເພື່ອໃຫ້ສະແດງເຖິງຕົ້ນທຶນທີ່ຕ້ອງນຳໃຊ້ເພື່ອຂາຍລາຍການດັ່ງກ່າວ, ການດັດແກ້ການຕີມູນຄ່າ ໜີ້ ແລະ ມີ, ການຫຍາຍສະພາບຄ່ອງ ແລະ ຂໍ້ຈຳກັດຂອງວິທີດັ່ງກ່າວ. ນອກຈາກນີ້ ກຳໄລ ຫຼື ຂາດທຶນ ທີ່ໄດ້ມີການຄິດໄລ່ໄວ້ ໃນຕອນທີ່ເຄື່ອງມືທາງການເງິນຖືກບັນທຶກຄັ້ງທຳອິດ (ມື້ທີ 1 ກຳໄລ/ຂາດທຶນ) ໄດ້ຖືກເຍື້ອນອອກໄປ ແລະ ຈະຮັບຮູ້ ເມື່ອປັດໃຈສາມາດສັງເກດໄດ້ ຫຼື ການບໍ່ສາມາດຮັບຮູ້ເຄື່ອງມືທາງການເງິນ.

ການວິເຄາະມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນ ແລະ ລາຍລະອຽດຂອງວິທີໃນການວັດແມ່ນຢູ່ໃນບົດອະທິບາຍ ເລກທີ 38.

2.6.5 *ການເຊື່ອມມູນຄ່າຂອງຊັບສິນການເງິນ*

ທະນາຄານ ແລະ ບໍລິສັດໃນເຄືອ ປະເມີນໃນມື້ເຮັດເອກະສານລາຍງານວ່າມີຫລັກຖານລະບຸທີ່ສະແດງໃຫ້ເຫັນວ່າຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນມີການເຊື່ອມມູນຄ່າ ຫລື ບໍ່. ຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນ ຈະຖືວ່າມີຄວາມເສຍຫາຍ ຖ້າພຽງແຕ່ວ່າມີຫລັກຖານລະບຸຄວາມເສຍຫາຍຈາກຜົນຂອງໜຶ່ງ ຫລື ຫລາຍເຫດການທີ່ປະກົດຂຶ້ນຫລັງຈາກມີການຮັບຮູ້ຊັບສິນ (ເກີດມີ "ເຫດການເສຍຫາຍ") ແລະ ເຫດການເສຍຫາຍໜຶ່ງ (ຫລື ຫລາຍເຫດການ) ໄດ້ສົ່ງຜົນກະທົບເຖິງການຄາດຄະເນ ກະແສເງິນສົດໃນອະນາຄົດຂອງຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນທີ່ສາມາດຄາດຄະເນໄດ້ ຢ່າງໜ້າເຊື່ອຖື.

ຫລັກຖານຂອງການເຊື່ອມມູນຄ່າຂອງເງິນກູ້ ແລະ ເງິນລ່ວງໜ້າອາດລວມມີສິ່ງທີ່ບົ່ງເຖິງຄວາມຫຍຸ້ງຍາກທາງດ້ານການເງິນຂອງຜູ້ຢືມ ຫລື ກຸ່ມຂອງຜູ້ຢືມ, ການຜິດສັນຍາ ຫລື ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າພວກເຂົາຈະລົ້ມລະລາຍ ຫລື ການປັບປຸງລະບົບການເງິນຄືນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດຫລຸດລົງເຊັ່ນການປ່ຽນແປງໜີ້ເກີນກຳນົດ ຫລື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 *ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ* (ຕໍ່)

2.6.5 ການເຊື່ອມມູນຄ່າຂອງຊັບສິນການເງິນ (ຕໍ່)

ຊັບສິນການເງິນທີ່ບັນທຶກຕາມລາຄາຕົ້ນທຶນຕັດຈຳໜ່າຍ

ສຳລັບການຫັກຄ່າເຊື່ອມຕົ້ນທຶນຊັບສິນການເງິນ (ເຊັ່ນ: ໜີ້ຕ້ອງຮັບຈາກທະນາຄານອື່ນ, ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ເຊັ່ນດຽວກັບການລົງທຶນທີ່ຖືໄວ້ຈົນຮອດມື້ຄົບກຳນົດ), ທະນາຄານປະເມີນເອງໃນເບື້ອງຕົ້ນວ່າ ຫລັກຖານການເຊື່ອມຄ່າ ຂອງຊັບສິນການເງິນນັ້ນສຳຄັນ ຫຼື ບໍ່. ຖ້າທະນາຄານກຳນົດວ່າບໍ່ມີຫລັກຖານການເຊື່ອມຄ່າສຳລັບຊັບສິນການເງິນ, ລວມທັງ ຊັບສິນໃນກຸ່ມຂອງຊັບສິນການເງິນທີ່ຄ້າຍຄືກັບຄວາມສ່ຽງສິນເຊື່ອ ແລະ ໄດ້ປະເມີນຄວາມເສຍຫາຍຂອງຊັບສິນເຫຼົ່ານັ້ນ. ບັນດາຊັບສິນທີ່ຖືກປະເມີນຄວາມເສຍຫາຍລວມກິດຈະການ ແລະ ຄວາມເສຍຫາຍດັ່ງກ່າວນັ້ນບໍ່ໄດ້ລວມເຂົ້າໃນຄວາມເສຍ ຫາຍທັງໝົດ.

ຖ້າຫາກມີຫລັກຖານວ່າຄ່າເຊື່ອມໜີ້ເສຍເກີດຂຶ້ນ, ມູນຄ່າຂາດທຶນຈະຖືກຄິດໄລ່ເປັນສ່ວນຕ່າງລະຫວ່າງ ຍອດຍົກມາຂອງຊັບ ສິນ ແລະ ຍອດເຫຼືອປັດຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາຄ່າເຊື່ອມໜີ້ເສຍທີ່ອາດຈະເກີດຂຶ້ນໃນອະນາຄົດ). ຍອດຍົກມາຂອງຊັບສິນຫລຸດລົງ ແລະ ຖືກລົງບັນຊີສ່ວນຫລຸດ ແລະ ມູນຄ່າທີ່ຂາດທຶນແມ່ນຖືກລາຍງານໃນໃບລາຍງານຜົນ ໄດ້ຮັບ. ລາຍຮັບດອກເບ້ຍຈະຖືກຄິດໄລ່ຢ່າງຕໍ່ເນື່ອງຕາມຍອດເຫລືອ ແລະ ຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍສ່ວນຫລຸດ ກະແສເງິນສົດໃນອະນາຄົດ ເພື່ອປະເມີນຄ່າເຊື່ອມໜີ້ເສຍ. ລາຍຮັບດອກເບ້ຍຖືກລົງບັນຊີ "ລາຍຮັບດອກເບ້ຍ ແລະ ລາຍ ຮັບທີ່ຄ້າຍຄືກັນ".

ເງິນກູ້ ແລະ ສ່ວນຫລຸດທີ່ກ່ຽວຂ້ອງກັບເງິນກູ້ ຈະຖືກສະສາງອອກເມື່ອທະນາຄານໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອຫລັກຊັບຄ້ຳປະກັນຖືກໂອນໃຫ້ທະນາຄານ. ຖ້າໃນປີຕໍ່ມາ, ຄ່າເຊື່ອມໜີ້ເສຍຈະເພີ່ມຂຶ້ນ ຫລື ຫລຸດລົງຍ້ອນວ່າ ລູກຄ້າໄດ້ມາຊຳລະຫລັງຈາກຖືກຫັກຄ່າເຊື່ອມ, ຄ່າເຊື່ອມໜີ້ເສຍທີ່ຖືກຫັກໄວ້ກ່ອນໜ້ານີ້ຖືກ ເພີ່ມຂຶ້ນ ຫລື ຫລຸດລົງຕາມ ການດັດແກ້ໃນບັນຊີສ່ວນຫລຸດ, ຖ້າໃນອະນາຄົດຈະສາມາດເກັບຄືນໄດ້, ຄ່າເຊື່ອມທີ່ເກັບຄືນນັ້ນຈະຖືກລົງບັນຊີເບ້ຍ້ອງມີໃນ ບັນຊີ "ລາຍຮັບອື່ນຈາກການດຳເນີນງານ".

ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ແມ່ນມູນຄ່າໃນປັດຈຸບັນຕາມອັດຕາດອກເບ້ຍທີ່ແທ້ຈິງຂອງ ຊັບສິນການເງິນ. ຖ້າເງິນກູ້ມີອັດຕາດອກເບ້ຍທີ່ຜັນແປ, ອັດຕາສ່ວນຫລຸດສຳລັບການຕີມູນຄ່າຂອງຄ່າເຊື່ອມມູນຄ່າແມ່ນ ອັດຕາດອກເບ້ຍທີ່ແທ້ຈິງໃນປັດຈຸບັນ. ຖ້າທະນາຄານໄດ້ຈັດປະເພດຊັບສິນການຄ້າເປັນເງິນກູ້ ແລະ ເງິນລ່ວງໜ້າ, ອັດຕາ ສ່ວນຫລຸດສຳລັບຄິດໄລ່ຄ່າເຊື່ອມແມ່ນຕ້ອງນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງໃນປັດຈຸບັນ. ການຄິດໄລ່ມູນຄ່າປັດຈຸບັນຂອງ ກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ຂອງຫລັກຊັບຄ້ຳປະກັນມີຜົນກະທົບຕໍ່ກະແສເງິນສົດ ເຊິ່ງອາດເປັນຜົນມາຈາກ ຫລັກຊັບຄ້ຳປະກັນທີ່ຍຶດມາໄດ້ ລົບໃຫ້ຕົ້ນທຶນຂອງຫລັກຊັບຄ້ຳປະກັນທີ່ໄດ້ຮັບ ແລະ ຂາຍ ບໍ່ວ່າການຍຶດຫລັກຊັບຈະເປັນໄປ ໄດ້ ຫລື ບໍ່ກໍ່ຕາມ.

ເພື່ອຈຸດປະສົງໃນປະເມີນການເຊື່ອມຄ່າແບບເປັນກຸ່ມ, ຊັບສິນການເງິນແມ່ນຖືກຈັດເປັນກຸ່ມບົນພື້ນຖານລະບົບການຈັດ ລະດັບສິນເຊື່ອພາຍໃນຂອງທະນາຄານ ເຊິ່ງພິຈາລະນາເຖິງລັກສະນະຄວາມສ່ຽງ ເຊັ່ນ: ອຸດສະຫະກຳ, ພື້ນທີ່ພູມມິສາດ, ປະເພດຫຼັກຊັບ, ສະຖານະໃນອະດີດ ແລະ ປັດໄຈອື່ນທີ່ກ່ຽວຂ້ອງ.

ກະແສເງິນສົດໃນອານາຄົດຂອງກຸ່ມຊັບສິນການເງິນທີ່ມີການຫັກຄ່າເຊື່ອມມູນຄ່າເປັນກຸ່ມ ແມ່ນຖືກຄາດຄະເນບົນພື້ນຖານ ການຂາດທຶນຜ່ານມາຂອງຊັບສິນກັບລັກສະນະຄວາມສ່ຽງສິນເຊື່ອທີ່ຄ້າຍຄືກັນໃນກຸ່ມ. ຂໍ້ມູນການຂາດທຶນທີ່ຜ່ານມາຈະຖືກ ດັດແກ້ ຕາມພື້ນຖານຂໍ້ມູນທີ່ມີໃນປັດຈຸບັນ ເພື່ອສະແດງໃຫ້ເຫັນຜົນກະທົບຂອງເງື່ອນໄຂໃນປັດຈຸບັນຂອງຂໍ້ມູນການສູນ ເສຍໃນອະດີດທີ່ໄດ້ນຳໃຊ້ເຂົ້າເປັນພື້ນຖານຂ້າງເທິງ ແລະ ເພື່ອເອົາຜົນກະທົບຂອງເງື່ອນໄຂໃນໄລຍະຜ່ານມາທີ່ໄດ້ຖືກນຳໃຊ້ ເຂົ້າເປັນພື້ນຖານ ແຕ່ບໍ່ມີແລ້ວໃນປັດຈຸບັນອອກ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.5 *ການເຊື່ອມມູນຄ່າຂອງຊັບສິນການເງິນ* (ຕໍ່)

ຊັບສິນການເງິນທີ່ບັນທຶກຕາມລາຄາທຶນຕັດຈຳໜ່າຍ (ຕໍ່)

ການຄາດຄະເນການປ່ຽນແປງທີ່ສ່ອງແສງເຖິງກະແສເງິນສົດໃນອະນາຄົດ ແລະ ເປັນໄປໃນທາງດຽວກັນກັບການປ່ຽນແປງ ຂອງຂໍ້ມູນທີ່ສັງເກດໄດ້ຈາກປີຕໍ່ປີ (ເຊັ່ນການປ່ຽນແປງອັດຕາການວ່າງງານ, ລາຄາຊັບສິນ, ລາຄາສິນຄ້າ, ເງື່ອນໄຂການຊຳລະ ຫລື ປັດໄຈອື່ນໆທີ່ບົ່ງບອກເຖິງການຂາດທຶນໃນກຸ່ມ ແລະ ຄວາມສຳຄັນຂອງການຂາດທຶນ). ວິທີການ ແລະ ຂໍ້ສົມມຸດຖານທີ່ ນຳໃຊ້ໃນການຄາດຄະເນກະແສເງິນສົດໃນອະນາຄົດໄດ້ທົບທວນຄືນຢ່າງເປັນປົກກະຕິ ເພື່ອຫລຸດສ່ວນຜິດດ່ຽງລະຫວ່າງ ຂາດທຶນທີ່ຄາດຄະເນ ແລະ ຂາດທຶນຕົວຈິງ.

ການລົງທຶນທາງການເງິນມີໄວ້ເພື່ອຂາຍ

ສຳລັບການລົງທຶນທາງການເງິນມີໄວ້ເພື່ອຂາຍ, ທະນາຄານໄດ້ປະເມີນຄວາມເສຍຫາຍໃນມື້ເຮັດບົດລາຍງານ ຫລື ເມື່ອມີຫລັກ ຖານການເຊື່ອມມູນຄ່າ.

ກໍລະນີທີ່ການລົງທຶນໃນຮຸ້ນຖືກຈັດປະເພດເປັນການລົງທຶນມີໄວ້ເພື່ອຂາຍ, ຫລັກຖານພາຍນອກນັ້ນລວມມີການຫລຸດລົງຕ່ຳ ກວ່າຕົ້ນທຶນຢ່າງ "ພື້ນເດັ່ນ" ຫລື "ຍາວນານ" ໃນມູນຄ່າຍຸດຕິທຳຂອງການລົງທຶນ. ທະນາຄານຮັກສາຄວາມ "ພື້ນເດັ່ນ" ນັ້ນ ໃນອັດຕາ 20% ແລະ ຄວາມ "ຍາວນານ" ແມ່ນຫລາຍກວ່າຫົກເດືອນ. ເມື່ອມີຫລັກຖານຂອງການເຊື່ອມມູນຄ່າ, ຂາດທຶນ ສະສົມຈະຖືກປະເມີນເປັນສ່ວນຜິດດ່ຽງລະຫວ່າງລາຄາຊື້ ແລະ ມູນຄ່າຍຸດຕິທຳປັດຈຸບັນ ລົບ ມູນຄ່າເສຍຫາຍຂອງຊັບສິນ ການເງິນຜ່ານມາທີ່ຮັບຮູ້ໃນໃບລາຍງານຜົນໄດ້ຮັບລວມກິດຈະການ. ຖືກຍ້າຍຈາກທຶນຕົນເອງ ແລະ ຖືກຮັບຮູ້ໃນໃບລາຍງານ ຜົນໄດ້ຮັບລວມກິດຈະການ. ມູນຄ່າສູນເສຍຂອງການລົງທຶນໃນຮຸ້ນບໍ່ໄດ້ສະສົມໃນໃບລາຍງານຜົນໄດ້ຮັບລວມກິດຈະການ; ການເພີ່ມຂຶ້ນຂອງມູນຄ່າຍຸດຕິທຳຫລັງຈາກຫັກຄ່າເຊື່ອມມູນຄ່າຈະຖືກຮັບຮູ້ເປັນທຶນ.

ການເຈລະຈາຄືນກ່ຽວກັບເງິນກູ້

ຖ້າເປັນໄປໄດ້, ທະນາຄານພະຍາຍາມຊອກຫາວິທີທາງເຈລະຈາກັບລູກຄ້າເງິນກູ້ທີ່ມີບັນຫາດ້ວຍການປັບໂຄງສ້າງໜີ້ຄືນໃໝ່ ແທນທີ່ຈະຍຶດຫຼັກຊັບຄ້ຳປະກັນ. ໃນນີ້ອາດລວມໄປເຖິງການເລື່ອນເວລາຊຳລະເງິນກູ້ ແລະ ເຮັດຂໍ້ຕົກລົງກ່ຽວກັບເງື່ອນໄຂ ຂອງເງິນກູ້ບ້ອງໃໝ່. ເມື່ອໄລຍະການຊຳລະໜີ້ໄດ້ຮັບການເຈລະຈາ, ທຸກໆການເຊື່ອມມູນຄ່າຈະຖືກອັດແທກດ້ວຍອັດຕາ ດອກເບ້ຍທີ່ແທ້ຈິງ ດັ່ງທີ່ໄດ້ຖືກຄິດໄລ່ກ່ອນການເຈລະຈາໄລຍະການຊຳລະເງິນກູ້ ແລະ ເງິນກູ້ບ້ອງນັ້ນກໍ່ຈະບໍ່ກາຍກຳນົດ. ຄະນະອຳນວຍການສືບຕໍ່ທົບທວນການເຈລະຈາເງິນກູ້ ເພື່ອໃຫ້ແນ່ໃຈວ່າການເຈລະຈານັ້ນສຳເລັດຜົນ ແລະ ສາມາດຊຳລະ ເງິນກູ້ໃນອະນາຄົດ. ເງິນກູ້ເຫລົ່ານັ້ນຈະຖືກສືບຕໍ່ປະເມີນແບບເປັນບຸກຄົນ ຫຼື ເປັນກຸ່ມ, ຖືກຄິດໄລ່ດ້ວຍອັດຕາດອກເບ້ຍ ທີ່ແທ້ຈິງຂອງເງິນກູ້.

ການຕີມູນຄ່າຫຼັກຊັບຄ້ຳປະກັນ

ທະນາຄານຊອກຫາວິທີທີ່ຈະນຳໃຊ້ຫລັກຊັບຄ້ຳປະກັນ, ຖ້າເປັນໄປໄດ້, ເພື່ອຫລຸດຜ່ອນຄວາມສ່ຽງຂອງຊັບສິນການເງິນ. ຫລັກຊັບຄ້ຳປະກັນອາດເປັນໄດ້ຫລາຍຮູບແບບເຊັ່ນ: ເງິນສົດ, ຫລັກຊັບ, ໜັງສືສົນເຊື່ອ/ຄ້ຳປະກັນ, ດິນ ແລະ ເຮືອນ, ໜີ້ ຕ້ອງຮັບ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການປັບປຸງສົນເຊື່ອເຊັ່ນ: ຂໍ້ຕົກລົງຊຳລະສະສາງໂດຍທົ່ວໄປ ມູນຄ່າຍຸດຕິທຳຂອງຫລັກຊັບຄ້ຳປະກັນແມ່ນຖືກປະເມີນໂດຍທົ່ວໄປໃນມູນຄ່າຕ່ຳສຸດໃນເບື້ອງຕົ້ນ ຫລື ຕາມບົດລາຍງານ ສຳລັບຫົກເດືອນຕົ້ນປີຂອງທະນາຄານ, ເຖິງຢ່າງໃດກໍ່ຕາມ, ຫລັກຊັບຄ້ຳປະກັນບາງຮູບແບບ ເຊັ່ນ: ເງິນສົດ ຫລື ຫລັກຊັບທີ່ ກ່ຽວຂ້ອງກັບເງື່ອນໄຂສ່ວນຫລຸດແມ່ນຈະຖືກປະເມີນທຸກມື້.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.5 *ການເຊື່ອມມູນຄ່າຂອງຊັບສິນການເງິນ* (ຕໍ່)

ການຕີມູນຄ່າຫຼັກຊັບຄ້ຳປະກັນ (ຕໍ່)

ເພື່ອເພີ່ມຄວາມເປັນໄປໄດ້, ທະນາຄານໄດ້ນຳໃຊ້ຂໍ້ມູນຈາກຕະຫລາດທີ່ມີການເຄື່ອນໄຫວສຳລັບປະເມີນຊັບສິນການເງິນ, ທີ່ໃຊ້ເປັນຫລັກຊັບຄ້ຳປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດການົດມູນຄ່າຕາມທ້ອງຕະຫລາດຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫລັກຊັບຄ້ຳປະກັນທີ່ບໍ່ແມ່ນທາງການເງິນ, ເຊັ່ນ: ດິນ ແລະ ເຮືອນ, ຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກບຸກຄົນທີສາມເຊັ່ນ: ນາຍໜ້າ, ລາຄາທີ່ພັກອາໃສ, ເອກະສານລາຍງານການເງິນທີ່ຖືກກວດສອບແລ້ວ ແລະ ແຫລ່ງຂໍ້ມູນອື່ນໆ.

2.6.6 *ການລົງທຶນໃນບໍລິສັດຮ່ວມທຶນ*

ທະນາຄານແມ່ນມີລາຍຮັບຈາກບໍລິສັດຮ່ວມທຶນ ເຊິ່ງແມ່ນຫົວໜ່ວຍທຸລະກິດທີ່ມີການຄວບຄຸມຮ່ວມກັນ, ດັ່ງນັ້ນ ການຮ່ວມທຶນແມ່ນໄດ້ມີຂໍ້ຕົກລົງກັນ ກຳນົດການຄວບຄຸມຮ່ວມກັນໃນການເຄື່ອນໄຫວທຸລະກິດ. ຂໍ້ຕົກລົງໄດ້ຕົກລົງເປັນເອກະສັນກັນ ສຳລັບຂໍ້ຕົກລົງທາງດ້ານການເງິນ ແລະ ການດຳເນີນງານໃນການຮ່ວມທຶນ.

ທະນາຄານ ຮັບຮູ້ລາຍຮັບຈາກບໍລິສັດຮ່ວມທຶນ ຕາມຮູບແບບວິທີສ່ວນໄດ້ສ່ວນເສຍ. ພາຍໃຕ້ຮູບແບບນີ້, ການລົງທຶນໃນບໍລິສັດຮ່ວມທຶນ ແມ່ນຖືກບັນທຶກຕາມຕົ້ນທຶນໃນເບື້ອງຕົ້ນ ຢູ່ໃນໃບລາຍງານຖານະການເງິນສັງລວມກິດຈະການ ບວກກັບລາຍການດັດແກ້ເປັນ "ຊັບສິນສຸດທິ ຕາມສັດສ່ວນຂອງການລົງທຶນກັບບໍລິສັດຮ່ວມທຶນ ຕາມພາຍຫລັງ. ຄ່ານິຍົມຕາມສັດສ່ວນຂອງການລົງທຶນໃນບໍລິສັດຮ່ວມທຶນ ແມ່ນຖືກຮັບຮູ້ເປັນມູນຄ່າຊາກ ລວມຢູ່ໃນຍອດຍົກມາ ຂອງເງິນລົງທຶນ ແລະ ບໍ່ຫັກຄ່າເຊື່ອມ.

ສ່ວນແບ່ງກຳໄລຂອງທະນາຄານຈາກບໍລິສັດຮ່ວມທຶນ ແມ່ນໄດ້ສະແດງໃຫ້ເຫັນຢູ່ໃນໃບລາຍງານຜົນໄດ້ຮັບລວມກິດຈະການ. ນີ້ແມ່ນກຳໄລທີ່ປະກອບເປັນທຶນຂອງຜູ້ຖືຮຸ້ນໃນບໍລິສັດຮ່ວມທຶນ ແລະ ແມ່ນກຳໄລຫຼັງອາກອນ ແລະ ເປັນລາຍຮັບທີ່ບໍ່ສາມາດຄວບຄຸມໄດ້ການລົງທຶນໃນບໍລິສັດຮ່ວມທຶນ.

ຫລັງຈາກນຳໃຊ້ຮູບແບບການລົງທຶນແລ້ວ ທະນາຄານຈະພິຈາລະນາວ່າ ຈຳເປັນຕ້ອງຮັບຮູ້ຄ່າເຊື່ອມເພີ່ມເຕີມ ຂອງການລົງທຶນໃນບໍລິສັດຮ່ວມທຶນ ຫລື ບໍ່. ທະນາຄານຈະພິຈາລະນາໃນມື້ທີ່ສ້າງເອກະສານລາຍງານ ວ່າມີຫລັກຖານ ການເຊື່ອມຄ່າ ຂອງການລົງທຶນ ໃນບໍລິສັດຮ່ວມທຶນ ຫລື ບໍ່. ໃນສະຖານະການດັ່ງກ່າວ ທະນາຄານຈະຄິດໄລ່ຄ່າເຊື່ອມມູນຄ່າ ເປັນສ່ວນຕ່າງລະຫວ່າງຈຳນວນເງິນທີ່ເກັບຄືນໄດ້ ແລະ ຍອດຍົກມາຂອງການລົງທຶນໃນບໍລິສັດ ຮ່ວມທຶນ ແລະ ຮັບຮູ້ສ່ວນຜິດດ່ຽງຢູ່ໃນໃບລາຍງານຜົນໄດ້ຮັບສັງລວມກິດຈະການ.

2.6.7 *ການຫັກລ້າງເຄື່ອງມືທາງການເງິນ*

ຊັບສິນ ແລະ ໜີ້ສິນທາງການເງິນແມ່ນຖືກຫັກລ້າງກັນ ແລະ ມູນຄ່າສຸດທິຈະຖືກລາຍງານໃນໃບລາຍງານຖານະການເງິນລວມກິດຈະການ, ຖ້າຫາກວ່າທະນາຄານຖືກບັງຄັບທາງກົດໝາຍໃຫ້ ສະສາງຈຳນວນເງິນດັ່ງກ່າວນັ້ນ ແລະ ທະນາຄານຕັ້ງໃຈຈະສະສາງໃນມູນຄ່າສຸດທິ ຫຼື ຂາຍຊັບສິນເພື່ອຊຳລະໜີ້ສິນໃນເວລາດຽວກັນ. ນີ້ບໍ່ແມ່ນກໍລະນີທົ່ວໄປໃນຂໍ້ຕົກລົງ ວ່າດວ້ຍການຫັກລ້າງລະຫວ່າງຊັບສິນ - ໜີ້ສິນ ແລະ ຊັບສິນ-ໜີ້ສິນທີ່ກ່ຽວຂ້ອງໄດ້ຖືກສະແດງມູນຄ່າລວມໃນໃບລາຍງານຖານະການເງິນລວມກິດຈະການ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.8 *ການເຊົ່າ*

ການພິຈາລະນາວ່າມີຂໍ້ຕົກລົງໃດທີ່ເປັນການເຊົ່າ ຫລື ລວມຢູ່ໃນການເຊົ່າ ຫລື ບໍ່ ແມ່ນຂຶ້ນຢູ່ກັບການຕົກລົງ ແລະ ຕ້ອງກຳນົດການປະເມີນວ່າ ການປະຕິບັດຂໍ້ຕົກລົງແມ່ນຂຶ້ນຢູ່ກັບການນຳໃຊ້ຊັບສິນສະເພາະ ຫລື ຊັບສິນ ແລະ ຂໍ້ຕົກລົງໃນການໂອນກຳມະສິດນຳໃຊ້ຊັບສິນ.

ທະນາຄານເປັນຜູ້ເຊົ່າ

ການເຊົ່າທີ່ບໍ່ໄດ້ໂອນທຸກຄວາມສ່ຽງໃຫ້ທະນາຄານ ແລະ ຜົນປະໂຫຍດທີ່ເກີດຂຶ້ນໂດຍບັງເອີນຕໍ່ກຳມະສິດຂອງ ລາຍການເຊົ່າແມ່ນການເຊົ່າໃນການດຳເນີນງານ. ການຈ່າຍຄ່າເຊົ່າໃນການດຳເນີນງານແມ່ນຖືກບັນທຶກເປັນ ລາຍຈ່າຍຢູ່ໃນໃບລາຍງານຜົນໄດ້ຮັບລວມກິດຈະການ ດ້ວຍວິທີສະເໝີຕົ້ວ ຕໍ່ກັບໄລຍະຂອງການເຊົ່າ. ໜີ້ຕ້ອງສິ່ງໃນການເຊົ່າທີ່ອາດເກີດຂຶ້ນແມ່ນຖືກບັນທຶກເປັນລາຍຈ່າຍ ຢູ່ໃນໄລຍະທີ່ມີການເຄື່ອນໄຫວເກີດຂຶ້ນ.

ທະນາຄານເປັນຜູ້ໃຫ້ເຊົ່າ

ການເຊົ່າທີ່ທະນາຄານບໍ່ໄດ້ໂອນທຸກຄວາມສ່ຽງ ແລະ ຜົນປະໂຫຍດໃນກຳມະສິດຂອງຊັບສິນ ແມ່ນຖືກຈັດປະເພດເປັນການເຊົ່າໃນການດຳເນີນງານ. ຄ່າໃຊ້ຈ່າຍທາງກົງທີ່ເກີດຂຶ້ນໃນເບື້ອງຕົ້ນ ໃນການເຈລະຈາການເຊົ່າໃນການດຳເນີນງານ ແມ່ນຖືກບັນທຶກເພີ່ມເຂົ້າໃນຍອດຍົກມາຂອງຊັບສິນທີ່ເຊົ່າ ແລະ ບັນທຶກຕາມໄລຍະຂອງການ ເຊົ່າ ຕາມວິທີສະເໝີຕົ້ວເປັນລາຍຮັບຈາກຄ່າເຊົ່າ. ຄ່າເຊົ່າບັງເອີນແມ່ນຖືກບັນທຶກເປັນລາຍຮັບຢູ່ໃນໄລຍະທີ່ມີ ການເຄື່ອນໄຫວເກີດຂຶ້ນ.

2.6.9 *ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ*

ລາຍຮັບຖືກຮັບຮູ້ເພື່ອຄາດຄະເນວ່າຜົນປະໂຫຍດທາງດ້ານເສດຖະກິດຈະໄຫຼມາສູ່ທະນາຄານ ແລະ ລາຍຮັບສາມາດຖືກວັດແທກມູນຄ່າໄດ້. ຂໍ້ກຳນົດໃນການຮັບຮູ້ລາຍຮັບຢູ່ຂ້າງລຸ່ມນີ້ຕ້ອງໄດ້ຕາມເງື່ອນໄຂກ່ອນທີ່ຈະມີການຮັບຮູ້ວ່າເປັນລາຍຮັບ:

(i) ດອກເບ້ຍ ແລະ ລາຍຮັບ ແລະ ລາຍຈ່າຍ ທີ່ຄ້າຍຄືກັນ

ສຳລັບເຄື່ອງມືທາງການເງິນທັງໝົດທີ່ຖືກປະເມີນຕາມລາຄາທຶນຕັດຈຳໜ່າຍ, ຊັບສິນທາງການເງິນທີ່ມີດອກເບ້ຍແມ່ນຈັດເປັນປະເພດຖືໄວ້ເພື່ອຂາຍ ແລະ ເຄື່ອງມືທາງການເງິນທີ່ກຳນົດມູນຄ່າຍຸດຕິທຳຜ່ານ ກຳໄລ ຫຼື ຂາດທຶນ, ລາຍຮັບ ຫຼື ລາຍຈ່າຍ ດອກເບ້ຍ ແມ່ນຖືກບັນທຶກໂດຍການນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ ທີ່ເປັນອັດຕາລຸດການຈ່າຍ ຫຼື ການໄດ້ຮັບເງິນສົດທີ່ຄາດຄະເນໃນອານາຄົດຜ່ານອາຍຸຂອງເຄື່ອງມືທາງການເງິນ ຫຼື ໄລຍະທີ່ສັ້ນກວ່າ, ສະຖານທີ່ເໝາະສົມ, ໃຫ້ກັບລາຄາຕາມບັນຊີຂອງ ຊັບສິນ ຫຼື ໜີ້ສິນທາງການເງິນ. ການຄິດໄລ່ແມ່ນເອົາທຸກເງື່ອນໄຂຂອງເຄື່ອງມືທາງການເງິນເຂົ້າໃນບັນຊີ (ຕົວຢ່າງ: ທາງເລືອກໃນການຈ່າຍລ່ວງໜ້າ) ແລະ ລວມເອົາທຸກໆຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນໂດຍກົງທີ່ກ່ຽວຂ້ອງກັບເຄື່ອງມືທາງການເງິນ ແລະ ພາກສ່ວນທີ່ສຳຄັນຂອງອັດຕາດອກເບ້ຍທີ່ແທ້ຈິງ ແຕ່ບໍ່ແມ່ນການເຊື່ອມຄ່າໃນອານາຄົດ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.9 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ (ຕໍ່)

(i) ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແລະ ຄ່າຍຄືດອກເບ້ຍ (ຕໍ່)

ມູນຄ່າຕາມບັນຊີຂອງ ຊັບສິນ ຫຼື ໜີ້ສິນທາງການເງິນ ແມ່ນຖືກດັດແກ້ ຖ້າທະນາຄານແກ້ໄຂການຄາດຄະເນຂອງການຈ່າຍ ແລະ ການຮັບ. ການດັດແກ້ມູນຄ່າຕາມບັນຊີແມ່ນຄິດໄລ່ຕາມອັດຕາດອກເບ້ຍທີ່ແທ້ຈິງເດີມ ແລະ ການປ່ຽນແປງໃນມູນຄ່າຕາມບັນຊີແມ່ນຖືກບັນທຶກເປັນ 'ລາຍຮັບອື່ນໆຈາກການດຳເນີນງານ'. ເຖິງຢ່າງໃດກໍຕາມ ສຳລັບຊັບສິນທາງການເງິນທີ່ໄດ້ຈັດປະເພດ ສຳລັບທະນາຄານທີ່ມີການເພີ່ມຂຶ້ນຂອງເງິນສິດທີ່ຄາດຄະເນຈະໄດ້ຮັບໃນອານາຄົດຢ່າງຕໍ່ເນື່ອງ ເນື່ອງຈາກຜົນຂອງການເພີ່ມຂຶ້ນຂອງຄວາມສາມາດໃນການເກັບເງິນສິດດັ່ງກ່າວ. ຜົນກະທົບຂອງການເພີ່ມຂຶ້ນດັ່ງກ່າວແມ່ນຮັບຮູ້ເປັນການດັດແກ້ອັດຕາດອກເບ້ຍທີ່ແທ້ຈິງຈາກມື້ທີ່ມີການປ່ຽນແປງຂອງການຄາດຄະເນ.

ມີຄັ້ງໜຶ່ງທີ່ມູນຄ່າທີ່ໄດ້ບັນທຶກແລ້ວຂອງຊັບສິນທາງການເງິນຂອງກຸ່ມຊັບສິນທາງການເງິນທີ່ຄ້າຍຄືກັນ ແມ່ນໄດ້ລຸດລົງເນື່ອງຈາກການເຊື່ອມຄ່າ, ລາຍຮັບດອກເບ້ຍແມ່ນສືບຕໍ່ນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງເດີມທີ່ໃຊ້ກັບຈຳນວນຕາມບັນຊີໃໝ່.

(ii) ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

ທະນາຄານມີລາຍໄດ້ຈາກຄ່າທຳນຽມ ແລະ ຄ່ານາຍໜ້າຈາກການບໍລິການຫລາກຫລາຍເພື່ອຕອບສະໜອງໃຫ້ແກ່ລູກຄ້າ. ລາຍຮັບຈາກຄ່າທຳນຽມສາມາດຖືກແບ່ງເປັນສອງໝວດຕາມລຳດັບດັ່ງນີ້:

<u>ລາຍຮັບຄ່າທຳນຽມຈາກການບໍລິການໃນໄລຍະເວລາໃດໜຶ່ງ</u>

ຄ່າທຳນຽມທີ່ເກີດຈາກການບໍລິການໃນໄລຍະເວລາໃດໜຶ່ງໄດ້ຖືກຄິດໄລ່ຄ້າງຮັບໃນໄລຍະເວລາໃດໜຶ່ງ. ຄ່າທຳນຽມເຫຼົ່ານີ້ປະກອບດ້ວຍ ລາຍຮັບຈາກຄ່ານາຍໜ້າ ແລະ ການບໍລິການຊັບສິນ, ຄ່າຄຸ້ມຄອງ ແລະ ຄ່າບໍລິຫານ ແລະ ຄ່າໃຫ້ຄຳປຶກສາດ້ານອື່ນໆ. ຄ່າທຳນຽມຈາກການໃຫ້ຄຳໝັ້ນສັນຍາເງິນກູ້ຢືມ ເຊິ່ງຄາດວ່າຈະມີການເບີກຖອນກູ້ຢືມ ແລະ ຄ່າທຳນຽມສິນເຊື່ອອື່ນໆທີ່ກ່ຽວຂ້ອງ (ລວມທັງລາຍຈ່າຍອື່ນໆທີ່ເພີ່ມຂຶ້ນ). ຄ່າທຳນຽມເຫຼົ່ານີ້ຈະຖືກຮັບຮູ້ໃຫ້ເປັນລາຍຈ່າຍດັດແກ້ຂອງອັດຕາດອກເບ້ຍຕົວຈິງຂອງເງິນກູ້, ແຕ່ຖ້າຫາກເງິນກູ້ເຫຼົ່ານັ້ນບໍ່ມີຄວາມເປັນໄປໄດ້ທີ່ຈະຖືກເບີກຖອນຄ່າທຳນຽມຄຳໝັ້ນສັນຍາເງິນກູ້ຈະຖືກຮັບຮູ້ພາຍໃຕ້ໄລຍະເວລາທີ່ໄດ້ຕົກລົງກັນ ໂດຍໃຊ້ອັດຕາດອກເບ້ຍແບບສະເໝີຕົວ.

ຄ່າທຳນຽມທີ່ເກີດຂຶ້ນຈາກການເຈລະຈາ ຫຼື ມີສ່ວນຮ່ວມໃນການເຈລະຈາຂອງລາຍການເຄື່ອນໄຫວສຳລັບບຸກຄົນທີສາມ ເຊັ່ນ: ການຈັດຊື້ຮຸ້ນ ຫລື ຫລັກຊັບອື່ນ ຫລື ຊື້ຂາຍທຸລະກິດ, ເຊິ່ງໄດ້ຮັບການຍອມຮັບສົມບູນແບບຂອງການການເຄື່ອນໄຫວທຸລະກິດພື້ນຖານ. ຄ່າທຳນຽມ ຫລື ສ່ວນປະກອບຂອງຄ່າທຳນຽມທີ່ມີການເຊື່ອມໂຍງໄປຍັງທາງປະຕິບັດບາງປະການທີ່ໄດ້ຮັບການຍອມຮັບຫລັງຈາກການປະຕິບັດຕາມກົດໝາຍທີ່ສອດຄ່ອງກັນ.

(iii) ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນແມ່ນຖືກຮັບຮູ້ເມື່ອທະນາຄານຖືກປະກາດສິດໃນການໄດ້ຮັບການຊຳລະ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.9 *ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ* (ຕໍ່)

(iv) ລາຍຮັບສຸດທິຈາກການຄ້າ

ຜົນທີ່ເກີດຂຶ້ນຈາກກິດຈະກຳການຊື້ຂາຍລວມເຖິງກຳໄລ ແລະ ຂາດທຶນ ຈາກການປ່ຽນແປງມູນຄ່າຍຸດຕິທຳ ແລະ ລາຍຮັບ ດອກເບ້ຍ ຫຼື ລາຍຈ່າຍທີ່ກ່ຽວຂ້ອງ ແລະ ເງິນປັນຜົນ ສຳລັບຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນ "ມີໄວ້ເພື່ອຂາຍ" ເຊິ່ງລວມເຖິງສິ່ງທີ່ບໍ່ມີປະສິດທິພາບທີ່ໄດ້ບັນທຶກໄວ້ໃນທຸລະກຳຄວາມສ່ຽງ.

2.6.10 *ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດ ດັ່ງທີ່ໄດ້ອ້າງອີງຢູ່ໃນໃບລາຍງານກະແສເງິນສົດປະກອບດ້ວຍເງິນສົດໃນກຳມື, ເງິນຝາກກະແສລາຍວັນກັບທະນາຄານແຫ່ງ ສປປ ລາວ ແລະ ໜີ້ຕ້ອງຮັບຈາກທະນາຄານເມື່ອທວງຖາມ ຫລື ເມື່ອຄົບກຳນົດ 3 ເດືອນ ຫລື ຕ່ຳກວ່ານັ້ນ.

2.6.11 *ຊັບສົມບັດ ແລະ ອຸປະກອນ*

ຊັບສົມບັດ ແລະ ອຸປະກອນ (ລວມມີທັງອຸປະກອນ ທີ່ຢູ່ພາຍໃຕ້ການເຊົ່າດຳເນີນງານເຊິ່ງທະນາຄານເປັນຜູ້ໃຫ້ເຊົ່າ) ແມ່ນຖືກກຳນົດຕາມຕົ້ນທຶນ ບໍ່ລວມຕົ້ນທຶນການບໍລິການປະຈຳວັນ ລົບ ຄ່າຫລ້ຽຫ້ຽນສະສົມ ແລະ ຄ່າເຊື່ອມມູນຄ່າສະສົມ. ການປ່ຽນແປງອາຍຸການນຳໃຊ້ແມ່ນຈະເຮັດໃຫ້ມີການປ່ຽນແປງວິທີການ ແລະ ໄລຍະຫັກຄ່າຫລ້ຽຫ້ຽນເຊິ່ງຈະເຮັດໃຫ້ມີການປ່ຽນແປງທາງດ້ານນະໂຍບາຍບັນຊີ.

ຄ່າຫລ້ຽຫ້ຽນແມ່ນຖືກຄິດໄລ່ແບບວິທີສະເໝີຕົ້ວໂດຍການຫານມູນຄ່າຕົ້ນທຶນຂອງຊັບສົບບັດ ແລະ ອຸປະກອນກັບອາຍຸການນຳໃຊ້ຂອງພວກມັນ. ອັດຕາການຫັກຄ່າຫລ້ຽຫ້ຽນມີລາຍລະອຽດຂ້າງລຸ່ມນີ້:

ອາຄານ ແລະ ການສ້ອມແປງອາຄານ	5%
ເຄື່ອງໃຊ້ຫ້ອງການ	**20**%
ເຟີນີເຈີ ແລະ ສິ່ງຕິດຕັ້ງ	**2**0%
ພາຫະນະ	20%

ຊັບສົມບັດ ແລະ ອຸປະກອນຈະບໍ່ຖືກຮັບຮູ້ເມື່ອເວລາມີການຂາຍອອກ ຫລື ບໍ່ສາມາດນຳໃຊ້ໄດ້ອີກແລ້ວ. ກຳໄລ ແລະ ຂາດທຶນທັງໝົດທີ່ເກີດຂຶ້ນຈາກການບໍ່ຮັບຮູ້ຂອງຊັບສົມບັດ (ໄດ້ຄິດໄລ່ເປັນສ່ວນຕ່າງລະຫວ່າງການຂາຍອອກ ແລະ ມູນຄ່າຍັງເຫຼືອຕາມບັນຊີຂອງຊັບສົມບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບອື່ນໆຈາກການດຳເນີນງານ" ໃນໃບລາຍງານຜົນໄດ້ຮັບລວມກິດຈະການ ຂອງໄລຍະທີ່ມີຊັບສົມບັດຖືກຂາຍອອກ.

2.6.12 *ຊັບສົມບັດຄົງທີ່ບໍ່ມີຕົວຕົນ*

ຊັບສົມບັດຄົງທີ່ບໍ່ມີຕົວຕົນຂອງທະນາຄານປະກອບດ້ວຍ ສິດນຳໃຊ້ທີ່ດິນ ແລະ ຊອບແວ.

ຊັບສົມບັດຄົງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ເມື່ອຕົ້ນທຶນຂອງຊັບສົມບັດຄົງທີ່ສາມາດປະເມີນໄດ້ຢ່າງແນ່ນອນ ແລະ ມັນຈະສາມາດສ້າງຜົນປະໂຫຍດໃຫ້ແກ່ທະນາຄານໃນອະນາຄົດ

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.12 ຊັບສິນບັດຄົງທີ່ບໍ່ມີຕົວຕົນ (ຕໍ່)

ຊັບສິນບັດຄົງທີ່ທະນາຄານຍຶດມາໄດ້ຈະຖືກປະເມີນມູນຄ່າຕົ້ນທຶນເບື້ອງຕົ້ນ. ຕົ້ນທຶນຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ໄດ້ມາຈາກການລວມທຸລະກິດຈະຖືກຮັບຮູ້ຕາມມູນຄ່າຍຸດຕິທຳໃນມື້ທີ່ໄດ້ມາ. ຕໍ່ຈາກນັ້ນ, ຊັບສິນບັດຄົງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ໂດຍການເອົາຕົ້ນທຶນລົບໃຫ້ຄ່າເຊື່ອມສະສົມ.

ອາຍຸການນຳໃຊ້ຂອງຊັບສິນທີ່ບໍ່ມີຕົວຕົນ ແມ່ນໄດ້ຖືກປະເມີນ ໂດຍຈັດເປັນ ມີກຳນົດ ແລະ ບໍ່ມີກຳນົດ. ຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນຖືກຫັກຄ່າເຊື່ອມຕາມອາຍຸການນຳໃຊ້. ໄລຍະຂອງການຫັກຄ່າເຊື່ອມ ແລະ ວິທີການຫັກຄ່າເຊື່ອມສຳລັບຊັບສິນທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ກຳນົດຈະຖືກທົບທວນຄືນເປັນຢ່າງນ້ອຍສຸດໃນທ້າຍປີການບັນຊີ. ການປ່ຽນແປງອາຍຸການນຳໃຊ້ຄາດຄະເນແມ່ນຈະໄດ້ລົງບັນຊີເປັນການປ່ຽນແປງໄລຍະ ແລະ ວິທີຂອງການຫັກຄ່າເຊື່ອມ, ຕາມຄວາມ ເໝາະສົມ ແລະ ຖືເປັນການປ່ຽນແປງການຄາດຄະເນໃນບັນຊີ. ລາຍຈ່າຍກ່ຽວກັບການຫັກຄ່າເຊື່ອມຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນໄດ້ຖືຮັບຮູ້ໃນໃບລາຍງານຜົນໄດ້ຮັບໃນໝວດຂອງລາຍຈ່າຍທີ່ພົວພັນກັບຊັບສິນທີ່ບໍ່ມີຕົວຕົນ.

ຄ່າເຊື່ອມຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າເຊື່ອມແບບສະໝ່ຳສະເໝີຕົວເພື່ອຫຼຸດຕົ້ນທຶນຂອງຊັບສິນທີ່ບໍ່ມີຕົວຕົນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອັດຕາຄາດຄະເນການຫັກຄ່າເຊື່ອມມີດັ່ງນີ້:

► ສິດໃນການນຳໃຊ້ທີ່ດິນ	ບໍ່ໄດ້ຫັກຄ່າເຊື່ອມ
► ຊອບແວ	5 ປີ

ສິດນຳໃຊ້ທີ່ດິນຂອງທະນາຄານບໍ່ໄດ້ຖືກຫັກຄ່າເຊື່ອມເນື່ອງຈາກທີ່ດິນບໍ່ໄດ້ມີຂອບເຂດຂອງອາຍຸການນຳໃຊ້ ແລະ ບໍ່ໄດ້ຖືກອະນຸຍາດໃຫ້ຫັກຄ່າເຊື່ອມຈາກເຈົ້າໜ້າທີ່ຂອງ ສປປ ລາວ.

2.6.13 ການເຊື່ອມມູນຄ່າຂອງຊັບສິນອື່ນໆທີ່ບໍ່ແມ່ນທາງການເງິນ

ທະນາຄານປະເມີນນະມື້ເຮັດບົດລາຍງານ ວ່າມີຊັບສິນໃດທີ່ມີການເຊື່ອມຄ່າ ຫລື ບໍ່. ຖ້າມີ ຫລື ເມື່ອມີຄວາມຈຳເປັນເຮັດການທົດສອບການ ເຊື່ອມຄ່າຊັບສິນປະຈຳປີ, ທະນາຄານປະເມີນຈຳນວນເງິນທີ່ສາມາດເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸດຕິທຳຂອງຊັບສິນ ຫຼື ມູນຄ່າຍຸດຕິທຳຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາ ຂອງຊັບສິນ ຫຼື ມູນຄ່າຂອງ CGU ຫລາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເຊື່ອມຄ່າ ແລະ ຈະຫຼຸດ ມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ຈະຫຼຸດກະແສເງິນສົດໃນອະນາຄົດລົງມາເປັນມູນຄ່າປັດຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫລຸດກ່ອນອາກອນ ທີ່ສະທ້ອນໃຫ້ເຫັນເງື່ອນໄຂຂອງການປະເມີນຕະຫລາດໃນປັດຈຸບັນຂອງມູນຄ່າຂອງເງິນຕາມເວລາ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸດຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດຕາມຫລາຍໆວິທີການຕີມູນຄ່າ ເຊັ່ນ: ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບບໍລິສັດໃນເຄືອ ຫລື ຕົວຊີ້ບອກມູນຄ່າຍຸດຕິທຳອື່ນໆ.

ສຳລັບຊັບສິນບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ເຮັດບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເຊື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫລື ອາດຫລຸດລົງ. ຖ້າຫາກມີຕົວຊີ້ບອກ, ທະນາຄານຈະຄາດຄະເນຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເຊື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນມີການປ່ຽນແປງໃນການກຳນົດມູນຄ່າໜີ້ຕ້ອງຮັບຂອງຊັບສິນນັບຕັ້ງແຕ່ການເຊື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ເງິນແຮຖືກສ້າງຂຶ້ນສຳລັບສ່ວນຕ່າງລະຫວ່າງຍອດຍົກມາ ແລະ ຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້, ຫລື ບໍ່ເກີນມູນຄ່າຍອດຍົກມາທີ່

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.13 *ການເຊື່ອມມູນຄ່າຂອງຊັບສິນອື່ນໆທີ່ບໍ່ແມ່ນທາງການເງິນ* (ຕໍ່)

ຖືກກຳນົດ, ຫັກລົບຄ່າຫລຸ້ຍຫ້ຽນ, ບໍ່ມີການເຊື່ອມຄ່າເກີດຂຶ້ນສຳລັບຊັບສິນໃນໄລຍະຜ່ານມາ. ເງິນແຮທີ່ເກັບຄືນມາໄດ້ຈະຖືກຮັບ ຮູ້ໃນໃບລາຍງານຜົນໄດ້ຮັບລວມກິດຈະການ.

2.6.14 *ເງິນແຮສຳລັບໜີ້ສິນທີ່ອາດເກີດຂຶ້ນ*

ເງິນແຮສຳລັບໜີ້ສິນທີ່ອາດເກີດຂຶ້ນ ແມ່ນຖືກຮັບຮູ້ເມື່ອທະນາຄານມີພັນທະໃນປັດຈຸບັນ (ທາງກົດໝາຍ ຫລື ຍອມຮັບໂດຍທົ່ວໄປ) ເຊິ່ງມີຜົນມາຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີກະແສລາຍຈ່າຍ ໄຫລອອກ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວຕ້ອງເຊື່ອຖືໄດ້. ລາຍຈ່າຍທີ່ຜູກພັນກັບເງິນແຮນັ້ນໄດ້ລາຍງານເຂົ້າໃນໃບລາຍງານຜົນໄດ້ຮັບລວມກິດຈະການ, ຫຼັງຫັກລ້າງໃຫ້ການຊຳລະຄືນ.

2.6.15 *ອາກອນກຳໄລ*

ອາກອນໃນປີ

ຊັບສິນ ແລະ ໜີ້ສິນທາງດ້ານອາກອນສຳລັບໄລຍະປັດຈຸບັນ ແລະ ໄລຍະກ່ອນ ແມ່ນຖືກວັດແທກຕາມມູນຄ່າທີ່ຄາດການໄວ້ເພື່ອການເກັບກູ້ເງິນຄືນ ຫລື ຊຳລະເງິນໃຫ້ແກ່ເຈົ້າໜ້າທີ່. ອັດຕາອາກອນ ແລະ ກົດໝາຍອາກອນທີ່ນຳໃຊ້ເພື່ອຄິດໄລ່ຈຳນວນເງິນແມ່ນຖືກກຳນົດ ແລະ ຖືກນຳໃຊ້ນະວັນທີຂອງໃບລາຍງານຖານະການເງິນສະເພາະການກິດຈະການ.

ອາກອນເຍື້ອນຊຳລະ

ອາກອນເຍື້ອນຊຳລະຖືກຄິດໄລ່ ໂດຍນຳໃຊ້ວິທີຄິດໄລ່ສ່ວນຜິດດ່ຽງຊື່ອຄາວທີ່ອະນຸຍາດໃຫ້ຫັກ ນະມື້ລາຍງານ ລະຫວ່າງອາກອນພື້ນຖານຂອງຊັບສິນ ແລະ ໜີ້ສິນ ແລະ ຍອດຍົກມາດັ່ງກ່າວເພື່ອເຮັດເອກະສານລາຍງານການເງິນ. ໜີ້ສິນອາກອນເຍື້ອນຊຳລະແມ່ນຖືກຮັບຮູ້ເປັນສ່ວນຜິດດ່ຽງຊື່ອຄາວຖືກເສຍອາກອນຕໍ່ໜ້າ, ຍົກ ເວັ້ນ:

- ເມື່ອໜີ້ສິນອາກອນເຍື້ອນຊຳລະເພີ່ມຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫລື ໜີ້ສິນ ໃນທຸລະກຳທີ່ໃນເວລານັ້ນ ທຸລະກຳບໍ່ມີຜົນກະທົບ ຕໍ່ກຳໄລທາງດ້ານບັນຊີ ຫລື ກຳໄລ ແລະ ຂາດທຶນທີ່ຖືກອາກອນ.
- ອີງຕາມສ່ວນຕ່າງຂອງອາກອນຊື່ອຄາວ ເປັນສ່ວນໜຶ່ງຂອງການລົງທຶນໃນບັນດາສາຂາ, ບໍລິສັດໃນເຄືອ ແລະ ຜົນປະໂຫຍດຈາກບໍລິສັດຮ່ວມທຶນ, ເມື່ອຮອດເວລາເກັບຄືນ ສ່ວນຕ່າງອາກອນຊື່ອຄາວ ຈະສາມາດເກັບໄດ້ ແລະ ອາກອນດັ່ງກ່າວກ່ຳຈະບໍ່ຖືກເກັບຄືນໃນອານະຄົດ.

ຊັບສິນອາກອນເຍື້ອນຊຳລະແມ່ນໃຊ້ສຳລັບບັນດາລາຍຈ່າຍທີ່ຍົກເວັ້ນອາກອນ, ຍອດຍົກໄປຂອງອາກອນທີ່ຈ່າຍເກີນ ແລະ ອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນ, ໝາຍຄວາມວ່າອາກອນກຳໄລຈະຖືກຄິດໄລ່ໂດຍຫັກບັນດາລາຍຈ່າຍທີ່ຍົກເວັ້ນອາກອນ, ແລະ ຍອດຍົກໄປຂອງອາກອນທີ່ຈ່າຍເກີນ ແລະ ອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນນັ້ນສາມາດຍອມຮັບໄດ້, ຍົກເວັ້ນ:

- ເມື່ອຊັບສິນອາກອນເຍື້ອນຊຳລະທີ່ກ່ຽວຂ້ອງກັບບັນດາລາຍຈ່າຍທີ່ບໍ່ຕ້ອງຫັກອາກອນ. ສ່ວນຜິດດ່ຽງເພີ່ມຂຶ້ນຈາກມູນຄ່າຂອງຊັບສິນ ແລະ ໜີ້ສິນທີ່ຖືກຮັບຮູ້ເບື້ອງຕົ້ນໃນລາຍການທີ່ບໍ່ໄດ້ລວມເຂົ້າໃນທຸລະກິດ ແລະ ໃນເວລາທີ່ການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫລື ກຳໄລ ຫລື ຂາດທຶນທາງດ້ານອາກອນ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.15 *ອາກອນກຳໄລ* (ຕໍ່)

ອາກອນເຍື້ອນຊຳລະ (ຕໍ່)

- ອີງຕາມສ່ວນຕ່າງອາກອນຊື່ວຄາວທີ່ສາມາດຫັກອອກໄດ້ ເປັນສ່ວນໜຶ່ງຂອງການລົງທຶນໃນບັນດາສາຂາ, ບໍລິສັດລູກ ແລະ ຜົນປະໂຫຍດຈາກບໍລິສັດຮ່ວມທຶນ, ຊັບສິນ ແລະ ໜີ້ສິນອາກອນເຍື້ອນຊຳລະແມ່ນຖືກຮັບຮູ້ພຽງວ່າສ່ວນຕ່າງ ອາກອນດັ່ງກ່າວນັ້ນຈະບໍ່ຖືກເກັບຄືນໃນອານາຄົດ ແລະ ກຳໄລທີ່ຖືກເສຍອາກອນຈະເກີດຂຶ້ນເຊິ່ງສ່ວນຕ່າງອາກອນ ຊື່ວຄາວຈະບໍ່ສາມາດຖືກຫັກອອກ.

ມູນຄ່າຍອດຍົກມາຂອງໜີ້ຕ້ອງຮັບອາກອນເຍື້ອນຊຳລະຈະຖືກກວດສອບເປັນແຕ່ລະຄັ້ງ ຕາມວັນທີຂອງມື້ເຮັດເອກະສານ ລາຍງານ ແລະ ສ່ວນທີ່ບໍ່ເປັນປະໂຫຍດແກ່ໜີ້ຕ້ອງສິ່ງອາກອນເຍື້ອນຊຳລະຈະຖືກຕັດລົງ ຖ້າໃນກໍລະນີທີ່ລາຍການດັ່ງກ່າວ ໜ້າຈະບໍ່ສາມາດໃຊ້ສິ່ງອາກອນເຍື້ອນຊຳລະເຫລົ່ານີ້. ອາກອນກຳໄລຊັບສິນເຍື້ອນຊຳລະທີ່ບໍ່ຖືກຮັບຮູ້ຈະຖືກປະເມີນຊ້ຳນະມື້ ຂອງໃບລາຍງານຖານະການເງິນ ແລະ ຄາດວ່າມູນຄ່າທີ່ໄດ້ຖືກຮັບຮູ້ຄືນໃໝ່ນັ້ນຈະສາມາດນຳໃຊ້ ແລະ ເມື່ອມີການຄິດໄລ່ ອາກອນກຳໄລໃນອະນາຄົດຈະອະນຸຍາດໃຫ້ເກັບຄືນມູນຄ່າເຫລົ່ານີ້ໄດ້.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງອາກອນເຍື້ອນຊຳລະແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ພາຍໃນໄລຍະທີ່ ມີການຂາຍຊັບສິນ ຫຼື ຊຳລະໜີ້ສິນ, ອີງຕາມອັດຕາອາກອນ (ແລະ ກົດໝາຍສ່ວຍສາອາກອນ) ທີ່ມີການປະກາດໃຊ້ນະມື້ ເຮັດເອກະສານລາຍງານ.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງອາກອນເຍື້ອນຊຳລະຈະຖືກຫັກລ້າງກັນ, ຖ້າຫາກມີສິດການບັງຄັບໃຊ້ທາງກົດໝາຍເພື່ອຫັກລ້າງ ລະຫວ່າງ ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສິ່ງ ອາກອນເຍື້ອນຊຳລະ ແລະ ຕ້ອງເປັນອາກອນເຍື້ອນຊຳລະທີ່ເກີດຂຶ້ນລະຫວ່າງ ຜູ້ເສຍ ອາກອນຜູ້ດຽວກັນ ແລະ ໜ່ວຍງານສ່ວຍສາອາກອນໜ່ວຍງານດຽວກັນ.

2.6.16 *ຊັບສິນທີ່ໄດ້ຮັບໝອບໝາຍອຳນາດ (ຊັບສິນທີ່ທະນາຄານບໍ່ໄດ້ຖືກຳມະສິດ)*

ທະນາຄານ ແລະ ບໍລິສັດໃນເຄືອໄດ້ໃຫ້ບໍລິການກ່ຽວກັບ ກອງທຶນ ແລະ ບໍລິຫານຊັບສິນ ເຊິ່ງເປັນຜົນເຮັດໃຫ້ທະນາຄານໄດ້ ຖືຄອງ ຫຼື ໄດ້ລົງທຶນ ໃນນາມລູກຄ້າຂອງທະນາຄານ. ຊັບສິນດັ່ງກ່າວບໍ່ໄດ້ຖືກສະແດງໃນເອກະສານລາຍງານການເງິນລວ ມກິດຈະການ ເນື່ອງຈາກວ່າຊັບສິນດັ່ງກ່າວບໍ່ແມ່ນຊັບສິນຂອງທະນາຄານ ແລະ ບໍລິສັດໃນເຄືອ.

2.6.17 *ຄັງສຳຮອງຕ່າງໆ*

ຄັງສຳຮອງຖືກບັນທຶກເປັນທຶນ ຢູ່ໃນ ໃບລາຍງານຖານະການເງິນລວມກິດຈະການ ຂອງທະນາຄານ, ເຊິ່ງລວມມີ:

- ເງິນແຮສຳລັບຫລັກຊັບມີໄວ້ເພື່ອຂາຍ, ເຊິ່ງປະກອບດ້ວຍສ່ວນປ່ຽນແປງຂອງມູນຄ່າຍຸດຕິທຳຂອງຫລັກຊັບມີໄວ້ເພື່ອ ຂາຍ.
- ຄັງສະສົມຕາມລະບຽບການ ແລະ ຄັງອື່ນໆ, ເຊິ່ງຖືກສ້າງຂຶ້ນຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ, ລາຍ ລະອຽດຢູ່ບົດອະທິບາຍຊ້ອນທ້າຍ 27.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.18 *ຜົນປະໂຫຍດຂອງພະນັກງານ*

ຜົນປະໂຫຍດຫລັງອອກການ

ຜົນປະໂຫຍດຫລັງອອກການ ແມ່ນຈະຖືກຈ່າຍໃຫ້ພະນັກງານທະນາຄານ ຜູ່ທີ່ກະສຽນ ໂດຍຄັງສຳຮອງເງິນບຳເນັດ ທີ່ ທະນາຄານສ້າງຂຶ້ນ. ນະໂຍບາຍຂອງທະນາຄານແມ່ນຫັກຈາກເງິນເດືອນພື້ນຖານຂອງພະນັກງານທຸກໆເດືອນ ເພື່ອເກັບ ຮັກສາໄວ້. ປັດຈຸບັນນີ້ ແມ່ນໃຊ້ອັດຕາ 8.00% ຈາກເງິນເດືອນພື້ນຖານຂອງພະນັກງານໃນແຕ່ລະເດືອນ. ທະນາຄານບໍ່ມີ ພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບຫລັງອອກການຂອງພະນັກງານ.

ຜົນປະໂຫຍດຈາກການຍົກເລີກສັນຍາ

ອີງຕາມມາດຕາ 29 ຂອງກົດໝາຍວ່າດ້ວຍແຮງງານສະບັບປັບປຸງ ທີ່ອອກໂດຍປະທານປະເທດແຫ່ງ ສປປ ລາວ ໃນວັນທີ 16 ມັງກອນ 2007, ທະນາຄານມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ່ທີ່ຖືກຍົກເລີກສັນຍາຍ້ອນກໍລະນີດັ່ງລຸ່ມນີ້:

► ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫລື ມີສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
► ກໍລະນີທະນາຄານພິຈາລະນາວ່າຈຳເປັນຕ້ອງຫລຸດພະນັກງານເພື່ອປັບປຸງອົງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານ ແຮງງານ.

ສຳລັບການສິ້ນສຸດສັນຍາຈ້າງງານຂອງລາຍລະອຽດທີ່ກ່າວຂ້າງເທິງນັ້ນ, ທະນາຄານຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານ ໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກໄລ່ອອກໄດ້ຮັບກ່ອນອອກວຽກ ສຳລັບພະນັກງານ ຜູ່ທີ່ເຮັດວຽກກັບທະນາຄານໜ້ອຍກວ່າ 3 ປີ ແລະ ຄິດໄລ່ໃນອັດ 15% ສຳລັບພະນັກງານຜູ່ທີ່ເຮັດວຽກກັບທະນາຄານ ຫລາຍກວ່າ 3 ປີ. ນະວັນທີ 30 ມິຖຸນາ 2015 ບໍ່ມີພະນັກງານທະນາຄານຖືກໄລ່ອອກຍ້ອນສາເຫດຂ້າງເທິງດັ່ງນັ້ນ, ທະນາຄານຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນຂອງທະນາຄານ.

2.6.19 *ມາດຕະຖານທີ່ໄດ້ອອກແລ້ວ ແຕ່ຍັງບໍ່ມີຜົນບັງຄັບໃຊ້*

ມາດຕະຖານ ແລະ ການຕີຄວາມໝາຍທີ່ໄດ້ວາງອອກ, ແຕ່ຍັງບໍ່ມີຜົນບັງຄັບໃຊ້, ຈົນຮອດມື້ອອກເອກະສານລາຍງານການເງິນ ສະບັບນີ້ແມ່ນໄດ້ຖືກເປີດເຜີຍຂ້າງລຸ່ມ. ທະນາຄານມີຄວາມຕັ້ງໃຈທີ່ຈະນຳໃຊ້ບັນດາມາດຕະຖານເຫລົ່ານີ້ ເມື່ອມີຜົນນຳໃຊ້ໄດ້ ຢ່າງເປັນທາງການ.

IFRS 9 ເຄື່ອງມືການເງິນ

ໃນເດືອນ ກໍລະກົດ 2014, ຄະນະກຳມະການກຳນົດມາດຕະຖານບັນຊີສາກົນ IASB ໄດ້ປະກາດໃຊ້ມາດຕະຖານສາກົນ ດ້ານການລາຍງານ ເລກທີ 9 ເຄື່ອງມືທາງການເງິນ ເຊິ່ງໄດ້ມີຜົນຕໍ່ເຄື່ອງມືທາງການເງິນທັງໝົດ ແລະ ປ່ຽນແທນມາດຕະຖານ ສາກົນດ້ານການລາຍງານການເງິນ ເລກທີ 39 ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການວັດແທກ ແລະ ມາດຕະຖານ ສາກົນດ້ານການລາຍງານການເງິນ ເລກທີ 9 ສະບັບເກົ່າ. ມາດຕະຖານໄດ້ແນະນຳວິທີໃນການຈັດປະເພດ ແລະ ການ ວັດແທກມູນຄ່າ, ການຫັກຄ່າເຊື່ອມ ແລະ ການບັນຊີ. ມາດຕະຖານສາກົນດ້ານການລາຍງານການເງິນ ເລກທີ 9 ມີຜົນບັງຄັບ ໃຊ້ຫຼັງຈາກວັນທີ 1 ມັງກອນ 2018. ຮູບແບບການລາຍງານແບບເກົ່າແມ່ນຕ້ອງຖືກນຳໃຊ້, ແຕ່ຂໍ້ມູນສົມທຽບແມ່ນບໍ່ໄດ້ ບັງຄັບໃຊ້. ຮູບແບບການລາຍງານເກົ່າຂອງມາດຕະຖານສາກົນດ້ານການລາຍງານ ເລກທີ 9 (2009, 2010 ແລະ 2013) ແມ່ນຖືກອະນຸຍາດ ຖ້າວັນທີໃນການເລີ່ມໃຊ້ແມ່ນກ່ອນວັນທີ 1 ກຸມພາ 2015. ການຮັບເອົາມາດຕະຖານສາກົນດ້ານການ ລາຍງານ ເລກທີ 9 ຈະມີຜົນຕໍ່ການຈັດປະເພດ ແລະ ການວັດແທກມູນຄ່າຂອງຊັບສິນທາງການເງິນຂອງທະນາຄານ, ແຕ່ບໍ່ມີ ຜົນໃນການຈັດປະເພດ ແລະ ການວັດແທກມູນຄ່າຂອງໜີ້ສິນຂອງທະນາຄານ.

3. ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2014*
	ລ້ານກີບ	*ລ້ານກີບ*
ລາຍຮັບດອກເບ້ຍຈາກລູກຄ້າ	453,090	453,192
ລາຍຮັບດອກເບ້ຍຈາກທະນາຄານອື່ນ	3,867	10,677
ລາຍຮັບດອກເບ້ຍຈາກ ການລົງທຶນໃນຫຼັກຊັບ	40,976	22,564
ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍອື່ນໆ	21,355	27,787
	519,288	**514,220**

4. ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2014*
	ລ້ານກີບ	*ລ້ານກີບ*
ລາຍຈ່າຍດອກເບ້ຍສຳລັບເງິນຝາກຂອງທະນາຄານອື່ນ	13,603	7,372
ລາຍຈ່າຍດອກເບ້ຍສຳລັບເງິນຝາກຂອງລູກຄ້າ	392,750	304,575
	406,353	**311,947**

5. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2014*
	ລ້ານກີບ	*ລ້ານກີບ*
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ການບໍລິການຊຳລະສະສາງ	50,241	43,992
ກິດຈະກຳສິນເຊື່ອ	26,105	21,569
ກິດຈະກຳອື່ນໆ	1,324	1,467
	77,670	**67,028**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ການບໍລິການຊຳລະສະສາງ	(5,529)	(4,961)
ກິດຈະກຳອື່ນໆ	(954)	(7,608)
	(6,483)	**(12,569)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**71,187**	**54,459**

6. (ຂາດທຶນ)/ກຳໄລສຸດທິທາງການຄ້າ

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015 ລ້ານກີບ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2014 ລ້ານກີບ*
ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ	22,424	32,877
(ຂາດທຶນ)/ກຳໄລ ຈາກການຊື້ຂາຍເງິນຕາລ່ວງໜ້າ	(287,150)	13,170
ການປ່ຽນແປງໃນມູນຄ່າຍຸດຕິທຳ ຂອງຫຼັກຊັບມີໄວ້ເພື່ອຄ້າ	14	(64)
ລາຍຮັບເງິນປັນຜົນຈາກຫຼັກຊັບມີໄວ້ເພື່ອຄ້າ	30	74
	(264,682)	**46,057**

7. ລາຍຮັບອື່ນໆຈາກການດຳເນີນງານ

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015 ລ້ານກີບ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2014 ລ້ານກີບ*
ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບ	7,709	8,427
ລາຍຮັບອື່ນໆຈາກການບໍລິການທາງການເງິນ	-	235
ກຳໄລຈາກການຂາຍຊັບສິນບໍ່ໝູນວຽນ (*)	358,194	232
ເກັບຄືນໜີ້ສູນທີ່ສະສາງອອກ	1,695	207
ເງິນອຸດໜູນພື້ນຖານໂຄງລ່າງຈາກ BIDV	-	2,164
ອື່ນໆ	274	769
	367,872	**12,034**

(*): ມູນຄ່ານີ້ລວມມີກຳໄລ 355,021 ລ້ານກີບ ຈາກການຂາຍດິນ 36 ຕອນ ໃຫ້ແກ່ ທະນາຄານແຫ່ງ ສປປ ລາວ *(ເບິ່ງລາຍລະອຽດເພີ່ມເຕີມຢູ່ບົດອະທິບາຍຊ້ອນທ້າຍທີ 31)*.

8. ເກັບຄືນ ເງິນແຮ່ຄ່າເຊື່ອມສຳລັບການລົງທຶນທາງການເງິນ

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015 ລ້ານກີບ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2014 ລ້ານກີບ*
ເກັບຄືນເງິນແຮ່ຄ່າເຊື່ອມສຳລັບການລົງທຶນໃນຫຼັກຊັບທີ່ຖືໄວ້ຈົນຄົບກຳນົດ	363	28,289
	363	**28,289**

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ (ຕໍ່)
ນະວັນທີ ແລະ ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015

9. ລາຍຈ່າຍພະນັກງານ

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2014*
	ລ້ານກີບ	*ລ້ານກີບ*
ເງິນເດືອນ	55,248	53,075
ເງິນອຸດໜູນ ແລະ ເງິນຊ່ວຍເຫຼືອອື່ນໆສຳລັບພະນັກງານ	36,697	36,221
ຄ່າໃຊ້ຈ່າຍອື່ນໆ	2,837	2,862
	94,782	**92,158**

10. ລາຍຈ່າຍອື່ນໆໃນການດຳເນີນງານ

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2014*
	ລ້ານກີບ	*ລ້ານກີບ*
ຄ່ານ້ຳມັນ ແລະ ຄ່າການເດີນທາງ	1,716	1,909
ຄ່າການສຶກສາ ແລະ ການເຝິກອົບຮົມ	934	1,246
ຄ່າປະກັນໄພເງິນຝາກ	8,935	1,126
ການສື່ສານ	987	698
ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	4,861	5,354
ຄ່າສ້ອມແປງ ແລະ ບຳລຸງຮັກສາ	6,759	6,476
ຄ່າວັດຖຸອຸປະກອນຕ່າງໆ	2,555	2,879
ຄ່າໄຟຟ້າ ແລະ ນ້ຳປະປາ	3,041	2,718
ຄ່າເຊົ່າຫ້ອງການ	4,060	4,165
ລາຍຈ່າຍອື່ນໆ	7,95**7**	21,045
	41,80*5*	**47,616**

11. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ

	30 ມິຖຸນາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ເງິນສົດໃນກຳມືເປັນເງິນກີບ	1,403,313	983,025
ເງິນສົດໃນກຳມືເປັນເງິນຕາຕ່າງປະເທດ (“FC”)	1,242,819	1,015,741
ແຊັກ	-	13
ເງິນຝາກຢູ່ ທຫລ:		
- ເງິນຝາກພາກບັງຄັບ	1,069,307	925,320
- ເງິນຝາກກະແສລາຍວັນ	5,313,088	4,322,473
- ເງິນຝາກມີກຳນົດ	-	24,655
- ດອກເບ້ຍຄ້າງຮັບ	-	27
	9,028,527	**7,271,254**

ຍອດເຫລືອກັບທະນາຄານກາງປະກອບດ້ວຍດ້ວຍບັນຊີເງິນຝາກເພື່ອການຊຳລະສະສາງ, ເງິນຝາກພາກບັງຄັບ ແລະ ເງິນຝາກ ມີ ກຳນົດ. ຍອດເຫລືອເຫລົ່ານີ້ບໍ່ມີດອກເບ້ຍ.

ພາຍໃຕ້ລະບຽບການຂອງທະນາຄານກາງ, ທະນາຄານຖືກຮຽກຮ້ອງໃຫ້ຮັກສາຖັງສະສົມເງິນສົດກັບທະນາຄານກາງໃນຮູບ ແບບເງິນຝາກບັງຄັບ, ເຊິ່ງຖືກຄິດໄລ່ 5.00% ສຳລັບສະກຸນເງິນກີບ ແລະ 10.00% ສຳລັບສະກຸນເງິນຕ່າງປະເທດ, 2 ອາທິດຕໍ່ຄັ້ງ (2014: 5.00% ແລະ 10.00%) ຂອງເງິນຝາກລູກຄ້າທີ່ມີມື້ຄົບກຳນົດຕ່ຳກວ່າ 12 ເດືອນ. ພາຍໃນໄລຍະ ດັ່ງກ່າວ ທະນາຄານໄດ້ຮັກສາຍອດເງິນຝາກພາກບັງຄັບໃນມູນຄ່າທີ່ຖືກຕ້ອງຕາມລະບຽບຂອງທະນາຄານກາງ.

12. ໜີ້ຕ້ອງຮັບຈາກທະນາຄານອື່ນ

	30 ມິຖຸນາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຫຍັດ	**1,517,402**	**2,268,163**
- ເປັນເງິນກີບ	35,711	14,146
- ເປັນເງິນຕາຕ່າງປະເທດ	1,481,691	2,254,017
ເງິນຝາກມີກຳນົດ	**679,515**	**1,495,219**
- ເປັນເງິນກີບ	195,000	20,000
- ເປັນເງິນຕາຕ່າງປະເທດ	484,515	1,475,219
ເງິນກູ້ໃຫ້ແກ່ທະນາຄານອື່ນ	**-**	**10,100**
- ເປັນເງິນກີບ	-	-
- ເປັນເງິນຕາຕ່າງປະເທດ	-	10,100
ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ	**792**	**716**
	2,197,709	**3,774,198**

13. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ

	30 ມິຖຸນາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າທັງໝົດ	9,604,554	9,728,396
ດອກເບ້ຍຄ້າງຮັບ	89,308	93,822
ລົບ: ເງິນແຮສຳລັບການສູນເສຍເງິນກູ້ *(ບົດອະທິບາຍເລກທີ14)*	(282,275)	(199,313)
	9,411,587	**9,622,905**

ອັດຕາດອກເບ້ຍສຳລັບເງິນກູ້ພາຍໃນໄລຍະ ມີຄືດັ່ງລຸ່ມນີ້:

	ສຳລັບໄລຍະ 6 ເດືອນ ສິ້ນ ສຸດ 30 ມິຖຸນາ 2015	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014*
	ອັດຕາດອກເບ້ຍ % ຕໍ່ປີ	*ອັດຕາດອກເບ້ຍ % ຕໍ່ປີ*
ເງິນກູ້ ແລະ ເງິນລ່ວງໜ້າເປັນເງິນກີບ	*9.00% - 18.00%*	*9.00% - 16.00%*
ເງິນກູ້ ແລະ ເງິນລ່ວງໜ້າເປັນເງິນໂດລາ	*6.50% - 13.00%*	*5.50% - 14.00%*
ເງິນກູ້ ແລະ ເງິນລ່ວງໜ້າເປັນເງິນບາດ	*7.50% - 12.00%*	*7.75% - 12.75%*

ການໄຈ້ແຍກຕາມສະກຸນເງິນ:

	30 ມິຖຸນາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ເງິນກູ້ ແລະ ເງິນລ່ວງໜ້າເປັນເງິນ ກີບ	3,975,715	4,153,691
ເງິນກູ້ ແລະ ເງິນລ່ວງໜ້າເປັນເງິນ ໂດລາ	4,313,922	4,232,963
ເງິນກູ້ ແລະ ເງິນລ່ວງໜ້າເປັນເງິນ ບາດ	1,314,917	1,341,742
	9,604,554	**9,728,396**

ການໄຈ້ແຍກຕາມມື້ຄົບກຳນົດເດີມ:

	30 ມິຖຸນາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ເງິນກູ້ໄລຍະສັ້ນ	2,438,712	2,706,990
ເງິນກູ້ໄລຍະກາງ	5,489,802	5,393,627
ເງິນກູ້ໄລຍະຍາວ	1,676,040	1,627,779
	9,604,554	**9,728,396**

13. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ (ຕໍ່)

ເງິນກູ້ນະທ້າຍໄລຍະປະກອບດ້ວຍເງິນກູ້ໃຫ້ແກ່ແຕ່ລະຂະແໜງທຸລະກິດ ດັ່ງລຸ່ມນີ້:

	30 ມິຖຸນາ 2015		*31 ທັນວາ 2014*	
	ລ້ານກີບ	*%*	*ລ້ານກີບ*	*%*
ຂະແໜງ ອຸດສາຫະກຳ	1,877,424	19.55%	1,545,510	15.89%
ຂະແໜງ ກໍ່ສ້າງ	3,052,827	31.79%	3,385,094	34.80%
ຂະແໜງ ປະກອບວັດຖຸເຕັກນິກ	37,810	0.39%	53,409	0.55%
ຂະແໜງ ກະສິກຳ - ປ່າໄມ້	34,756	0.36%	39,021	0.40%
ຂະແໜງ ການຄ້າ	2,574,878	26.81%	2,621,496	26.95%
ຂະແໜງ ຂົນສົ່ງໄປສະນີ	706,384	7.35%	713,939	7.34%
ຂະແໜງ ບໍລິການ	1,143,564	11.91%	1,178,883	12.12%
ຂະແໜງ ຫັດຖະກຳ	4,329	0.05%	4,541	0.04%
ຂະແໜງ ອື່ນໆ	172,582	1.80%	186,503	1.91%
	9,604,554	**100%**	**9,728,396**	**100%**

14. ເງິນແຮສຳລັບການສູນເສຍເງິນກູ້ທີ່ໃຫ້ລູກຄ້າ

ສ່ວນປ່ຽນແປງໃນເງິນແຮສຳລັບການສູນເສຍເງິນກູ້ທີ່ໃຫ້ລູກຄ້າ ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດ ນະວັນທີ 30 ມິຖຸນາ 2015 ມີດັ່ງລຸ່ມນີ້:

	ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດ ນະວັນທີ 30 ມິຖຸນາ 2015 *ລ້ານກີບ*
ຍອດຍົກມາ	**199,313**
ລາຍຈ່າຍສຸດທິທີ່ຫັກເປັນເງິນແຮສຳລັບການສູນເສຍເງິນກູ້ພາຍໃນໄລຍະ	83,538
ໜີ້ບໍ່ເກີດດອກອອກຜົນທີ່ສະສາງອອກ	-
ສ່ວນຜິດຜ່ຽງຈາກອັດຕາແລກປ່ຽນ	(576)
ຍອດເຫຼືອທ້າຍ	**282,275**

ລາຍລະອຽດຂອງການຈັດຊັ້ນເງິນກູ້ ມີດັ່ງລຸ່ມນີ້:

	30 ມິຖຸນາ 2015		*31 ທັນວາ 2014*	
	ຕົ້ນທຶນ ລ້ານກີບ	*ເງິນແຮ ລ້ານກີບ*	*ຕົ້ນທຶນ ລ້ານກີບ*	*ເງິນແຮ ລ້ານກີບ*
ຄ່າເຊື່ອມຈາກການປະເມີນເງິນກູ້ເປັນລາຍບຸກຄົນ	2,524,082	262,810	2,497,162	195,534
ຄ່າເຊື່ອມຈາກການປະເມີນເງິນກູ້ເປັນກຸ່ມ	7,080,472	19,465	7,241,334	3,779
	9,604,554	**282,275**	**9,738,496**	**199,313**

15. ການລົງທຶນທາງການເງິນປະເພດມີໄວ້ເພື່ອຂາຍ

	30 ມິຖຸນາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ຫລັກຊັບປະເພດທຶນ ທີ່ອອກໂດຍນິຕິບຸກຄົນພາຍໃນປະເທດ (*)	204,214	202,776
ຫຼັກຊັບທີ່ອອກໂດຍສະຖາບັນສິນເຊື່ອຕ່າງປະເທດ (**)	19,030	19,556
	223,244	**222,332**
ຄ່າເຊື່ອມມູນຄ່າສຳລັບການລົງທຶນມີໄວ້ເພື່ອຂາຍ	-	-
	223,244	**222,332**

(*) ຫລັກຊັບປະເພດທຶນ ທີ່ອອກໂດຍນິຕິບຸກຄົນພາຍໃນປະເທດ ແມ່ນຮຸ້ນຂອງບໍລິສັດ ໄຟຟ້າລາວ (EDL) ທີ່ມີມູນຄ່າໜ້າ ບັດແມ່ນ 123,679 ລ້ານກີບ (ວັນທີ 31 ທັນວາ 2014: 123,679 ລ້ານກີບ).

(**) ຫຼັກຊັບທີ່ອອກໂດຍສະຖາບັນສິນເຊື່ອຕ່າງປະເທດ ແມ່ນໃບຢັ້ງຢືນກອງທຶນລວມ ທີ່ອອກໂດຍ CIMB ເຊິ່ງມີມູນຄ່າໜ້າ ບັດ ເທົ່າ 19,407 ລ້ານກີບ (ວັນທີ 31 ທັນວາ 2014: 19,801 ລ້ານກີບ).

16. ການລົງທຶນທາງການເງິນປະເພດຖືໄວ້ຈົນຄົບກຳນົດ

	30 ມິຖຸນາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ມູນຄ່າຕາມລາຄາທຶນຕັດຈຳໜ່າຍຂອງພັນທະບັດຄັງເງິນທີ່ອອກໂດຍກະຊວງ ການເງິນ	976,490	759,871
ມູນຄ່າຕາມລາຄາທຶນຕັດຈຳໜ່າຍຂອງພັນທະບັດທີ່ອອກໂດຍກະຊວງການເງິນ	539,753	510,655
	1,516,243	**1,270,526**
ຄ່າເຊື່ອມມູນຄ່າຂອງການລົງທຶນໃນຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ	(3,431)	(3,794)
- ຄ່າເຊື່ອມມູນຄ່າຂອງພັນທະບັດຄັງເງິນທີ່ອອກໂດຍກະຊວງການເງິນ	*(1,761)*	*(856)*
- ຄ່າເຊື່ອມມູນຄ່າຂອງພັນທະບັດທີ່ອອກໂດຍກະຊວງການເງິນ	*(1,670)*	*(2,938)*
	1,512,812	**1,266,732**

16. ການລົງທຶນທາງການເງິນຖືໄວ້ຈົນຄົບກຳນົດ (ຕໍ່)

16.1. ພັນທະບັດຄັງເງິນ ທີ່ອອກໂດຍ ກະຊວງການເງິນ

ລາຍລະອຽດຂອງພັນທະບັດຄັງເງິນ ນະວັນທີ 30 ມິຖຸນາ 2015 ມີດັ່ງນີ້:

ໄລຍະເວລາ	*ມື້ທີ່ຊື້*	*ມື້ຄົບກຳນົດ*	*ມູນຄ່າໜ້າບັດ*	*ມູນຄ່າຕາມວິທີຫຼຸດຕົ້ນທຶນລົງ*	*ອັດຕາດອກເບ້ຍຕໍ່ປີ (ຕາມໜ້າພັນທະບັດ)*
1 ປີ	16 ກັນຍາ 14	16 ກັນຍາ 15	50,000	51,762	4.50%
1 ປີ	8 ເມສາ 14	8 ເມສາ 16	100,000	100,207	4.50%
1 ປີ	26 ສິງຫາ 14	26 ສິງຫາ 15	100,000	103,784	4.50%
1 ປີ	30 ຫັນວາ 14	30 ຫັນວາ 15	200,000	204,438	4.50%
1 ປີ	27 ມິນາ 15	27 ມິນາ 16	300,000	303,447	4.50%
1 ປີ	10 ມິນາ 15	10 ມິນາ 16	73,000	73,839	4.50%
1 ປີ	31 ມິນາ 15	31 ມິນາ 16	50,000	50,550	4.50%
1 ປີ	28 ເມສາ 15	28 ເມສາ 16	20,000	20,152	4.50%
1 ປີ	12 ພຶດສະພາ 15	12 ພຶດສະພາ 16	10,000	10,059	4.50%
1 ປີ	25 ພຶດສະພາ 15	25 ພຶດສະພາ 16	58,000	58,252	4.50%
			961,000	**976,490**	

16.2. ພັນທະບັດທີ່ອອກໂດຍກະຊວງການເງິນ

	30 ມິຖຸນາ 2015 ລ້ານກີບ	*31 ທັນວາ 2014 ລ້ານກີບ*
ພັນທະບັດອ່ອຍໜີ້ສາມແຈ	272,094	*265,511*
ພັນທະບັດເພີ່ມທຶນ	63,834	*64,558*
ພັນທະບັດອື່ນໆ	203,825	180,586
	539,753	**510,655**

ພັນທະບັດອ່ອຍໜີ້ສາມແຈແມ່ນພັນທະບັດທີ່ອອກໂດຍກະຊວງການເງິນເພື່ອຊຳລະສະສາງໜີ້ຂອງກະຊວງການເງິນ ຫລື ສະສາງໜີ້ຂອງລູກຄ້າທີ່ກະຊວງການເງິນເປັນລູກໜີ້. ພັນທະບັດດັ່ງກ່າວ ບໍ່ສາມາດໂອນໃຫ້ຄົນອື່ນ ກະຊວງການເງິນສາມາດຕໍ່ອາຍຸອອກໄປໄດ້ ພັນທະບັດດັ່ງກ່າວມີອາຍຸ 17 ປີ ແລະ ບໍ່ມີດອກເບ້ຍ.

ພັນທະບັດເພີ່ມທຶນທີ່ອອກໂດຍກະຊວງການເງິນແມ່ນ ເພື່ອເພີ່ມທຶນຈົດທະບຽນໃຫ້ແກ່ທະນາຄານ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ມື້ທີ່ຊື້	*ມື້ຄົບກຳນົດ*	*ມູນຄ່າໜ້າບັດ (ລ້ານກີບ)*	*ມູນຄ່າຕາມລາຄາທຶນຕັດຈຳໜ່າຍ*	*ໄລຍະເວລາ*	*ອັດຕາດອກເບ້ຍ (% ຕໍ່ປີ)*
01 ມິນາ 2014	01 ມິນາ 2019	68,600	63,834	5 ປີ	4.00%

16. ການລົງທຶນທາງການເງິນຖືໄວ້ຈົນເຖິງມື້ຄົບກຳນົດ (ຕໍ່)

16.2. ພັນທະບັດທີ່ອອກໂດຍກະຊວງການເງິນ (ຕໍ່)

ອີງຕາມແຈ້ງການ ເລກທີ 1569/ກງ ລົງວັນທີ 09 ມິຖຸນາ 2014, ທະນາຄານໄດ້ຕົກລົງກັບກະຊວງການເງິນ ເພື່ອຊຳລະ 30% ຂອງມູນຄ່າຂອງພັນທະບັດເພີ່ມທຶນ ເຊິ່ງເທົ່າກັບ 29,400 ລ້ານກີບ ໃນເດືອນ ກໍລະກົດ 2014 ແລະ ປັບໂຄງສ້າງຄືນ 70% ເຊິ່ງມີມູນຄ່າເທົ່າກັບ 68,600 ລ້ານກີບ ພ້ອມກັບປັບອັດຕາດອກເບ້ຍໃໝ່ເປັນ 4.00% ຕໍ່ປີ (2014: 4.00%)

ສ່ວນພັນທະບັດອື່ນໆທີ່ອອກໂດຍກະຊວງການເງິນ ແມ່ນພັນທະບັດເພື່ອການກໍ່ສ້າງພື້ນຖານໂຄງລ່າງໃນການດຳເນີນງານຂອງ ໂຄງການທ່າເຮືອ ຫວຸ່ງອາງ (ມີມູນຄ່າລວມທັງໝົດ 46,000 ລ້ານກີບ) ແລະ ໂຄງການກໍ່ສ້າງ ຂອງ ບໍລິສັດ ດີເອັມ (ມີມູນຄ່າ ທັງໝົດ 20,000 ລ້ານກີບ). ລາຍລະອຽດຂອງພັນທະບັດເຫຼົ່ານີ້ ມີດັ່ງລຸ່ມນີ້:

ມື້ຊື້ພັນທະບັດ	*ວັນຄົບກຳນົດ*	*ມູນຄ່າໜ້າ ພັນທະບັດ (ລ້ານກີບ)*	*ມູນຄ່າຕາມລາຄາ ທຶນຕັດຈຳໜ່າຍ (ລ້ານກີບ)*	*ອັດຕາດອກເບ້ຍ (% ຕໍ່ປີ)*
5 ທັນວາ 2011	5 ທັນວາ 2016	46,000	46,238	8.00%
2 ມີນາ 2013	20 ທັນວາ 2015	50,000	50,123	3.00%
25 ທັນວາ 2013	10 ຕຸລາ 2015	2,000	1,997	3.50%
16 ສິງຫາ 2012	12 ມີນາ 2016	20,000	19,315	3.00%
7 ພຶດສະພາ 2014	12 ພະຈິກ 2015	8,000	7,344	3.50%
30 ກໍລະກົດ 2014	31 ກໍລະກົດ 2015	5,000	5,063	3.50%
29 ກັນຍາ 2014	7 ພຶດສະພາ 2016	22,000	18,762	3.50%
29 ກັນຍາ 2014	11 ມິຖຸນາ 2016	9,000	7,604	3.50%
29 ກັນຍາ 2014	12 ມິຖຸນາ 2016	25,000	21,118	3.50%
29 ກັນຍາ 2014	13 ມິຖຸນາ 2016	1,000	845	3.50%
29 ກັນຍາ 2014	16 ພຶດສະພາ 2016	5,000	4,253	3.50%
29 ກັນຍາ 2014	18 ກັນຍາ 2015	4,000	3,849	3.50%
27 ພະຈິກ 2014	31 ກໍລະກົດ 2015	2,000	2,004	3.50%
18 ທັນວາ 2014	2 ສິງຫາ 2015	14,000	13,958	3.50%
30 ທັນວາ 2014	30 ທັນວາ 2015	150,000	153,507	4.75%
30 ທັນວາ 2014	30 ທັນວາ 2016	100,000	102,509	5.10%
27 ກຸມພາ 2015	11 ມິຖຸນາ 2016	2,000	1,351	3.50%
		465,000	**459,840**	

17. ການລົງທຶນໃນບໍລິສັດຮ່ວມທຶນ

	30 ມິຖຸນາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ຍອດຍົກມາ	**534,430**	**353,417**
ເພີ່ມການລົງທຶນພາຍໃນໄລຍະ	-	147,000
ສ່ວນແບ່ງຂອງກຳໄລພາຍໃນໄລຍະ ພາຍໃຕ້ວິທີສ່ວນໄດ້ສ່ວນເສຍ (Equity Methode)	38,522	43,146
ສ່ວນແບ່ງຂອງລາຍຮັບນອກການທຸລະກິດອື່ນໆຂອງບໍລິສັດຮ່ວມທຶນພາຍໃນໄລຍະຕາມວິທີສ່ວນໄດ້ສ່ວນເສຍ	-	272
ລົບ: ເງິນປັນຜົນໄດ້ຮັບພາຍໃນໄລຍະ	(25,779)	(9,405)
ຍອດເຫຼືອທ້າຍ	**547,173**	**534,430**

ການລົງທຶນໃນບໍລິສັດຮ່ວມທຶນ

	30 ມິຖຸນາ 2015				*31 ທັນວາ 2014*			
	ຕົ້ນທຶນ ເປັນ ໂດລາ	*ຕົ້ນທຶນ ທຽບເທົ່າ ລ້ານກີບ*	*ມູນຄ່າ ຕາມບັນຊີ ເປັນ ລ້ານກີບ*	*% ການຖືຮຸ້ນຂອງ ທະ ນາຄານ*	*ຕົ້ນທຶນ ເປັນ ໂດລາ*	*ຕົ້ນທຶນ ທຽບເທົ່າ ລ້ານກີບ*	*ມູນຄ່າ ຕາມບັນຊີ ເປັນ ລ້ານກີບ*	*% ການຖືຮຸ້ນຂອງ ທະ ນາຄານ*
ການລົງທຶນໃນ ສາຖະບັນການ ເງິນອື່ນ								
ທະນາຄານຮ່ວມ ທຸລະກິດລາວ - ຫວຽດ (LVB)	24,500,000	199,125	243,481	35%	24,500,000	199,125	236,706	35%
ທະນາຄານລາວ - ຝຣັ່ງຈຳກັດ	16,322,230	138,000	138,978	46%	16,322,230	138,000	137,967	46%
ທະນາຄານລາວ - ຈີນ ຈຳກັດ	ບໍ່ມີ	147,000	148,523	49%	ບໍ່ມີ	147,000	145,970	49%
ລົງທຶນໃນ ນິຕິບຸກຄົນພາຍ ໃນປະເທດ								
ບໍລິສັດປະກັນໄພ ລາວ-ຫວຽດ	1,050,000	8,784	16,191	35%	1,050,000	8,784	13,787	35%
		492,909	**547,173**			**492,909**	**534,430**	

17. ການລົງທຶນໃນບໍລິສັດຮ່ວມທຶນ (ຕໍ່)

- ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ (LVB) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ, ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ນະຄອນຫລວງວຽງຈັນ ແລະ ດຳເນີນທຸລະກິດສະໜອງການບໍລິການທາງດ້ານທະນາຄານ. ເປັນບໍລິສັດທີ່ຮ່ວມທຶນກັບທະນາຄານເພື່ອການລົງທຶນ ແລະ ການພັດທະນາຂອງຫວຽດນາມ, ເຊິ່ງເປັນທະນາຄານທຸລະກິດລັດທີ່ດຳເນີນທຸລະກິດຢູ່ ສສ ຫວຽດນາມ. LVB ດຳເນີນທຸລະກິດ ພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 31 ມີນາ 2000 ອອກໂດຍທະນາຄານແຫ່ງ ສປປ ລາວ ເປັນໄລຍະເວລາ 30 ປີ. ນະວັນທີ 30 ມິຖຸນາ 2015 ທະນາຄານໄດ້ລົງທຶນໃນທະນາຄານຮ່ວມທຸລະກິດ ລາວ-ຫວຽດ ມີມູນຄ່າທັງໝົດເທົ່າກັບ 24,500,000 ໂດລາ.
- ທະນາຄານ ລາວ-ຝຣັ່ງ ຈຳກັດ (BFL) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ນະຄອນຫລວງວຽງຈັນ ແລະ ສະໜອງການບໍລິການທາງດ້ານການທະນາຄານ. ທະນາຄານ ລາວ-ຝຣັ່ງ ຖືກສ້າງຂຶ້ນໂດຍໄດ້ຮ່ວມທຶນກັບ Cofibred Company Frances De La Bred ເຊິ່ງເປັນທະນາຄານທຸລະກິດລັດ ທີ່ດຳເນີນທຸລະກິດຢູ່ ປາຣີ, ປະເທດ ຝຣັ່ງ. BFL ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນ ການທະນາຄານຊື່ອຄາວ ລົງວັນທີ 1 ຕຸລາ 2009 ແລະ ໃບອະນຸຍາດຖາວອນ ລົງວັນທີ 16 ກໍລະກົດ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຕາມກົດໝາຍຂອງທະນາຄານ BFL ແມ່ນ 20 ລ້ານໂດລາ ເຊິ່ງໄດ້ເພີ່ມເປັນ 37 ລ້ານໂດລາ, ອີງຕາມບົດບັນຍັດຂອງປະທານປະເທດອອກໃນ ວັນທີ 24 ກັນຍາ 2009 ແລະ ໜັງສືເລກທີ. 01/ທຫລ ລົງວັນທີ 28 ມັງກອນ 2010 ຈາກ ທຫລ. ນະວັນທີ 30 ມິຖຸນາ 2015 ທຄຕລ ໄດ້ປະກອບທຶນທັງໝົດໃນມູນຄ່າ 1,840,000 ໂດລາ ແລະ 122,854,960,000 ກີບ (ທຽບເທົ່າ 138,000 ລ້ານກີບ).

- ບໍລິສັດປະກັນໄພລາວຫວຽດ (LVI) ເປັນທຸລະກິດທີ່ຈົດທະບຽນເປັນບໍລິສັດຮ່ວມທຶນ ຢູ່ ສປປ ລາວ, ສະໜອງການບໍລິການທາງດ້ານການປະກັນໄພ ພາຍໃຕ້ໃບອະນຸຍາດການລົງທຶນເລກທີ 077/08/FIMC ອອກໂດຍຄະນະກຳມະການຄຸ້ມຄອງການລົງທຶນຕ່າງປະເທດ, ລົງວັນທີ 09 ມິຖຸນາ 2008. ເປັນການຮ່ວມທຶນກັບບໍລິສັດຮຸ້ນສ່ວນປະກັນໄພ BIDV ແລະ ທະນາຄານຮ່ວມທຸລະກິດລາວຫວຽດ. ທຶນຈົດທະບຽນຂອງບໍລິສັດ ແມ່ນ 3,000,000 ໂດລາ ແລະ ຖືກຖອກໂດຍຂາຮຸ້ນຢ່າງເຕັມສ່ວນ ໃນວັນທີ 17 ກໍລະກົດ 2008. ນະວັນທີ 30 ມິຖຸນາ 2013 ທະນາຄານໄດ້ປະກອບທຶນເພີ່ມເຕີ່ມ 180,000ໂດລາ. ນະວັນທີ 30 ມິຖຸນາ 2015 ທຶນທັງໝົດທີ່ປະກອບຂອງທະນາຄານຢູ່ໃນບໍລິສັດນີ້ແມ່ນ 1,050,000 ໂດລາ ຫຼື ທຽບເທົ່າກັບ 8,784 ລ້ານກີບ.

- ທະນາຄານ ລາວ-ຈີນ ຈຳກັດ (LCNB) ເປັນທຸລະກິດທີ່ດຳເນີນກ່ຽວກັບການບໍລິການດ້ານການທະນາຄານຢູ່ໃນ ສປປ ລາວ. ທະນາຄານລາວ-ຈີນ ຈຳກັດ ເປັນທະນາຄານຮ່ວມທຶນກັບ ທະນາຄານ ຟູດ້ຽນ ຈີນ ເຊິ່ງແມ່ນທະນາຄານທຸລະກິດຂອງລັດທີ່ດຳເນີນການຢູ່ປະເທດຈີນ. LCNB ດຳເນີນທຸລະກິດ ພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 27 ມັງກອນ 2014 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຂອງ LCNB ແມ່ນ 300,000 ລ້ານກີບ ແລະ ນະວັນທີ 30 ມິຖຸນາ 2015 ຂາຮຸ້ນໄດ້ປະກອບທຶນຄົບຕາມຈຳນວນດັ່ງກ່າວ.

18. ຊັບສິນບັດ ແລະ ອຸປະກອນ

ການເຄື່ອນໄຫວຂອງຊັບສິນບັດ ແລະ ອຸປະກອນ ສຳລັບໄລຍະ ຫົກ ເດືອນຕົ້ນປີ ສິ້ນສຸດ ນະວັນທີ 30 ມິຖຸນາ 2015 ມີດັ່ງລຸ່ມນີ້:

	ອາຄານ ແລະ ການປັບປຸງ ລ້ານກີບ	*ອຸປະກອນ ຫ້ອງການ ລ້ານກີບ*	*ເຟີນີເຈີ ແລະ ສິ່ງຕິດຕັ້ງ ລ້ານກີບ*	*ພາຫະນະ ລ້ານກີບ*	*ລວມ ລ້ານກີບ*
ຕົ້ນທຶນ:					
ນະວັນທີ 1 ມັງກອນ 2015	212,392	119,240	28,096	18,428	378,156
ຊື້ເພີ່ມ	23,495	6,851	1,116	460	31,922
ສະສາງອອກ	(521)	(8,866)	-	(1,877)	(11,264)
ນະວັນທີ 30 ມິຖຸນາ 2015	235,366	117,225	29,212	17,011	398,814
ຫລຸ້ຍຫ້ຽນສະສົມ:					
ນະວັນທີ 1 ມັງກອນ 2015	55,105	53,244	10,784	8,630	127,763
ຫັກຄ່າຫຼຸ້ຍຫ້ຽນພາຍໃນໄລຍະ	7,026	12,050	1,623	1,783	22,482
ສະສາງອອກ	(521)	(8,863)	-	(1,715)	(11,099)
ນະວັນທີ 30 ມິຖຸນາ 2015	61,610	56,431	12,407	8,698	139,146
ມູນຄ່າຍັງເຫລືອສຸດທິ:					
ນະວັນທີ 1 ມັງກອນ 2015	157,287	65,996	17,312	9,798	250,393
ນະວັນທີ 30 ມິຖຸນາ 2015	173,756	60,794	16,805	8,313	259,668

19. ຊັບສິນບັດຖິ່ງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຖິ່ງທີ່ບໍ່ມີຕົວຕົນ ໃນໄລຍະ ຫົກ ເດືອນຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015 ມີດັ່ງລຸ່ມນີ້:

	ສິດນຳໃຊ້ທີ່ດິນ ລ້ານກີບ	*ໂປຼແກຼມຄອມພິວເຕີ ລ້ານກີບ*	*ລວມ ລ້ານກີບ*
ຕົ້ນທຶນ:			
ນະວັນທີ 1 ມັງກອນ 2015	227,075	78,372	305,447
ຊື້ເພີ່ມ	-	4,592	4,592
ສະສາງອອກ	(11,359)	(4,312)	(15,671)
ນະວັນທີ 30 ມິຖຸນາ 2015	215,716	78,652	294,368
ຄ່າເຊື່ອມສະສົມ:			
ນະວັນທີ 1 ມັງກອນ 2015	-	33,878	33,878
ຫັກຄ່າເຊື່ອມພາຍໃນໄລຍະ	-	8,002	8,002
ສະສາງອອກ	-	(4,311)	(4,311)
ນະວັນທີ 30 ມິຖຸນາ 2015	-	37,569	37,569
ມູນຄ່າຍັງເຫລືອສຸດທິ:			
ນະວັນທີ 1 ມັງກອນ 2015	227,075	44,494	271,569
ນະວັນທີ 30 ມິຖຸນາ 2015	215,716	41,083	256,799

20. ຊັບສິນອື່ນໆ

	30 ມິຖຸນາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ຊັບສິນລໍຖ້າຂາຍ	-	5,094
ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນອື່ນໆ	1,060	1,076
ແຊັກພວມຮຽກເກັບ	20,042	9,381
ຊັບສິມບັດຖິ່ງທີ່ກຳລັງກໍ່ສ້າງ ແລະ ພວມເຄື່ອນຍ້າຍ	196,705	196,907
ລາຍຈ່າຍລ່ວງໜ້າລໍຖ້າຈັດສັນ	34,895	34,115
ໜີ້ຕ້ອງຮັບອື່ນໆ	27,826	18,868
	280,528	**265,441**

21. ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ

	30 ມິຖຸນາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ເງິນຝາກກະແສລາຍວັນຈາກທະນາຄານອື່ນ	**1,926,696**	**1,610,072**
- ເປັນເງິນກີບ	1,151,554	893,584
- ເປັນເງິນຕາຕ່າງປະເທດ	775,142	716,488
ເງິນຝາກປະຫຍັດຈາກທະນາຄານອື່ນ	**168,334**	**793,561**
- ເປັນເງິນກີບ	53,438	93,390
- ເປັນເງິນຕາຕ່າງປະເທດ	114,896	700,171
ເງິນຝາກມີກຳນົດຈາກທະນາຄານອື່ນ	**140,725**	**447,254**
- ເປັນເງິນກີບ	75,933	31,933
- ເປັນເງິນຕາຕ່າງປະເທດ	64,792	415,321
ອື່ນໆ	**8,826**	**4,802**
- ເປັນເງິນກີບ	1,157	1,554
- ເປັນເງິນຕາຕ່າງປະເທດ	7,669	3,248
	2,244,581	**2,855,689**
ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ	**1,746**	**6,036**
	2,246,327	**2,861,725**

ເງິນຝາກປະຫຍັດຈາກທະນາຄານ ແລະ ສະຖາບັນການເງິນອື່ນທີ່ເປັນເງິນກີບ, ໂດລາ, ບາດ ແມ່ນມີອັດຕາດອກເບ້ຍຢູ່ລະຫວ່າງ 1.00% - 1.50%, 0.20% - 0.75% ແລະ 0.20% ຕໍ່ປີ ຕາມລຳດັບ.

ເງິນຝາກມີກຳນົດຈາກທະນາຄານ ແລະ ສະຖາບັນການເງິນອື່ນທີ່ເປັນເງິນກີບ, ໂດລາ ແມ່ນມີອັດຕາດອກເບ້ຍຢູ່ລະຫວ່າງ 1.5 – 10.0% ແລະ 0.75% ຕໍ່ປີ ຕາມລາດັບ

22. ໜີ້ຕ້ອງສົ່ງລູກຄ້າ

	30 ມິຖຸນາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ເງິນຝາກກະແສລາຍວັນ	**4,155,134**	**4,308,911**
ເງິນຝາກກະແສລາຍວັນເປັນເງິນກີບ	1,530,971	1,319,640
ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ	2,624,163	2,989,271
ເງິນຝາກປະຫຍັດ	**7,865,388**	**7,544,224**
ເງິນຝາກປະຫຍັດເປັນເງິນກີບ	2,785,297	2,631,148
ເງິນຝາກປະຫຍັດເປັນເງິນຕາຕ່າງປະເທດ	5,080,091	4,913,076
ເງິນຝາກມັດຈຳ	**7,514,049**	**6,913,028**
ເງິນຝາກມີກຳນົດເປັນເງິນກີບ	5,299,269	4,847,213
ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ	2,214,780	2,065,815
ເງິນຝາກມີກຳນົດ	**90,562**	**72,056**
ເງິນຝາກມັດຈຳເປັນເງິນກີບ	5,732	5,580
ເງິນຝາກມັດຈຳເປັນເງິນຕາຕ່າງປະເທດ	84,830	66,476
ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ	**279,374**	**242,084**
	19,904,507	**19,080,303**
ດອກເບ້ຍຄ້າງຈ່າຍ	**42,131**	**21,346**
	19,946,638	**19,101,649**

ເງິນຝາກປະຫຍັດຈາກລູກຄ້າທີ່ເປັນສະກຸນເງິນ ກີບ, ໂດລາ ແລະ ບາດ ມີຂອບເຂດຂອງອັດຕາດອກເບ້ຍຢູ່ລະຫວ່າງ 1.50% - 3.00%, 1.00% -1.25% ແລະ 0.60% ຕໍ່ປີ ຕາມລຳດັບ.

ເງິນຝາກມີກຳນົດທີ່ເປັນສະກຸນເງິນ ກີບ, ໂດລາ, ບາດ ທີ່ມີກຳນົດ 3 ເດືອນ, 6 ເດືອນ, 12 ເດືອນ ແລະ ຫຼາຍກວ່າ 1 ປີ ແມ່ນ ມີອັດຕາດອກເບ້ຍ ລະຫວ່າງ 2.25% – 12.50%, 1.15% - 6.75 % ແລະ 0.75 – 6.50% ຕໍ່ປີ ຕາມລຳດັບ.

23. ເງິນກູ້ຢືມຈາກ ທຫລ

	30 ມິຖຸນາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ເງິນກູ້ຢືມຈາກທະນາຄານການ	245,082	121,287
ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ	2,804	-
	247,886	**121,287**

ເງິນກູ້ຢືມຈາກທະນາຄານ ແຫ່ງ ສປປ ລາວ ລວມມີ:

- ເງິນກູ້ໄລຍະຍາວຈາກ ທຫລ ມີຍອດເຫຼືອນະວັນທີ 30 ມິຖຸນາ 2015 ແມ່ນ 5,914,285 ໂດລາ (ມູນຄ່າເດີມຂອງເງິນກູ້ ແມ່ນ 9,200,000 ໂດລາ) ສຳລັບຈຸດປະສົງໃນການກູ້ຢືມແມ່ນເພື່ອລົງທຶນໃນ ທະນາຄານລາວ-ຝລັ່ງ ຈຳກັດ. ຕົ້ນທຶນເງິນກູ້ແມ່ນຈະຊຳລະເປັນປີ ເລີ່ມແຕ່ປີ 2010 ຫາ 2023 ໂດຍມີອັດຕາດອກເບ້ຍ 0.25% ຕໍ່ປີ ສຳລັບດອກເບ້ຍ ແມ່ນຈ່າຍທຸກໆ 6 ເດືອນ.
- ເງິນກູ້ໄລຍະຍາວຈາກ ທຫລ ມີຍອດເຫຼືອນະວັນທີ 30 ມິຖຸນາ 2015 ແມ່ນ 73,500,000,000 ກີບ ສຳລັບຈຸດປະສົງໃນການກູ້ຢືມແມ່ນເພື່ອລົງທຶນໃນ ທະນາຄານ ລາວ-ຈີນຈຳກັດ. ຕົ້ນທຶນເງິນກູ້ແມ່ນຈະຊຳລະເປັນປີ ເລີ່ມແຕ່ປີ 2014 ຫາ 2020 ໂດຍມີອັດຕາດອກເບ້ຍ 7% ຕໍ່ປີ.
- ເງິນກູ້ໄລຍະສັ້ນ ຈາກ ທຫລ ມີຍອດເຫຼືອນະວັນທີ 30 ມິຖຸນາ 2015 ແມ່ນ 123,682,246,800 ກີບ ສຳລັບຈຸດປະສົງໃນການກູ້ຢືມແມ່ນເພື່ອເພີ່ມທຶນໝຸນວຽນຂອງທະນາຄານ ເຊິ່ງມີອັດຕາດອກເບ້ຍ 3.5% ຕໍ່ປີ.

24. ອາກອນ

24.1 ລາຍຈ່າຍອາກອນກຳໄລ

ອົງປະກອບສຳຄັນຂອງລາຍຈ່າຍອາກອນມີດັ່ງລຸ່ມນີ້:

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2014*
	ລ້ານກີບ	*ລ້ານກີບ*
ລາຍຈ່າຍອາກອນກຳໄລພາຍໃນໄລຍະ	3,447	20,078
ລາຍຈ່າຍອາກອນກຳໄລເຍື້ອນຊຳລະ	3,291	787
	6,738	**20,865**

24.2 ໜີ້ຕ້ອງສົ່ງອາກອນ

	30 ມິຖຸນາ 2015	*30 ມິຖຸນາ 2014*
	ລ້ານກີບ	*ລ້ານກີບ*
ໜີ້ຕ້ອງສົ່ງອາກອນກຳໄລ	6,067	8,582
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ	12,295	10,400
ໜີ້ຕ້ອງສົ່ງອາກອນເງິນເດືອນ	23	-
ໜີ້ຕ້ອງສົ່ງອື່ນໃຫ້ກັບອາກອນ	1,046	1,046
	19,431	**20,028**

24. ອາກອນ (ຕໍ່)

24.3 ອາກອນກຳໄລພາຍໃນໄລຍະ

ການຄິດໄລ່ເງິນແຮສຳລັບເສຍອາກອນກຳໄລແມ່ນອີງຕາມກຳໄລພາຍໃນໄລຍະປະຈຸບັນ ເຊິ່ງອີງຕາມກົດໝາຍສ່ວຍສາອາກອນ ຂອງ ສປປ ລາວ. ທະນາຄານມີພັນທະຈ່າຍອາກອນໃນອັດຕາ 24% ຂອງກຳໄລກ່ອນຫັກອາກອນ ໂດຍອີງຕາມກົດໝາຍວ່າ ດ້ວຍສ່ວຍສາອາກອນສະບັບປັບປຸງເລກທີ 05/ສພຊ ລົງວັນທີ 20 ທັນວາ 2011 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2013. ນອກຈາກນັ້ນແລ້ວ ເພື່ອໃຫ້ສອດຄ່ອງກັບລັດຖະບັນຍັດຂອງປະທານປະເທດ ສະບັບ ເລກທີ 001/ປປລ ລົງວັນທີ 28 ທັນວາ 2010, ອັດຕາອາກອນສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບແມ່ນຫຼຸດລົງ 5% ພາຍໃນຊ່ວງ 4 ປີທຳອິດ ເລີ່ມຈາກມື້ຈົດທະບຽນ.

ໂດຍອີງຕາມນັ້ນ ທະນາຄານ ແມ່ນໄດ້ເສຍພັນທະອາກອນໃນອັດຕາ 19% ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2015 (2014: 19%).

ສ່ວນບໍລິສັດໃນເຄືອຂອງທະນາຄານແມ່ນເສຍພັນທະອາກອນໃນອັດຕາ 24% ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2015 (2014: 24%)

ລາຍລະອຽດຂອງອາກອນກຳໄລສຳລັບໄລຍະ ສິ້ນສຸດ ວັນທີ 30 ມິຖຸນາ 2015 ແລະ 30 ມິຖຸນາ 2014 ມີດັ່ງຕໍ່ໄປນີ້:

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015 ລ້ານກີບ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ2014 ລ້ານກີບ*
ກຳໄລ ກ່ອນຫັກອາກອນຂອງທະນາຄານອີງຕາມ IFRS	**75,588**	**125,256**
ດັດແກ້ສຳລັບ:		
- ສ່ວນຜິດຕ່ຽງໃນການຮັບຮູ້ມູນຄ່າຕາມບັນຊີຂອງພັນທະບັດ ແລະ ເງິນຝາກມີກຳນົດ.	-	(81)
- ສ່ວນຜິດຕ່ຽງລະຫວ່າງມູນຄ່າຕາມບັນຊີຕາມ LAS ແລະ ລາຄາທຶນຕັດຈຳໜ່າຍຕາມ IFRS ຂອງພັນທະບັດ	(1,249)	-
- ເກັບຄືນຄ່າເຊື່ອມຂອງຊັບສິນອື່ນໆ	-	(5,886)
- ສ່ວນຜິດຕ່ຽງໃນ(ເກັບຄືນ)/ລາຍຈ່າຍທີ່ຫັກເປັນ ເງິນແຮສຳລັບ ການສູນເສຍເງິນກູ້ ລະຫວ່າງ LAS ແລະ IFRS	(13,724)	24,169
- ສ່ວນຜິດຕ່ຽງ ໃນການຈັດສັນເງິນທຶນຊ່ວຍໜູນກໍ່ສ້າງພື້ນຖານ	236	(2,164)
- ຫັກລ້າງລາຍຈ່າຍກ່ອນການສ້າງຕັ້ງວິສາຫະກິດອອກເປັນລາຍຈ່າຍ ພາຍໃນປີ	(24)	-
- ສ່ວນຜິດຕ່ຽງໃນລາຍຈ່າຍຄ່າເຊື່ອມຂອງການລົງທຶນລະຫວ່າງ LAS ແລະ IFRS	(594)	(20,556)
- ກຳໄລທີ່ຖືກຍົກເວັ້ນອາກອນທີ່ເກີດຂຶ້ນຈາກການດັດແກ້ການລວມ ກິດຈະການ	(12,687)	2,174
- ລາຍຮັບທີ່ຍົກເວັ້ນອາກອນ	(33,664)	(17,906)
- ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກ	479	254
ອາກອນກຳໄລຕ້ອງສົ່ງຕາມ LAS	**14,361**	**105,260**

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ (ຕໍ່)
ນະວັນທີ ແລະ ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015

25. ອາກອນ (ຕໍ່)

24.3 ອາກອນກຳໄລວິສະຫະກິດໃນໄລຍະ (ຕໍ່)

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015 ລ້ານກີບ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2014 ລ້ານກີບ*
ລວມມີ:		
- *ລາຍຮັບທີ່ຖືກຄິດໄລ່ອາກອນກຳໄລຂອງທະນາຄານແມ່*	*12,996*	*103,675*
- *ລາຍຮັບທີ່ຖືກຄິດໄລ່ອາກອນກຳໄລຂອງບໍລິສັດໃນເຄືອ*	*1,365*	*1,585*
ລາຍຈ່າຍອາກອນກຳໄລຂອງທະນາຄານແມ່ໃນອັດຕາ 24% (2014: 19%)	3,119	19,698
ລາຍຈ່າຍອາກອນກຳໄລຂອງບໍລິສັດໃນເຄືອໃນອັດຕາ 24% (2014: 24%)	328	380
ລາຍຈ່າຍອາກອນກຳໄລແບບລວມກິດຈະການພາຍໃນໄລຍະ	3,447	20,078
ໜີ້ຕ້ອງສົ່ງອາກອນກຳໄລຕົ້ນໄລຍະ	8,582	15,016
ອາກອນກຳໄລທີ່ຈ່າຍໃນໄລຍະ	(6,127)	(13,474)
ໜີ້ອາກອນທີ່ຕ້ອງຈ່າຍເພີ່ມສຳລັບໄລຍະທີ່ຜ່ານມາ	165	-
ໜີ້ຕ້ອງສົ່ງອາກອນກຳໄລທ້າຍໄລຍະ	**6,067**	**21,620**

ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບ ທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງ ກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນລວມກິດຈະການ ສຳລັບໄລຍະ 6 ເດືອນຕົ້ນປີ ອາດຈະຖືກ ປ່ຽນແປງຫຼັງຈາກມື້ໄລ່ລຽງຂອງກົມສ່ວຍສາອາກອນ.

24.4 ຊັບສິນ/(ໜີ້ສິນ) ອາກອນເຍື້ອນຊຳລະ

	ຊັບສິນອາກອນ ເຍື້ອນຊຳລະ (ອັດຕາ 24%) ລ້ານກີບ	*ໜີ້ສິນອາກອນ ເຍື້ອນຊຳລະ (ອັດຕາ 24%) ລ້ານກີບ*	*ຊັບສິນ/(ໜີ້ ສິນ) ອາກອນ ເຍື້ອນຊຳລະ ສຸດທິ ລ້ານກີບ*
ນະວັນທີ 1 ມັງກອນ 2015	**5,999**	**(17,394)**	**(11,395)**
ເພີ່ມຂຶ້ນໃນໄລຍະ ເນື່ອງຈາກ:			
ສ່ວນປ່ຽນແປງໃນມູນຄ່າຍຸດຕິທຳຂອງ ການລົງທຶນການເງິນມີໄວ້ ເພື່ອຂາຍ	38	(4,294)	(4,256)
ສ່ວນຕ່າງຊື່ອຄາວລະຫວ່າງອາກອນກຳໄລພາຍໃຕ້ LAS ແລະ IFRS	492	(3,783)	(3,291)
ນະວັນທີ 30 ມິຖຸນາ 2015	**6,529**	**(25,471)**	**(18,942)**

25. ໜີ້ສິນອື່ນໆ

	30 ມິຖຸນາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ໜີ້ຕ້ອງສົ່ງພະນັກງານ	310	19,320
ໜີ້ຕ້ອງສົ່ງຜູ້ສະໜອງ	21,238	21,705
ຄ້າງແຮສຳລັບການຍົກເລີກສັນຍາແຮງງານ	12,903	11,202
ອື່ນໆ	24,395	164,158
	58,846	**216,385**

26. ທຶນຈົດທະບຽນ

ທຶນຈົດທະບຽນຂອງທະນາຄານ ນະວັນທີ 30 ມິຖຸນາ 2015 ແລະ 31 ທັນວາ 2014 ມີດັ່ງຕໍ່ໄປນີ້:

	ທຶນຈົດທະບຽນ
	ລ້ານກີບ
ຍອດຍົກມາ	682,888
ຍອດເຫຼືອທ້າຍ	**682,888**

27. ຄ້າງສະສົມຕາມລະບຽບການ ແລະຄ້າງອື່ນໆ

	ຄ້າງສະສົມຕາມ ລະບຽບການ	*ຄ້າງຂະຫຍາຍ ທຸລະກິດ*	*ຄ້າງເພີ່ມທຶນ ຈົດທະບຽນ*	*ລວມ*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ນະວັນທີ 1 ມັງກອນ 2015	62,308	216,849	-	279,157
ແບ່ງສ່ວນເຂົ້າຄ້າງສະສົມສຳລັບປີ 2014	11,675	11,675	12,275	35,625
ນະວັນທີ 31 ມິຖຸນາ 2015	**73,983**	**228,524**	**12,275**	**314,782**

ພາຍໃຕ້ຂໍ້ກຳນົດຂອງກົດໝາຍທະນາຄານທຸລະກິດ, ສະບັບລົງວັນທີ 16 ມັງກອນ 2007 ໄດ້ກຳນົດໃຫ້ ທະນາຄານທຸລະກິດ ຕ່າງໆຕ້ອງໄດ້ແບ່ງສ່ວນຂອງກຳໄລຫຼັງອາກອນເພື່ອເຂົ້າຄ້າງແຮຕ່າງໆດັ່ງນີ້:

- ຄ້າງສະສົມຕາມລະບຽບການ
- ຄ້າງຂະຫຍາຍທຸລະກິດ ແລະ ຄ້າງອື່ນໆ

ອີງຕາມຂໍ້ກຳນົດຄວາມພຽງພໍຂອງທຶນ ເລກທີ 01/ທຫລ ສະບັບລົງວັນທີ 28 ສິງຫາ 2002 ອອກໂດຍຜູ້ວ່າການຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຂໍ້ກຳນົດທີ່ກ່ຽວຂ້ອງອື່ນໆ, ທະນາຄານທຸລະກິດຕ້ອງໄດ້ແບ່ງສ່ວນຂອງກຳໄລຫຼັງອາກອນເຂົ້າໃນ ຄ້າງສະສົມຕາມລະບຽບການໃນອັດຕາ ລະຫວ່າງ 5% - 10% ຂອງກຳໄລຫຼັງອາກອນ ຂຶ້ນກັບການຕັດສິນໃຈຂອງສະພາບໍລິ ຫານ. ການຫັກເຂົ້າຄ້າງຂະຫຍາຍທຸລະກິດ ແລະ ຄ້າງອື່ນແມ່ນຂຶ້ນຢູ່ກັບການຕັດສິນໃຈຂອງສະພາບໍລິຫານ.

28. ຄັງແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ

	30 ມິຖຸນາ 2015 *ລ້ານກີບ*
ຍອດຍົກມາ	64,142
ປ່ຽນແປງສຸດທິ ໃນມູນຄ່າຍຸດຕິທຳຂອງການລົງທຶນທາງການເງິນມີໄວ້ເພື່ອຂາຍ	(2,950)
ຍອດເຫຼືອທ້າຍ	**61,192**

29. ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດທີ່ລວມຢູ່ໃນໃບລາຍງານກະແສເງິນສົດລວມກິດຈະການ ປະກອບມີ ມູນຄ່າຂອງລາຍການຕ່າງໆໃນໃບລາຍງານຖານະການເງິນລວມກິດຈະການ ດັ່ງນີ້:

	30 ມິຖຸນາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ເງິນສົດ ແລະ ທຽບເທົ່າເງິນສົດໃນກຳມື	2,646,132	1,998,781
ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ	5,313,088	4,322,473
ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ	1,517,402	2,268,162
ເງິນຝາກມີກຳນົດທີ່ມີກຳນົດ 3 ເດືອນ	576,174	1,491,751
	10,052,796	**10,081,167**

30. ໜີ້ສິນ ແລະ ຄ່າໝັ້ນສັນຍາທີ່ອາດເກີດຂຶ້ນ

	30 ມິຖຸນາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ໜັງສືຄ້ຳປະກັນທາງການເງິນ	245,308	136,113
ໜັງສືສິນເຊື່ອທີ່ຕ້ອງຊຳລະທັນທີ	1,052,424	1,408,294
ໜັງສືສິນເຊື່ອເຍື້ອນຊຳລະ	167,424	183,998
ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ	3,605,592	1,552,822
	5,070,748	**3,281,227**

ການຄ້ຳປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ. ໜັງສືຄ້ຳປະກັນ ແລະ ໜັງສືສິນເຊື່ອເພື່ອຄ້ຳປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້. ໜັງສືຄ້ຳປະກັນສາມາດເຮັດເປັນຮູບແບບໃບບິນແລກປ່ຽນ ຫລື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄ້ຳປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫລຸດ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ).

30. ໜີ້ສິນ ແລະ ຄຳໝັ້ນສັນຍາທີ່ອາດເກີດຂຶ້ນ (ຕໍ່)

ຂໍ້ຜູກພັນຍັງບໍ່ໄດ້ຖືກຖອນ

ບັນດາຂໍ້ຜູກພັນສຳລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສຳລັບເງິນກູ້ ແລະ ເງິນກູ້ໝຸນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກຳນົດທີ່ໄດ້ກຳນົດໄວ້, ຫລື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ, ຂໍ້ຜູກພັນອາດຈະໝົດກຳນົດໂດຍທີ່ຍັງບໍ່ໄດ້ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈຳເປັນຕ້ອງລາຍງານຢູ່ໃບລາຍງານກະແສເງິນສົດ.

ເຖິງຢ່າງໃດກໍຕາມ, ໂອກາດຄ່າເຊື່ອມໜ້ີເສຍຈະເກີດຂຶ້ນແມ່ນຕ່ຳກວ່າມູນຄ່າທັງໝົດຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນຳໃຊ້. ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອແມ່ນຄວາມບັງເອີນ ໃນເມື່ອລູກຄ້າຍັງຮັກສາມາດຕະຖານສະເພາະທີ່ໄດ້ກຳນົດໄວ້. ທະນາຄານຕິດຕາມມື້ຄົບກຳນົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາທີ່ຍາວນານ ແມ່ນມີຄວາມສ່ຽງຫລາຍກວ່າ ຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

ສັນຍາເຊົ່າຊື້

ນະວັນທີ 30 ມິຖຸນາ 2015, ທະນາຄານບໍ່ໄດ້ເຊັນສັນຍາເຊົ່າໃນນາມທີ່ເປັນທັງຜູ່ໃຫ້ເຊົ່າ ຫລື ຜູ່ເຊົ່າ ທີ່ຈະມີຜົນຕໍ່ກະແສເງິນສົດເຂົ້າ - ອອກໃນອະນາຄົດ.

31. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບຄະນະອຳນວຍການຂອງທະນາຄານ

ເງິນຕອບແທນໃຫ້ແກ່ສະມາຊິກສະພາບໍລິຫານ ແລະ ຄະນະຜູ່ບໍລິຫານມີດັ່ງນີ້:

	ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2015 ລ້ານກີບ	*ສຳລັບໄລຍະ 6 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2014 ລ້ານກີບ*
ເງິນເດືອນ	563	559
ໂບນັດ	306	-
ເງິນເບ້ຍລ້ຽງຕຳແໜ່ງ	480	833
	1,349	**1,392**

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງ

ພາຍໃນໄລຍະທະນາຄານໄດ້ຂາຍສິດນຳໃຊ້ທີ່ດິນຈຳນວນ 36 ຕອນ ໃຫ້ກັບ ທະນາຄານແຫ່ງ ສປປ ລາວ ໃນລາຄາ 374,970 ລ້ານກີບ. ລາຄາສຳລັບການຊື້ຂາຍດິນຈຳນວນນີ້ແມ່ນຂຶ້ນກັບການຕົກລົງຮ່ວມກັນລະຫວ່າງ ທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ ເທົ່ານັ້ນ. ການເຮັດທຸລະກຳນີ້ໄດ້ສົ່ງຜົນໃຫ້ທະນາຄານມີກຳໄລຢູ່ 355,021 ລ້ານກີບ ເຊິ່ງຖືກບັນທຶກລົງໃນໃບລາຍງານຜົນໄດ້ຮັບໃນການທຸລະກິດລວມກິດຈະການ ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2015.

31. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 30 ມິຖຸນາ 2015 ມີດັ່ງຕໍ່ໄປນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ການເຄື່ອນໄຫວ*	*ໜີ້ຕ້ອງຮັບ ລ້ານກີບ*	*ໜີ້ຕ້ອງສົ່ງ ລ້ານກີບ*
ທະນາຄານ ແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນກູ້ຢືມ ແລະ ດອກເບ້ຍຄ້າງຈ່າຍໃຫ້ ທຫລ	-	247,886
ທະນາຄານ ແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນຝາກກະແສລາຍວັນ ຂອງ ທຄຕລ ຢູ່ ທຫລ	5,310,806	-
ທະນາຄານ ແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນຝາກພາກບັງຄັບ ຂອງ ທຄຕລ ຢູ່ ທຫລ	1,069,307	-
ທະນາຄານ ແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນຝາກກະແສລາຍວັນຢູ່ ທຄຕລ	-	14,973
ກະຊວງການເງິນ	ເຈົ້າຂອງໂດຍກົງ	ລົງທຶນໃນພັນທະບັດຂອງ ກະຊວງການເງິນ	1,529,500	-
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສລາຍວັນຢູ່ LVB	11,238	-
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກມີກຳນົດທີ່ LVB ແລະ ດອກເບ້ຍຄ້າງຮັບ	100,033	-
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສລາຍວັນ	-	55,244
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກປະຫຍັດ ແລະ ດອກເບ້ຍຄ້າງຈ່າຍ	-	90
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກປະຈຳ ແລະ ດອກເບ້ຍຄ້າງຈ່າຍ	-	250,852
ທະນາຄານ ລາວ-ຝຣັ່ງ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນມີກຳນົດຢູ່ BFL ແລະ ດອກເບ້ຍຄ້າງຮັບ	8,501	-
ທະນາຄານ ລາວ-ຝຣັ່ງ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສລາຍວັນ	-	26,260
ທະນາຄານ ລາວ-ຝຣັ່ງ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກປະຫຍັດ ແລະ ດອກເບ້ຍຄ້າງຈ່າຍ	-	57,528
ທະນາຄານ ລາວ-ຝຣັ່ງ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກປະຈຳ ແລະ ດອກເບ້ຍຄ້າງຈ່າຍ	-	10,363
ທະນາຄານ ລາວ-ຈີນ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສລາຍວັນ	-	10,548
ທະນາຄານ ລາວ-ຈີນ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກປະຫຍັດ ແລະ ດອກເບ້ຍຄ້າງຈ່າຍ	-	57,626
ທະນາຄານ ລາວ-ຈີນ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກປະຈຳ ແລະ ດອກເບ້ຍຄ້າງຈ່າຍ	-	24,297

31. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2014 ມີດັ່ງຕໍ່ໄປນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ການເຄື່ອນໄຫວ*	*ໜີ້ຕ້ອງຮັບ ລ້ານກີບ*	*ໜີ້ຕ້ອງສົ່ງ ລ້ານກີບ*
ທະນາຄານ ແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນກູ້ຢືມ ແລະ ດອກເບ້ຍຄ້າງຈ່າຍໃຫ້ ທຫລ	-	121,287
ທະນາຄານ ແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນຝາກກະແສລາຍວັນ ຂອງ ທຄຕລ ຢູ່ ທຫລ	4,320,191	-
ທະນາຄານ ແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນຝາກພາກບັງຄັບ ຂອງ ທຄຕລ ຢູ່ ທຫລ	925,320	-
ທະນາຄານ ແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນຝາກມີກຳນົດຢູ່ ທຫລ	24,655	-
ທະນາຄານ ແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນຝາກກະແສລາຍວັນຢູ່ ທຄຕລ	-	3,093
ກະຊວງການເງິນ	ເຈົ້າຂອງໂດຍກົງ	ລົງທຶນໃນພັນທະບັດຂອງ ກະຊວງການເງິນ	1,279,952	-
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສລາຍວັນຢູ່ LVB	28,528	-
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກມີກຳນົດທີ່ LVB ແລະ ດອກເບ້ຍຄ້າງຮັບ	40,404	-
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສລາຍວັນ	-	65,610
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກປະຈຳ ແລະ ດອກເບ້ຍຄ້າງຈ່າຍ	-	247,948
ທະນາຄານ ລາວ-ຝຣັ່ງ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນມີກຳນົດຢູ່ BFL ແລະ ດອກເບ້ຍຄ້າງຮັບ	8,504	-
ທະນາຄານ ລາວ-ຝຣັ່ງ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສລາຍວັນ	-	22,028
ທະນາຄານ ລາວ-ຝຣັ່ງ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກປະຫຍັດ ແລະ ດອກເບ້ຍຄ້າງຈ່າຍ	-	139,105
ທະນາຄານ ລາວ-ຝຣັ່ງ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກປະຈຳ ແລະ ດອກເບ້ຍຄ້າງຈ່າຍ	-	10,106
ທະນາຄານ ລາວ-ຈີນ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສລາຍວັນ	-	49,871
ທະນາຄານ ລາວ-ຈີນ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກປະຫຍັດ ແລະ ດອກເບ້ຍຄ້າງຈ່າຍ	-	645,892
ທະນາຄານ ລາວ-ຈີນ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກປະຈຳ ແລະ ດອກເບ້ຍຄ້າງຈ່າຍ	-	24,242

32. ນະໂຍບາຍບໍລິຫານຄວາມສ່ຽງ

ຄຳນຳ

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນກັບກິດຈະກຳຂອງທະນາຄານ ໂດຍຜ່ານຕົວຊີ້ບອກທີ່ຊັດເຈນ, ຜ່ານການວັດແທກ ແລະ ການຄວບຄຸມ, ຂອບເຂດຄວາມສ່ຽງ ແລະ ການຄຸ້ມຄອງອື່ນໆ. ການບໍລິຫານຄວາມສ່ຽງ ແມ່ນສິ່ງທີ່ສຳຄັນຕໍ່ຄວາມສາມາດສ້າງກຳໄລຢ່າງຕໍ່ເນື່ອງຂອງທະນາຄານ ແລະ ພະນັກງານແຕ່ລະຄົນພາຍໃນທະນາຄານ ແມ່ນຕ້ອງຮັບຜິດຊອບຕໍ່ຄວາມສ່ຽງທີ່ເກີດຂຶ້ນ ເຊິ່ງກ່ຽວຂ້ອງກັບໜ້າທີ່ຂອງຕົນ.

ຈຸດປະສົງສຳຄັນຂອງທະນາຄານໃນການບໍລິຫານຄວາມສ່ຽງແມ່ນເພື່ອໃຫ້ສອດຄ່ອງກັບລະບຽບຂອງ ທຫລ ແລະ ອີກເຫດຜົນໜຶ່ງແມ່ນຍ້ອນທະນາຄານໄດ້ຮັບຮູ້ເຖິງຄວາມສຳຄັນຂອງການບໍລິຫານຄວາມສ່ຽງ ເພື່ອໃຫ້ສອດຄ່ອງຕາມການປະຕິບັດຂອງມາດ ຕະຖານສາກົນທີ່ດີທີ່ສຸດໃນການບໍລິຫານຄວາມສ່ຽງ. ສະພາບໍລິຫານ ແລະ ຄະນະອຳນວຍການ, ພ້ອມດ້ວຍການສະໜັບສະໜຸນຈາກຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ແມ່ນກຳລັງກຳນົດຕົວຜັນແປທີ່ຊັດເຈນຂອງຄວາມສ່ຽງທີ່ສາມາດຍອມຮັບໄດ້ຂອງທະນາຄານ ແລະ ຄວບຄຸມການປະຕິບັດທີ່ກົງກັນຂ້າມກັບຕົວຜັນແປນີ້.

ທະນາຄານມີຄວາມສ່ຽງທາງດ້ານສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງທາງດ້ານຕະຫລາດ ແລະ ຫລັງຈາກນັ້ນໄດ້ແບ່ງອອກເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງບໍ່ແມ່ນການຄ້າ. ນອກນັ້ນ, ທະນາຄານຍັງມີຄວາມສ່ຽງອື່ນໆອີກທີ່ເກີດຈາກການດຳເນີນງານ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດ ບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດ ເຊັ່ນ: ການປ່ຽນແປງຂອງສະພາບແວດລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກຳ. ນະໂຍບາຍຂອງທະນາຄານແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດຜ່ານຂັ້ນຕອນ ແລະ ແຜນຍຸດທະສາດຂອງທະນາຄານ.

ໂຄງສ້າງຂອງການຄຸ້ມຄອງຄວາມສ່ຽງ

ສະພາບໍລິຫານແມ່ນມີຄວາມຮັບຜິດຊອບສຳລັບການບໍລິຫານຄວາມສ່ຽງໂດຍລວມ ແລະ ສຳລັບການອະນຸມັດກົນລະຍຸດ ແລະ ຫລັກການບໍລິຫານຄວາມສ່ຽງ.

ສະພາໄດ້ແຕ່ງຕັ້ງຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມ ການຈັດການຄວາມສ່ຽງໂດຍລວມຂອງທະນາຄານ.

ຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ມີຄວາມຮັບຜິດຊອບໃນການພັດທະນາກົນລະຍຸດ ແລະ ຫລັກການໂດຍລວມ, ຂອບເຂດວຽກ, ນະໂຍບາຍ ແລະ ຂອບເຂດ. ພະແນກປະຕິບັດຕາມ ແລະ ຄວາມສ່ຽງ ແມ່ນຮັບຜິດຊອບໃນການຕັດສິນໃຈ ແລະ ຄວບຄຸມຄວາມສ່ຽງ ແລະ ລາຍງານໃຫ້ສະພາບໍລິຫານຮັບຮູ້.

ນະໂຍບາຍຂອງທະນາຄານແມ່ນຂັ້ນຕອນການຈັດການຄວາມສ່ຽງໂດຍທີ່ທະນາຄານໄດ້ຖືກກວດສອບປະຈຳປີ. ເຊິ່ງຜ່ານການກວດສອບນີ້ຈະຮູ້ໄດ້ວ່າທະນາຄານສາມາດປະຕິບັດໄດ້ຕາມຂັ້ນຕອນທີ່ວາງໄວ້ຫລືບໍ່. ພະແນກກວດກາພາຍໃນໄດ້ປຶກສາຫາລືຜົນຂອງການປະເມີນຄວາມສ່ຽງ ແລະ ລາຍງານສິ່ງທີ່ພົບເຫັນ ແລະ ຄຳແນະນຳໃຫ້ຄະນະກຳມະການກວດກາ.

33. ຄວາມສ່ຽງດ້ານສິນເຊື່ອ

ຄວາມສ່ຽງແມ່ນຄວາມສ່ຽງທີ່ທະນາຄານຈະເກີດມີໜີ້ສູນເນື່ອງຈາກລູກຄ້າບໍ່ປະຕິບັດຕາມພັນທະໃນສັນຍາ
ທະນາຄານໄດ້ມີການຮັກສານະໂຍບາຍການບໍລິຫານຄວາມສ່ຽງສິນເຊື່ອເພື່ອໝັ້ນໃຈວ່າລະບຽບການພື້ນຖານລຸ່ມນີ້:

- ສ້າງສະພາບແວດລ້ອມການບໍລິຫານຄວາມສ່ຽງທີ່ເໝາະສົມ;
- ປະຕິບັດໃນຂັ້ນຕອນທີ່ປອດໄພສຳລັບການໃຫ້ສິນເຊື່ອ;

33. ຄວາມສ່ຽງດ້ານສິນເຊື່ອ (ຕໍ່)

- ຮັກສາຂັ້ນຕອນໃນການບໍລິຫານ, ການວັດ ແລະ ການຕິດຕາມທີ່ເໝາະສົມ; ແລະ
- ຮັບປະກັນການຄວບຄຸມທີ່ພຽງພໍສຳລັບຄວາມສ່ຽງສິນເຊື່ອ

ຂັ້ນຕອນໃນການອະນຸມັດສິນເຊື່ອຕ້ອງຜ່ານຄະນະອຳນວຍການຫຼາຍລະດັບເພື່ອຮັບປະກັນວ່າສິນເຊື່ອດັ່ງກ່າວໄດ້ມີການກວດຄືນຢ່າງເປັນອິດສະຫຼະກັບກຳນົດຂອບເຂດໃນການອະນຸມັດຂອງແຕ່ລະລະດັບ

ທະນາຄານບໍລິຫານຄວາມສ່ຽງສິນເຊື່ອໂດຍການໃຊ້ເຄື່ອງມືທີ່ຫຼາກຫຼາຍເຊັ່ນ: ການພັດທະນາ ແລະ ອອກນະໂຍບາຍພາຍໃນ ແລະ ຂໍ້ກຳນົດກ່ຽວກັບການບໍລິຫານຄວາມສ່ຽງສິນເຊື່ອ; ພັດທະນາຂັ້ນຕອນສິນເຊື່ອ; ການທົບທວນຄວາມສ່ຽງສິນເຊື່ອຢ່າງເປັນປະຈຳ; ການພັດທະນາລະບົບໃນການຈັດຊັ້ນສິນເຊື່ອ ແລະ ການຈັດຊັ້ນໜີ້; ຈັດຕັ້ງລະດັບໃນການອະນຸມັດຢູ່ໃນຂັ້ນຕອນການອະນຸມັດສິນເຊື່ອ.

33.1 ການປະເມີນຄ່າເຊື່ອມ

ສະເພາະຈຸດປະສົງທາງການບັນຊີ, ທະນາຄານນຳໃຊ້ຮູບແບບການຂາດທຶນທີ່ໄດ້ເກີດຂຶ້ນ (an incurred loss model) ສຳລັບການຮັບຮູ້ຂອງການຂາດທຶນຈາກຊັບສິນທາງການເງິນທີ່ເຊື່ອມຄ່າ, ເຊິ່ງໝາຍຄວາມວ່າການຂາດທຶນສາມາດຮັບຮູ້ເມື່ອມີຫຼັກຖານທີ່ສາມາດສັງເກດເຫັນໄດ້ຂອງເຫດການທີ່ຈະພາໃຫ້ເກີດການຂາດທຶນໃດໜຶ່ງແບບສະເພາະເຈາະຈົງ, ເຫດການທີ່ກໍ່ໃຫ້ເກີດຄວາມເສຍຫາຍປະກອບມີເຫດການດັ່ງລຸ່ມນີ້:

- ການລະເມີດສັນຍາ ເຊັ່ນ ການຜິດນັດໃນການຊຳລະໜີ້;
- ຈາກການຍິນຍອມຂອງທະນາຄານທີ່ຜ່ອນຜັນໃຫ້ລູກຄ້າທີ່ປະສົບຄວາມຫຍຸ້ງຍາກທາງການເງິນ;
- ມີຄວາມເປັນໄປໄດ້ທີ່ລູກຄ້າຈະລົ້ມລະລາຍ ຫຼື ການປັບໂຄງສ້າງທາງການເງິນຄືນໃໝ່;
- ຂໍ້ມູນອື່ນໆທີ່ສາມາດສັງເກດເຫັນໄດ້ ທີ່ຊ່ວຍໃຫ້ເຫັນໄດ້ວ່າຈະມີການຫຼຸດລົງຂອງກະແສເງິນສົດຄາດຄະເນໃນອະນາຄົດຈາກເງິນກູ້

ວິທີການນີ້ແຕກຕ່າງຈາກຮູບແບບການຂາດທຶນທີ່ຄາດຄະເນໄວ້ (the expected loss model) ທີ່ໄດ້ນຳໃຊ້ເພື່ອຈຸດປະສົງຮັກສາຄວາມພຽງພໍຂອງທຶນ ອີງຕາມຫຼັກການ Basel II.

ເງິນແຮ່ຄ່າເຊື່ອມຈາກການປະເມີນສິນເຊື່ອເປັນລາຍບຸກຄົນ (individual assessment)

ທະນາຄານກຳນົດລາຍຈ່າຍເງິນແຮ່ຄ່າເຊື່ອມທີ່ເໝາະສົມຕາມແຕ່ລະລາຍການເງິນກູ້ທີ່ສຳຄັນ ຫຼື ອີງຕາມເງື່ອນລ່ວງໜ້າໃຫ້ລູກຄ້າເປັນແຕ່ລະລາຍການ ໂດຍພິຈາລະນາທັງການຊຳລະດອກເບ້ຍທີ່ເກີນກຳນົດ, ການຫຼຸດຄະແນນຄວາມເຊື່ອໝັ້ນຂອງສິນເຊື່ອ ຫຼື ການລະເມີດເງື່ອນໄຂເບື້ອງຕົ້ນຂອງສັນຍາ. ບັນດາລາຍການທີ່ຖືກພິຈາລະນາເມື່ອມີການກຳນົດເງິນແຮ່ຄ່າເຊື່ອມລວມມີແຜນການພັດທະນາຄວາມຍືນຍົງທາງທຸລະກິດຂອງຄູ່ສັນຍາ, ຄວາມສາມາດຂອງຫ້ວໜ່ວຍທຸລະກິດໃນການປັບປຸງຜົນການດຳເນີນງານຂອງຕົນ ໃນກໍລະນີມີຄວາມຫຍຸ້ງຍາກທາງການເງິນ, ລາຍຮັບທີ່ໄດ້ປະເມີນໄວ້ ແລະ ລາຍຈ່າຍທີ່ຄາດຄະເນໄວ້ວ່າຈະເກີດຂຶ້ນພາຍຫຼັງການລົ້ມລະລາຍ, ຄວາມພ້ອມຂອງການສະໜັບສະໜູນທາງການເງິນອື່ນໆ, ມູນຄ່າທີ່ສາມາດຮັບຮູ້ໄດ້ຂອງຫຼັກຊັບຄ้ຳປະກັນ ແລະ ໄລຍະເວລາຂອງກະແສເງິນສົດທີ່ຄາດວ່າຈະໄດ້ຮັບ. ເງິນແຮ່ຄ່າເຊື່ອມຈະຖືກປະເມີນໃນແຕ່ລະວັນທີຂອງບົດລາຍງານ, ເວັ້ນເສຍແຕ່ກໍລະນີເກີດເຫດການສຸດວິໄສທີ່ຕ້ອງໄດ້ເອົາໃຈໃສ່ຫຼາຍຂຶ້ນ.

ເງິນແຮ່ຄ່າເຊື່ອມຈາກການປະເມີນສິນເຊື່ອເປັນກຸ່ມ (collective assessment)

ເງິນແຮ່ຄ່າເຊື່ອມຈະຖືກປະເມີນເປັນກຸ່ມ ສຳລັບການສູນເສຍຂອງເງິນກູ້ ແລະ ເງິນລ່ວງໜ້າທີ່ບໍ່ສຳຄັນ ແລະ ສຳລັບເງິນກູ້ ແລະ ເງິນລ່ວງໜ້າທີ່ສຳຄັນ ທີ່ຖືກປະເມີນຄ่ำເຊື່ອມແບບເປັນລາຍບຸກຄົນແລ້ວ ແຕ່ວ່າບໍ່ພົບການເຊື່ອມຄ่ำ. ໂດຍທົ່ວໄປ ທະນາຄານຈະອີງໃສ່ປະຫວັດຂໍ້ມູນທີ່ຜ່ານມາ.

ລາຍຈ່າຍຄ้ังແຮ່ຄ่ำເຊື່ອມແມ່ນຖືກປະເມີນແຍກກັນນະວັນທີຂອງບົດລາຍງານ ແລະ ປະເມີນເປັນແຕ່ລະຂໍ້ມູນຄ้ังເງິນກູ້.

33. ຄວາມສ່ຽງດ້ານສິນເຊື່ອ (ຕໍ່)

33.2 ຈຸດສຸມຂອງຄວາມສ່ຽງສິນເຊື່ອ

ຈຸດສຸມຂອງຄວາມສ່ຽງສິນເຊື່ອເກີດຂຶ້ນເມື່ອມີລູກຄ້າໜຶ່ງລາຍດຳເນີນທຸລະກິດຄ້າຍຄືກັນ ຫຼື ດຳເນີນທຸລະກິດຢູ່ໃນຂົງເຂດພາກພື້ນດຽວກັນ ຫຼື ເມື່ອລູກຄ້າກຸ່ມນັ້ນມີຄວາມສ່ຽງໃນລັກສະນະຄ້າຍຄືກັນທີ່ຈະເປັນຕົ້ນເຫດສິ່ງຜົນກະທົບຄ້າຍຄືກັນຕໍ່ຄວາມສາມາດໃນການປະຕິບັດພັນທະທາງສັນຍາ ຖ້າເກີດມີການປ່ຽນແປງໃນເສດຖະກິດ ແລະ ເງື່ອນໄຂອື່ນໆ.

ຂອບເຂດສູງສຸດຂອງຄວາມສ່ຽງສິນເຊື່ອທີ່ຖືກຄິດໄລ່ ໂດຍປາສະຈາກການພິຈາລະນາ ຫຼັກຊັບຄ้ำປะกัน ແລະ ລາຍການອື່ນໆທີ່ໃຊ້ເຂົ້າໃນການຄ้ำປะกันเงินกู้. ຈຸດສຸມຄວາມສ່ຽງຂອງທະນາຄານແມ່ນຖືກບໍລິຫານຕາມລູກຄ้า/ຄູ່ສັນຍາ, ຕາມພື้ນທີ່ພູມສັນຖານ ແລະ ຕາມຂະແໜງອຸດສາຫະກຳ.

33. ຄວາມສ່ຽງດ້ານສິນເຊື່ອ (ຕໍ່)

33.2.1 ຈຸດສຸມຄວາມສ່ຽງທາງດ້ານສິນເຊື່ອຕາມຂະແໜງເສດຖະກິດ

ມູນຄ່າທີ່ມີຄວາມສ່ຽງຈະສູນເສຍສູງສຸດທາງດ້ານສິນເຊື່ອຕໍ່ສ່ວນປະກອບຂອງໃບລາຍງານຖານະການເງິນລວມກິດຈະການຕາມຂະແໜງ ເສດຖະກິດ (ໂດຍບໍ່ໄດ້ຄຳນຶງເຖິງຫຼັກຊັບຄ້ຳປະກັນ, ເງິນຝາກຄ້ຳປະກັນ ...) ນະວັນທີ 30 ມິຖຸນາ 2015 ມີດັ່ງລຸ່ມນີ້:

ໜ່ວຍ: ກີບ

	ລັດຖະບານ	*ສະຖາບັນການເງິນ*	*ຂະແໜງອຸດສາຫະກຳ*	*ຂະແໜງກໍ່ສ້າງ*	*ຂະແໜງປະກອບວັດຖຸເຄັ່ງນິກ*	*ຂະແໜງກະສິກຳ - ປ່າໄມ້*	*ຂະແໜງການຄ້າ*	*ຂະແໜງຂົນສົ່ງໄປສະນີ*	*ຂະແໜງບໍລິການ*	*ຫັດຂະແໜງຫັດຖະກຳ*	*ຂະແໜງອື່ນໆ*	*ລວມ*
ເງິນຝາກຢູ່ກັບ ທຫລ (*)	6,382,395	-	-	-	-	-	-	-	-	-	-	6,382,395
ໜີ້ຕ້ອງຮັບຈາກທະນາຄານອື່ນ (*)	-	2,197,709	-	-	-	-	-	-	-	-	-	2,197,709
ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ (*)	-	-	1,890,572	3,082,102	38,191	35,092	2,603,297	713,492	1,152,686	4,371	174,059	9,693,862
ການລົງທຶນທາງການເງິນ - ທີ່ມີໄວ້ເພື່ອການຄ້າ	-	-	5,504	-	-	-	-	-	-	-	-	5,504
ການລົງທຶນທາງການເງິນ - ທີ່ມີໄວ້ເພື່ອຂາຍ (*)	-	19,030	204,214	-	-	-	-	-	-	-	-	223,244
ການລົງທຶນທາງການເງິນທີ່ຖືໄວ້ຈົນຄົບກຳນົດ (*)	1,516,243	-	-	-	-	-	-	-	-	-	-	1,516,243
ລວມຍອດທັງໝົດ	**7,898,638**	**2,216,739**	**2,100,290**	**3,082,102**	**38,191**	**35,092**	**2,603,297**	**713,492**	**1,152,686**	**4,371**	**174,059**	**20,018,957**

(*): ຍອດເຫຼືອຂອງລາຍການເຫຼົ່ານີ້ແມ່ນບໍ່ລວມເງິນແຮສຳລັບການເຊື່ອມຄ່າ

33. ຄວາມສ່ຽງດ້ານສິນເຊື່ອ (ຕໍ່)

33.2 ຈຸດສຸມຂອງຄວາມສ່ຽງສິນເຊື່ອ (ຕໍ່)

33.2.2 ຈຸດສຸມຄວາມສ່ຽງທາງດ້ານສິນເຊື່ອຕາມພື້ນທີ່ພູມສັນຖານ

ການດຳເນີນງານຂອງທະນາຄານສ່ວນໃຫຍ່ແມ່ນຢູ່ໃນ ສປປ ລາວ ແລະ ບໍ່ມີຊ່ອງຫວ່າງທີ່ແຕກຕ່າງກັນໃນລະຫວ່າງແຕ່ລະຂົງເຂດ

33.3 ຄຸນະພາບຂອງສິນເຊື່ອແຍກຕາມປະເພດຂອງຊັບສິນທາງການເງິນ

33.3.1 ຄຸນະພາບຂອງສິນເຊື່ອແຍກຕາມປະເພດຂອງຊັບສິນທາງການເງິນ

ລາຍລະອຽດກ່ຽວກັບຄຸນະພາບຂອງສິນເຊື່ອແຍກຕາມປະເພດຊັບສິນທາງການເງິນທີ່ໄດ້ຮັບຜົນກະທົບຈາກຄວາມສ່ຽງທາງດ້ານສິນເຊື່ອ ນະວັນທີ 30 ມິນາ 2015 ມີດັ່ງລຸ່ມນີ້:

ໜ່ວຍ: ລ້ານກີບ

	ບໍ່ຄ້າງຊຳລະໃນອາດີດ ຫຼື ທັງບໍ່ມີຄ່າເຊື່ອມ	*ຄ້າງຊຳລະໃນອາດີດ ແຕ່ວ່າບໍ່ມີຄ່າເຊື່ອມ*	*ເຊື່ອມຄ່າແບບເປັນລາຍບຸກຄົນ*	*ລວມ*
ເງິນຝາກຢູ່ກັບ ທຫລ (*)	6,382,395	-	-	6,382,395
ໜີ້ຕ້ອງຮັບຈາກທະນາຄານອື່ນ (*)	2,197,709	-	-	2,197,709
ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ (*)	6,904,744	241,376	2,547,742	9,693,862
ການລົງທຶນທາງການເງິນ - ທີ່ມີໄວ້ເພື່ອການຄ້າ	5,504	-	-	5,504
ການລົງທຶນທາງການເງິນ - ທີ່ມີໄວ້ເພື່ອຂາຍ (*)	223,244	-	-	223,244
ການລົງທຶນທາງການເງິນທີ່ຖືໄວ້ຈົນຄົບກຳນົດ (*)	1,346,598	-	169,645	1,516,243
ລວມຍອດທັງໝົດ	**17,060,194**	**241,376**	**2,717,387**	**20,018,957**

(*): ຍອດເຫຼືອຂອງລາຍການເຫຼົ່ານີ້ແມ່ນບໍ່ລວມເງິນແຮສຳລັບການເຊື່ອມຄ່າ

ບໍ່ຄ້າງຊຳລະໃນອາດີດ ຫຼື ທັງບໍ່ມີຄ່າເຊື່ອມ: ຊັບສິນທາງການເງິນ ຫຼື ເງິນກູ້ທີ່ໄດ້ມີການຈ່າຍດອກເບ້ຍ ຫຼື ເງິນຕົ້ນທຶນແບບບໍ່ໄດ້ຄ້າງຊຳລະຢູ່ໃນອາດີດຜ່ານມາ ແລະ ບໍ່ໄດ້ມີຫຼັກຖານຂອງການເຊື່ອມຄ່າ.

ຄ້າງຊຳລະໃນອາດີດ ແຕ່ວ່າບໍ່ມີຄ່າເຊື່ອມ: ຊັບສິນທາງການເງິນທີ່ຄ້າງຈ່າຍດອກເບ້ຍ ແລະ ເງິນຕົ້ນໃນອາດີດ ແຕ່ວ່າທະນາຄານເຊື່ອວ່າຊັບສິນເຫຼົ່ານີ້ບໍ່ມີຄ່າເຊື່ອມ ເນື່ອງຈາກວ່າມັນຖືກຄ້ຳປະກັນໂດຍຫຼັກຊັບຄ້ຳປະກັນ ແລະ ມີຄວາມເຊື່ອໝັ້ນໃນຄວາມໜ້າເຊື່ອຖືຂອງລູກຄ້າ ແລະ ຫຼັກຊັບຄ້ຳປະກັນອື່ນໆ.

ເຊື່ອມຄ່າແບບເປັນລາຍບຸກຄົນ: ອະນຸພັນປະເພດໜີ້ ແລະ ເງິນກູ້ໃຫ້ແກ່ລູກຄ້າທີ່ທະນາຄານພິຈາລະນາວ່າຈະບໍ່ສາມາດເກັບຄືນດອກເບ້ຍ ແລະ ເງິນຕົ້ນພາຍໃນໄລຍະທີ່ກຳນົດໃນສັນຍາ.

33. ຄວາມສ່ຽງດ້ານສິນເຊື່ອ (ຕໍ່)

33.3 ຄຸນະພາບຂອງສິນເຊື່ອແຍກຕາມປະເພດຂອງຊັບທາງການເງິນ (ຕໍ່)

33.3.2 ຊັບສິນທາງການເງິນປະເພດ ເກີນກຳນົດຊຳລະ ແຕ່ບໍ່ໄດ້ເຊື່ອມຄ່າ

ລາຍລະອຽດກ່ຽວກັບຊັບສິນທາງການເງິນ ປະເພດ ເກີນກຳນົດຊຳລະ ແຕ່ວ່າບໍ່ໄດ້ເຊື່ອມຄ່າ ນະວັນທີ 30 ມິຖຸນາ 2015 ມີດັ່ງລຸ່ມນີ້:

	ເກີນກຳນົດຕ່ຳ ກວ່າ 91 ມື້	*ເກີນກຳນົດຢູ່ ລະຫວ່າງ 91 ມື້ ຂຶ້ນໄປແຕ່ບໍ່ເກີນ 181 ມື້*	*ເກີນກຳນົດຢູ່ ລະຫວ່າງ 181 ມື້ ຂຶ້ນໄປແຕ່ບໍ່ເກີນ 361 ມື້*	*ເກີນກຳນົດເກີນ 360 ມື້*	*ລວມ*
ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ ລູກຄ້າ (*)	159,078	25,498	17,280	39,520	241,376
ລວມ	**159,078**	**25,498**	**17,280**	**39,520**	**241,376**

(*):ຍອດເຫຼືອຂອງລາຍການເຫຼົ່ານີ້ແມ່ນບໍ່ລວມດອກເບ້ຍຄ້າງຮັບ ແລະ ຄ່າເຊື່ອມທີ່ເສຍ

34. ຄວາມສ່ຽງທາງດ້ານສະພາບຄ່ອງ

ຄວາມສ່ຽງທາງດ້ານສະພາບຄ່ອງແມ່ນຄວາມສ່ຽງທີ່ທາງທະນາຄານຈະເຂົ້າສູ່ພາວະຄວາມຫຍຸ້ງຍາກໃນການປະຕິບັດພັນທະຕ່າງໆ ທີ່ຕິດພັນກັບໜີ້ສິນທາງການເງິນ ທີ່ຕ້ອງຊຳລະດ້ວຍເງິນສົດ ຫຼື ຊັບສິນທາງການເງິນອື່ນໆ. ຄວາມສ່ຽງທາງດ້ານສະພາບຄ່ອງເກີດຂຶ້ນເນື່ອງຈາກເມື່ອມີຄວາມເປັນໄປໄດ້ທີ່ທະນາຄານຈະບໍ່ສາມາດປະຕິບັດພັນທະໃນການຊຳລະເງິນ ເມື່ອພັນທະດັ່ງກ່າວເຖິງກຳນົດເວລາຊຳລະ ພາຍໃຕ້ສະພາບປົກກະຕິ ຫຼື ສະຖານະການທີ່ກົດດັນໃດໜຶ່ງ. ເພື່ອຈຳກັດຄວາມສ່ຽງນີ້, ນອກເໜືອຈາກ ພື້ນຖານການລະດົມທຶນຫລັກແລ້ວ, ນອກຈາກນີ້ ຄະນະອຳນວຍການໄດ້ມີການກະກຽມຂະຫຍາຍໃຫ້ກົດຈະກຳການບໍລິການຫລາຍດ້ານຂຶ້ນ ແລະ ນຳໃຊ້ ນະໂຍບາຍ ແລະ ສ້າງຄວາມເຂົ້າໃຈກ່ຽວກັບການບໍລິຫານຈັດການຊັບສິນກັບສະພາບຄ່ອງ ແລະ ມີການຕິດຕາມກະແສເງິນສົດ ແລະ ສະພາບຄ່ອງໃນອະນາຄົດເປັນແຕ່ລະວັນ. ທະນາຄານໄດ້ມີການພັດທະນາຂະບວນການຄວບຄຸມພາຍໃນ ແລະ ແຜນສຳຮອງຕ່າງໆ ເພື່ອໃຊ້ບໍລິຫານຄວາມສ່ຽງສະພາບຄ່ອງ. ສິ່ງດັ່ງກ່າວໄດ້ລວບລວມການປະເມີນກະແສເງິນສົດຄາດຄະເນ ແລະ ຫລັກຊັບຄ້ຳປະກັນທີ່ມີລະດັບສູງທີ່ມີຢູ່ ເຊິ່ງສາມາດໃຊ້ເຂົ້າໃນການປ້ອງກັນເພີ່ມເຕີມຕໍ່ທຶນ ເມື່ອມີຄວາມຕ້ອງການ.

ໄລຍະຄົບກຳນົດຂອງຊັບສິນ ແລະ ໜີ້ສິນ ແມ່ນສະແດງໃຫ້ກັບ ໄລຍະເວລາທີ່ຍັງເຫຼືອຢູ່ຂອງຊັບສິນ ແລະ ໜີ້ສິນ ໂດຍໄດ້ຄິດໄລ່ຈາກ ວັນທີຂອງໃບລາຍງານຖານະການເງິນ ຫາ ວັນທີລ່າສຸດຂອງການຊຳລະສະສາງ ຕາມທີ່ໄດ້ກຳນົດໄວ້ພາຍໃຕ້ສັນຍາຕ່າງໆ ຫຼື ພາຍໃຕ້ເງື່ອນໄຂ ແລະ ຂໍ້ກຳນົດຕ່າງໆທີ່ໄດ້ອອກ.

ບັນດາຂໍ້ສົມມຸດຖານ ແລະ ເງື່ອນໄຂຂ້າງລຸ່ມນີ້ໄດ້ຖືກນຳໃຊ້ເຂົ້າໃນການເຮັດການວິເຄາະຄວາມສ່ຽງສະພາບຄ່ອງທາງດ້ານຊັບສິນ ແລະ ໜີ້ສິນຂອງທະນາຄານ:

34. ຄວາມສ່ຽງທາງດ້ານສະພາບຄ່ອງ (ຕໍ່)

- ເງິນສົດ ແລະ ທຽບເທົ່າເງິນສົດໃນກຳມື, ເງິນຝາກກະແສລາຍວັນກັບ ທຫລ ແລະ ທະນາຄານອື່ນ ແມ່ນຖືກຈັດເປັນປະເພດ ຕາມຄວາມຕ້ອງການ;
- ຍອດເຫຼືອຂອງເງິນຝາກພາກບັງຄັບກັບ ທຫລ ແມ່ນຖືກຈັດເປັນປະເພດ ກຳນົດຫລາຍກວ່າ 5 ປີ;
- ໄລຍະຄົບກຳນົດຂອງຂອງເງິນຝາກກັບທຫລ ແລະ ທະນາຄານອື່ນ; ການລົງທຶນປະເພດຖືໄວ້ຈົນຄົບກຳນົດ ແລະ ເງິນກູ້ໃຫ້ລູກຄ້າ ແມ່ນຖືກກຳນົດຕາມມື້ຄົບກຳນົດຕາມທີ່ໄດ້ລະບຸໄວ້ໃນສັນຍາຕ່າງໆ. ອັນຄົບກຳນົດຕົວຈິງອາດຈະມີການປ່ຽນແປງ ເນື່ອງຈາກສັນຍາເງິນກູ້ອາດຈະຖືກຂະຫຍາຍເວລາອອກໄປ.
- ໄລຍະຄົບກຳນົດຂອງການລົງທຶນໃນຫຼັກຊັບທຶນ ປະເພດມີໄວ້ເພື່ອຂາຍແມ່ນຖືກພິຈາລະນາວ່າມີກຳນົດ ຕ່ຳກວ່າ 3 ເດືອນ ເນື່ອງຈາກວ່າ ລາຍການລົງທຶນເຫຼົ່ານີ້ບໍ່ມີມື້ຄົບກຳນົດທີ່ແນ່ນອນ;
- ໄລຍະຄົບກຳນົດຂອງເງິນຝາກ ແລະ ເງິນກູ້ຢືມ ຈາກທະນາຄານອື່ນ; ແລະ ເງິນຝາກຈາກລູກຄ້າ ແມ່ນຈະກຳນົດຕາມລັກສະນະຈຸດເດັ່ນຂອງລາຍການເຫຼົ່ານີ້ ຫຼື ຕາມທີ່ໄດ້ລະບຸໄວ້ໃນສັນຍາຕ່າງໆ. ເງິນຝາກກະແສລາຍວັນແມ່ນຈະຖືກດຳເນີນການເຄື່ອນໄຫວອີງຕາມທີ່ລູກຄ້າສະເໜີ ເພາະສະນັ້ນ, ຈຶ່ງຖືກຈັດເປັນປະເພດ ຕາມຄວາມຕ້ອງການ. ໄລຍະຄົບກຳນົດຂອງເງິນກູ້ຢືມ ແລະ ເງິນຝາກມີກຳນົດ ແມ່ນຖືກກຳນົດຕາມວັນຄົບກຳນົດທີ່ໄດ້ລະບຸໄວ້ໃນສັນຍາ. ໃນຄວາມເປັນຈິງແລ້ວ, ມູນຄ່າເຫຼົ່ານີ້ອາດຈະຖືກສະຫຼັບສັບປ່ຽນ ເພາະສະນັ້ນ ລາຍການເຫຼົ່ານີ້ອາດຈະຍັງມີຢູ່ກາຍວັນຄົບກຳນົດເດີມ.
- ໄລຍະຄົບກຳນົດຂອງຊັບສິນບັດຄົງທີ່ແມ່ນຖືກກຳນົດຈາກໄລຍະການນຳໃຊ້ທີ່ຍັງເຫຼືອຂອງຊັບສິນ;
- ໄລຍະຄົບກຳນົດຂອງຊັບສິນ ແລະ ໜີ້ສິນອື່ນໆ ແມ່ນຖືກກຳນົດຕາມໄລຍະມື້ຄົບກຳນົດຕົວຈິງຂອງແຕ່ລະລາຍງານຂອງ ຊັບສິນ ແລະ ໜີ້ສິນອື່ນໆ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ (ຕໍ່)
ນະວັນທີ ແລະ ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015

34. ຄວາມສ່ຽງທາງດ້ານສະພາບຄ່ອງ (ຕໍ່)

ການຈັດປະເພດຂອງຊັບສິນ ແລະ ໜີ້ສິນ ອີງຕາມວັນຄົບກຳນົດ ນະວັນທີ 30 ມິຖຸນາ 2015 ມີດັ່ງລຸ່ມນີ້:

ຫົວໜ່ວຍ: ລ້ານກີບ

		ກ່ອນວັນຄົບກຳນົດ					
	ເກີນກຳນົດ	*ຕາມຄວາມຕ້ອງການ*	*ຕ່ຳກວ່າ 3 ເດືອນ*	*3 ຫາ 12 ເດືອນ*	*1 ຫາ 5 ປີ*	*ຫຼາຍກວ່າ 5 ປີ*	*ລວມທັງໝົດ*
ຊັບສິນ							
ເງິນສົດ ແລະ ທຽບເທົ່າເງິນສົດ ໃນກຳມື	-	2,646,132	-	-	-	-	2,646,132
ເງິນຝາກຢູ່ກັບ ທຫລ	-	5,313,088	-	-	-	1,069,307	6,382,395
ໜີ້ຕ້ອງຮັບຈາກທະນາຄານອື່ນ (*)	-	1,517,402	576,255	79,028	25,024	-	2,197,709
ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (*)	1,242,021	-	598,043	2,182,252	4,493,625	1,177,921	9,693,862
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອການຄ້າ	-	5,504	-	-	-	-	5,504
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ (*)	-	-	223,244	-	-	-	223,244
ການລົງທຶນທາງດ້ານການເງິນ - ປະເພດຖືໄວ້ຈົນຄົບກຳນົດ (*)	-	-	180,419	953,657	366,088	16,079	1,516,243
ການລົງທຶນໃນບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ (*)	-	-	-	-	-	547,173	547,173
ຊັບສິມບັດ ແລະ ອຸປະກອນ	-	-	156	1,404	76,643	181,465	259,668
ຊັບສິມບັດຖິ່ງທີ່ບໍ່ມີຕົວຕົນ	-	-	-	97	40,987	215,715	256,799
ຊັບສິນອາກອນເຍື້ອນຊຳລະ	-	-	132	1,908	1,352	3,137	6,529
ຊັບສິນອື່ນໆ (*)	-	-	20,042	36,235	224,251	-	280,528
ລວມຊັບສິນທັ້ງໝົດ	**1,242,021**	**9,482,126**	**1,598,291**	**3,254,581**	**5,227,970**	**3,210,797**	**24,015,786**
ໜີ້ສິນ							
ໜີ້ຕ້ອງສົ່ງທະນາຄານອື່ນ	-	2,103,874	4,008	97,829	40,616	-	2,246,327
ໜີ້ຕ້ອງສົ່ງລູກຄ້າ	-	12,300,502	295,000	2,831,133	4,520,003	-	19,946,638
ເງິນກູ້ຢືມຈາກ ທຫລ	-	-	-	-	-	247,886	247,886
ໜີ້ສິນອາກອນພາຍໃນໄລຍະ	-	-	19,431	-	-	-	19,431
ໜີ້ສິນອາກອນເຍື້ອນຊຳລະ	-	-	5,536	462	-	19,473	25,471
ໜີ້ສິນອື່ນໆ	-	-	1,682	18,644	25,617	12,903	58,846
ລວມໜີ້ສິນທັ້ງໝົດ	**-**	**14,404,376**	**325,657**	**2,948,068**	**4,586,236**	**280,262**	**22,544,599**
ມູນຄ່າທີ່ມີຄວາມສ່ຽງສະພາບຄ່ອງ	**1,242,021**	**(4,922,250)**	**1,272,634**	**306,513**	**641,734**	**2,930,535**	**1,471,187**

(*) ຍອດເຫຼືອຂອງລາຍການເຫຼົ່ານີ້ແມ່ນບໍ່ລວມມູນຄ່າເງິນແຮ່ຄ່າເຊື່ອມ

35. ຄວາມສ່ຽງທາງດ້ານການຕະຫລາດ

ຄວາມສ່ຽງທາງດ້ານການຕະຫລາດແມ່ນຄວາມສ່ຽງທີ່ມູນຄ່າຍຸດຕິທຳ ຫຼື ກະແສເງິນສົດໃນອານາຄົດຂອງເຄື່ອງມືທາງການເງິນຈະມີການຜັນຜວນ ເນື່ອງຈາກມີການປ່ຽນແປງຂອງລາຄາໃນຕະຫຼາດ. ຄວາມສ່ຽງທາງດ້ານການຕະຫລາດເກີດຂຶ້ນຈາກລາຄາທີ່ສະເໜີຂາຍຂອງອັດຕາດອກເບ້ຍ, ເງິນຕາຕ່າງປະເທດ ແລະ ເຄື່ອງມືອະນຸພັນປະເພດທຶນ ເຊິ່ງຖືກກະທົບຈາກການຜັນຜວນໃນຕະຫລາດທົ່ວໄປ ແລະ ໃນຕະຫລາດສະເພາະເຈາະຈົງໃດໜຶ່ງ ແລະ ຈາກຄວາມບໍ່ຄົງທີ່ຂອງຕະຫລາດເຊັ່ນ: ອັດຕາດອກເບ້ຍ, ອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ລາຄາຂອງຫຼັກຊັບທຶນ.

35.1 ຄວາມສ່ຽງດ້ານອັດຕາດອກເບ້ຍ

ຄວາມສ່ຽງດ້ານອັດຕາດອກເບ້ຍເກີດຂຶ້ນຈາກຄວາມເປັນໄປໄດ້ຂອງການປ່ຽນແປງອັດຕາດອກເບ້ຍ ເຊິ່ງກະທົບຕໍ່ກຳໄລໃນອະນາຄົດ ຫລື ມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນ. ທະນາຄານໄດ້ປະເຊີນກັບຄວາມສ່ຽງດ້ານອັດຕາດອກເບ້ຍ ເຊິ່ງເປັນຜົນຂອງຄວາມບໍ່ສອດຄ່ອງຂອງການຈັບຄູ່ການຕັ້ງລາຄາຄືນໃໝ່ຂອງຊັບສິນ ແລະ ໜີ້ສິນ. ທະນາຄານບໍລິຫານຄວາມສ່ຽງນີ້ຜ່ານຍຸດທະສາດການບໍລິຫານຄວາມສ່ຽງ ໂດຍການຈັບຄູ່ການຕັ້ງລາຄາຄືນໃໝ່ຂອງຊັບສິນ ແລະ ໜີ້ສິນ.

ໄລຍະເວລາທີ່ຍັງເຫຼືອຂອງການຕັ້ງລາຄາຄືນໃໝ່ແມ່ນສະແດງໃຫ້ກັບ ໄລຍະເວລາທີ່ຍັງເຫຼືອຂອງຊັບສິນ ແລະ ໜີ້ສິນ ເຊິ່ງຄິດໄລ່ຈາກວັນທີຂອງໃບລາຍງານຖານະການເງິນ ຫາ ວັນທີລ່າສຸດທີ່ໄດ້ຕັ້ງລາຄາຄືນໃໝ່.

ບັນດາຂໍ້ສົມມຸດຖານ ແລະ ເງື່ອນໄຂຂ້າງລຸ່ມນີ້ໄດ້ຖືກນຳໃຊ້ເຂົ້າໃນການເຮັດການວິເຄາະຄວາມສ່ຽງດ້ານອັດຕາດອກເບ້ຍຂອງ ຊັບສິນ ແລະ ໜີ້ສິນຂອງທະນາຄານ:

- ເງິນສົດ ແລະ ທຽບເທົ່າເງິນສົດໃນກຳມື: ເງິນຝາກພາກບັງຄັບ ກັບ ທຫລ; ການລົງທຶນໃນຫຼັກຊັບ - ປະເພດມີໄວ້ເພື່ອຂາຍ; ການລົງທຶນໃນບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ; ແລະ ຊັບສິນອື່ນໆ(ບໍ່ລວມເອົາຊັບສິນປັດຄົງທີ່ ແລະ ຊັບສິນອື່ນໆ)ແມ່ນຈັດເປັນປະເພດ ລາຍການບໍ່ມີການຕັ້ງລາຄາຄືນໃໝ່;
- ເງິນຝາກກະແສລາຍວັນກັບ ທຫລ ແລະ ທະນາຄານອື່ນ ແມ່ນຖືກຈັດເປັນປະເພດ ເງິນຝາກກະແສລາຍວັນ ແລະ ການຕັ້ງລາຄາຄືນໃໝ່ຂອງອັດຕາດອກເບ້ຍແມ່ນ ພາຍໃນ 1 ເດືອນ;
- ໄລຍະເວລາຂອງການຕັ້ງລາຄາຄືນໃໝ່ຂອງການລົງທຶນໃນຫລັກຊັບ-ປະເພດຖືໄວ້ຈົນຄົບກຳນົດແມ່ນຖືກຄິດໄລ່ອີງຕາມມື້ຄົບກຳນົດຕົວຈິງຂອງແຕ່ລະປະເພດຂອງຫລັກຊັບ ນັບຈາກວັນທີຂອງເອກະສານລາຍງານ;
- ໄລຍະເວລາຂອງການຕັ້ງລາຄາຄືນໃໝ່ຂອງເງິນຝາກມີກຳນົດກັບ ທຫລ; ເງິນຝາກກັບທະນາຄານອື່ນ ແລະ ເງິນກູ້ໃຫ້ທະນາຄານອື່ນ; ເງິນກູ້ໃຫ້ລູກຄ້າ;ເງິນຝາກ ແລະ ເງິນກູ້ຢືມຈາກ ທຫລ ແລະ ທະນາຄານອື່ນ; ແລະ ເງິນຝາກຈາກລູກຄ້າ ແມ່ນຖືກກຳນົດດັ່ງລຸ່ມນີ້:
  - ມີອັດຕາດອກເບ້ຍຄົງທີ່: ໄລຍະເວລາແມ່ນຄິດໄລ່ຈາກວັນທີຂອງເອກະສານລາຍງານການເງິນ ຫາ ວັນຄົບກຳນົດ
  - ມີອັດຕາດອກເບ້ຍບໍ່ຄົງທີ່: ໄລຍະເວລາແມ່ນຄິດໄລ່ຈາກວັນທີຂອງເອກະສານລາຍງານການເງິນ ຫາ ວັນທີ່ໃກ້ກັບວັນຕັ້ງລາຄາຄືນໃໝ່ຄັ້ງລ່າສຸດ.
- ໄລຍະການຕັ້ງລາຄາຄືນໃໝ່ຂອງອັດຕາດອກເບ້ຍຂອງໜີ້ສິນອື່ນໆແມ່ນຄິດໄລ່ໂດຍອີງຕາມມື້ຄົບກຳນົດຕົວຈິງຂອງແຕ່ລະລາຍການ.

35. ຄວາມສ່ຽງທາງດ້ານການຕະຫລາດ (ຕໍ່)

35.1 ຄວາມສ່ຽງດ້ານອັດຕາດອກເບ້ຍ (ຕໍ່)

ການຈັດປະເພດຂອງຊັບສິນ ແລະ ໜີ້ສິນ ອີງຕາມການຕັ້ງລາຄາຄືນໃໝ່ຂອງອັດຕາດອກເບ້ຍ ນະວັນທີ ນະວັນທີ 30 ມິຖຸນາ 2015 ມີດັ່ງລຸ່ມນີ້:

	ບໍ່ມີການຕັ້ງລາ ຄາຄືນໃໝ່	*ເຖິງ 1 ເດືອນ*	*1 ຫາ 3 ເດືອນ*	*3 - 6 ເດືອນ*	*6 - 12 ເດືອນ*	*1 - 5 ປີ*	*ຫລາຍກວ່າ 5 ປີ*	*ລວມທັງໝົດ*
ຊັບສິນ								
ເງິນສົດ ແລະ ທຽບເທົ່າເງິນສົດ ໃນກຳມື	2,646,132	-	-	-	-	-	-	2,646,132
ເງິນຝາກຢູ່ກັບ ທຫລ	6,382,395	-	-	-	-	-	-	6,382,395
ໜີ້ຕ້ອງຮັບຈາກທະນາຄານອື່ນ (*)	1,517,402	576,255	-	-	104,052	-	-	2,197,709
ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (*)	1,242,021	296,581	301,462	580,544	1,601,708	4,493,625	1,177,921	9,693,862
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອການຄ້າ	5,504	-	-	-	-	-	-	5,504
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ (*)	223,244	-	-	-	-	-	-	223,244
ການລົງທຶນທາງດ້ານການເງິນ - ປະເພດຖືໄວ້ຈົນຄົບກຳນົດ (*)	-	-	180,419	59,464	894,193	366,088	16,079	1,516,243
ການລົງທຶນໃນບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ (*)	547,173	-	-	-	-	-	-	547,173
ຊັບສິນບັດ ແລະ ອຸປະກອນ	259,668	-	-	-	-	-	-	259,668
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	256,799	-	-	-	-	-	-	256,799
ຊັບສິນອາກອນເຍື້ອນຊຳລະ	6,529	-	-	-	-	-	-	6,529
ຊັບສິນອື່ນໆ (*)	280,528	-	-	-	-	-	-	280,528
ລວມຊັບສິນທັງໝົດ	**13,367,395**	**872,836**	**481,881**	**640,008**	**2,599,953**	**4,859,713**	**1,194,000**	**24,015,786**
ໜີ້ສິນ								
ໜີ້ຕ້ອງສົ່ງທະນາຄານອື່ນ	2,103,875	-	4,008	64,857	32,971	40,616	-	2,246,327
ໜີ້ຕ້ອງສົ່ງລູກຄ້າ	12,391,064	-	295,000	778,263	1,962,308	4,520,003	-	19,946,638
ເງິນກູ້ຢືມຈາກ ທຫລ	-	-	-	-	-	-	247,886	247,886
ໜີ້ສິນທາງດ້ານອາກອນໃນປີ	19,431	-	-	-	-	-	-	19,431
ໜີ້ສິນອາກອນເຍື້ອນຊຳລະ	25,471	-	-	-	-	-	-	25,471
ໜີ້ສິນອື່ນໆ	58,846	-	-	-	-	-	-	58,846
ລວມໜີ້ສິນທັງໝົດ	**14,598,687**	**-**	**299,008**	**843,120**	**1,995,279**	**4,560,619**	**247,886**	**22,544,599**
ມູນຄ່າທີ່ມີຄວາມສ່ຽງດ້ານອັດຕາດອກເບ້ຍ	**(1,231,292)**	**872,836**	**182,873**	**(203,112)**	**604,674**	**299,094**	**946,114**	**1,471,187**

(*) ຍອດເຫຼືອຂອງລາຍການເຫຼົ່ານີ້ແມ່ນບໍ່ລວມມູນຄ່າເງິນແຮ່ຄ່າເຊື່ອມ

35. ຄວາມສ່ຽງທາງດ້ານການຕະຫລາດ (ຕໍ່)

35.1 ຄວາມສ່ຽງດ້ານອັດຕາດອກເບ້ຍ (ຕໍ່)

ການວິເຄາະຄວາມອ່ອນໄຫວຂອງຄວາມສ່ຽງທາງດ້ານດອກເບ້ຍ

ຄວາມອ່ອນໄຫວຂອງໃບລາຍງານຜົນໄດ້ຮັບລວມກິດຈະການແມ່ນຈະໄດ້ຮັບຜົນຈາກການສົມມຸດໄວ້ກ່ຽວກັບການປ່ຽນແປງຂອງ ອັດຕາດອກເບ້ຍຂອງກຳໄລ ຫຼື ຂາດທຶນ ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015 ອີງໃສ່ອັດຕາດອກເບ້ຍທີ່ ປ່ຽນແປງຂອງຊັບສິນ ຫຼື ໜີ້ສິນທາງການເງິນທີ່ບໍ່ໄດ້ຊື້-ຂາຍ ເຊິ່ງທະນາຄານໄດ້ຖືຄອງໄວ້ນະວັນທີ 30 ມິຖຸນາ 2015 (ລວມທັງ ລາຍການດັ່ງຕໍ່ໄປນີ້: ເງິນສົດ ແລະ ທຽບເທົ່າເງິນສົດໃນກຳມື, ຍອດເຫຼືອກັບ ທຫລ, ໜີ້ຕ້ອງຮັບຈາກທະນາຄານອື່ນ, ເງິນກູ້ໃຫ້ ລູກຄ້າ, ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ, ການລົງທຶນໃນຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ, ໜີ້ຕ້ອງສົ່ງທະນາຄານ ອື່ນ ແລະ ໜີ້ຕ້ອງສົ່ງລູກຄ້າ).

ເນື່ອງຈາກວ່າທະນາຄານບໍ່ມີຈຳນວນຊັບສິນ ແລະ ໜີ້ສິນທີ່ເປັນອັດຕາດອກເບ້ຍແບບລອຍຕົວ, ດັ່ງນັ້ນ ທຸກໆການປ່ຽນແປງໃນ ອັດຕາດອກເບ້ຍຈະບໍ່ມີຜົນກະທົບຕໍ່ໃບລາຍງານຜົນໄດ້ຮັບລວມກິດຈະການຂອງທະນາຄານ.

35.2 ຄວາມສ່ຽງດ້ານເງິນຕາ

ຄວາມສ່ຽງດ້ານເງິນຕາເກີດຈາກອັດຕາແລກປ່ຽນເງິນຕາຕ່າງປະເທດມີການປ່ຽນແປງເຊິ່ງຈະກະທົບໃສ່ຖານະເງິນຕາຕ່າງປະເທດ ຂອງທະນາຄານໃນທາງລົບ. ທະນາຄານໄດ້ກຳນົດເພດານຂອງຖານະເງິນຕາແຕ່ລະຊະນິດພາຍໃຕ້ລະບຽບການປະເມີນຄວາມສ່ຽງ ພາຍໃນ ແລະ ຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ. ແຕ່ລະຖານະຂອງເງິນຕາຕ່າງປະເທດແມ່ນໄດ້ຖືກຕິດຕາມກວດກາທຸກໆ ມື້ເພື່ອຮັບປະກັນໃຫ້ຖານະເງິນຕາຖືກຮັກສາໄວ້ຢູ່ໃນຂອບເຂດຂອງເພດານທີ່ໄດ້ສ້າງຂຶ້ນ.

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ (ຕໍ່)
ນະວັນທີ ແລະ ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015

35. ຄວາມສ່ຽງທາງດ້ານການເງິນ (ຕໍ່)

35.2 ຄວາມສ່ຽງດ້ານເງິນຕາ (ຕໍ່)

ລາຍລະອຽດຂອງຊັບສິນ ແລະ ໜີ້ສິນທີ່ຖືກປ່ຽນເປັນລ້ານກີບໃນວັນທີ ນະວັນທີ 30 ມິນາ 2015 ມີດັ່ງລຸ່ມນີ້:

	ກີບ ລ້ານກີບ	*ໂດລາ ລ້ານກີບ*	*ໄທບາດ ລ້ານກີບ*	*ອື່ນໆ ລ້ານກີບ*	*ລວມ ລ້ານກີບ*
ຊັບສິນ					
ເງິນສົດ ແລະ ທຽບເທົ່າເງິນສົດ ໃນກຳມື	1,461,602	918,438	251,940	14,152	2,646,132
ເງິນຝາກຢູ່ກັບ ທຫລ	3,585,765	1,376,712	1,419,918	-	6,382,395
ໜີ້ຕ້ອງຮັບຈາກທະນາຄານອື່ນ (*)	231,266	1,332,148	571,794	62,501	2,197,709
ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (*)	4,020,455	4,350,644	1,322,763	-	9,693,862
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອການຄ້າ	5,504	-	-	-	5,504
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ (*)	204,214	-	19,030	-	223,244
ການລົງທຶນທາງດ້ານການເງິນ - ປະເພດຖືໄວ້ຈົນຄົບກຳນົດ (*)	1,516,243	-	-	-	1,516,243
ການລົງທຶນໃນບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ (*)	547,173	-	-	-	547,173
ຊັບສິມບັດ ແລະ ອຸປະກອນ	259,668	-	-	-	259,668
ຊັບສິມບັດຄົງທີ່ບໍ່ມີຕົວຕົນ	256,799	-	-	-	256,799
ຊັບສິນອາກອນເງື້ອນຊຳລະ	6,529	-	-	-	6,529
ຊັບສິນອື່ນໆ (*)	262,224	16,659	1,645	-	280,528
ລວມຊັບສິນທັ້ງໝົດ	**12,357,442**	**7,994,601**	**3,587,090**	**76,653**	**24,015,786**
ໜີ້ສິນ					
ໜີ້ຕ້ອງສົ່ງທະນາຄານອື່ນ	1,283,703	728,343	231,797	2,484	2,246,327
ໜີ້ຕ້ອງສົ່ງລູກຄ້າ	9,763,441	6,992,543	3,141,069	49,585	19,946,638
ເງິນກູ້ຢືມຈາກ ທຫລ	199,926	47,960	-	-	247,886
ໜີ້ສິນອາກອນໃນປີ	19,431	-	-	-	19,431
ໜີ້ສິນອາກອນເງື້ອນຊຳລະ	25,471	-	-	-	25,471
ໜີ້ສິນອື່ນໆ	29,432	29,116	298	-	58,846
ລວມໜີ້ສິນ	**11,321,404**	**7,797,962**	**3,373,164**	**52,069**	**22,544,599**
ທຶນ	**1,152,276**	**-**	**-**	**-**	**1,152,276**
ລວມໜີ້ສິນ ແລະ ທຶນ	**12,473,680**	**7,797,962**	**3,373,164**	**52,069**	**23,696,875**
ຖານະເງິນຕາຕ່າງປະເທດສຸດທິໃນໃບລາຍງານຖານະການເງິນ	**(116,238)**	**196,639**	**213,926**	**24,584**	**318,911**

(*) ຍອດເຫຼືອຂອງລາຍການເຫຼົ່ານີ້ແມ່ນບໍ່ລວມມູນຄ່າເງິນແຮຄ່າເຊື່ອມ

35. ຄວາມສ່ຽງທາງດ້ານການຕະຫລາດ (ຕໍ່)

35.2 ຄວາມສ່ຽງດ້ານເງິນຕາ (ຕໍ່)

ການວິເຄາະຄວາມອ່ອນໄຫວຂອງຄວາມສ່ຽງທາງດ້ານດອກເບ້ຍ

ຕາຕະລາງລຸ່ມນີ້ຊີ້ໃຫ້ເຫັນສະກຸນເງິນທີ່ທະນາຄານມີຄວາມສ່ຽງທີ່ຈະເກີດຄວາມສູນເສຍທີ່ສູງ ຕໍ່ກັບ ຊັບສິນ ແລະ ໜີ້ສິນທາງການເງິນ ນະວັນທີ 30 ມິຖຸນາ 2015 ແລະ ການຄາດຄະເນກະແສເງິນສົດຂອງທະນາຄານເອງ. ການວິເຄາະນີ້ຄິດໄລ່ຜົນກະທົບຕໍ່ໃບລາຍງານຜົນໄດ້ຮັບຈາກຄວາມເປັນໄປໄດ້ຢ່າງສົມເຫດສົມຜົນຂອງການເໜັງຕີງຂອງອັດຕາແລກປ່ຽນຕໍ່ເງິນກີບ ໂດຍມີເງື່ອນໄຂວ່າ ຕົວແປອື່ນໆແມ່ນຄົງທີ່ (ເນື່ອງຈາກມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທີ່ເປັນເງິນທີ່ມີຄວາມອ່ອນໄຫວທາງດ້ານສະກຸນເງິນ). ມູນຄ່າທີ່ເປັນມູນຄ່າລົບໃນຕາຕະລາງຂ້າງລຸ່ມນີ້ແມ່ນສະທ້ອນໃຫ້ເຫັນເຖິງໂອກາດຄວາມເປັນໄປໄດ້ຂອງມູນຄ່າຫຼຸດລົງສຸດທິໃນໃບລາຍງານຜົນໄດ້ຮັບ ແລະ ໃນຂະນະດຽວກັນ ມູນຄ່າທີ່ເປັນມູນຄ່າບວກແມ່ນສະທ້ອນໃຫ້ເຫັນເຖິງ ໂອກາດຄວາມເປັນໄປໄດ້ຂອງມູນຄ່າເພີ່ມຂຶ້ນສຸດທິ.

ໜ່ວຍ: ລ້ານກີບ

	ຜົນກະທົບຕໍ່ກຳໄລກ່ອນອາກອນ		*ຜົນກະທົບຕໍ່ກຳໄລຫລັງອາກອນ*	
	ອັດຕາແລກປ່ຽນເພີ່ມຂຶ້ນ 10%	*ອັດຕາແລກປ່ຽນຫຼຸດລົງ 10%*	*ອັດຕາແລກປ່ຽນເພີ່ມຂຶ້ນ 10%*	*ອັດຕາແລກປ່ຽນຫຼຸດລົງ 10%*
ໂດລາສະຫະລັດ	19,664	(19,664)	15,928	(15,928)
ບາດໄທ	21,393	(21,393)	17,328	(17,328)
ອື່ນໆ	2,458	(2,458)	1,991	(1,991)
ລວມທັງໝົດ	**43,515**	**(43,515)**	**35,247**	**(35,247)**

35.3 ຄວາມສ່ຽງດ້ານລາຄາຂອງທຶນ

ຄວາມສ່ຽງທາງດ້ານລາຄາຂອງທຶນ ແມ່ນຄວາມສ່ຽງທີ່ມູນຄ່າຍຸດຕິທຳຂອງທຶນຫຼຸດລົງເຊິ່ງເປັນຜົນເນື່ອງຈາກການປ່ຽນແປງໃນລະດັບຂອງດັດຊະນີຂອງທຶນ ແລະ ຫຼັກຊັບເປັນແຕ່ລະລາຍ. ຄວາມສ່ຽງຂອງລາຄາທຶນທີ່ບໍ່ໄດ້ມີການຊື້-ຂາຍ ເກີດຂຶ້ນຍ້ອນຫລັກຊັບປະເພດທຶນທີ່ຈັດເປັນປະເພດມີໄວ້ເພື່ອຂາຍ. ເມື່ອມູນຄ່າຂອງຫລັກຊັບທຶນປະເພດມີໄວ້ເພື່ອຂາຍເພີ່ມຂຶ້ນ 10 ສ່ວນຮ້ອຍ ນະວັນທີ 30 ມິຖຸນາ 2015 ຈະເຮັດໃຫ້ທຶນເພີ່ມຂຶ້ນ 16.967 ລ້ານກີບ. ຖ້າຫາກມູນຄ່າການຫຼຸດລົງແມ່ນເທົ່າກັນ ແມ່ນຈະສົ່ງຜົນໃນທາງກົງກັນຂ້າມກັນ ແລະ ອາດຈະ ສົ່ງຜົນໃຫ້ເກີດມີໂອກາດທີ່ຈະມີຄ່າເຊື່ອມ, ເຊິ່ງຈະສົ່ງຜົນໃຫ້ກຳໄລຫລັງອາກອນຫຼຸດລົງໂດຍປະມານ 16.967 ລ້ານກີບ.

36. ຄວາມສ່ຽງດ້ານການດຳເນີນງານ

ຄວາມສ່ຽງດ້ານການດຳເນີນງານແມ່ນຄວາມສ່ຽງຂອງການສູນເສຍຈາກລະບົບລົ້ມເຫຼວ, ຄວາມຜິດພາດຂອງມະນຸດ, ການສໍ້ໂກງ ຫຼື ເຫດການພາຍນອກອື່ນໆ. ເມື່ອການຄວບຄຸມຕ່າງໆບໍ່ສາມາດປະຕິບັດໄດ້, ຄວາມສ່ຽງທາງດ້ານການດຳເນີນງານສາມາດສ້າງຄວາມເສຍຫາຍໃຫ້ຊື່ສຽງ, ມີຜົນກະທົບທາງດ້ານນິຕິກຳ ແລະ ກິດລະບຽບຕ່າງໆ ຫຼື ນຳພາໃຫ້ມີການສູນເສຍທາງດ້ານການເງິນ. ທະນາຄານບໍ່ສາມາດຕັດຄວາມສ່ຽງທາງດ້ານການດຳເນີນງານໄດ້ທັງໝົດ ແຕ່ທາງທະນາຄານພະຍາຍາມທີ່ຈະບໍລິຫານຄວາມສ່ຽງເຫຼົ່ານີ້ຜ່ານໂຄງປະກອບການຄວບຄຸມ ແລະ ດ້ວຍການຕິດຕາມ ແລະ ໂຕ້ຕອບຕໍ່ຄວາມສ່ຽງທີ່ເປັນໄປໄດ້. ການຄວບຄຸມຕ່າງໆ ລວມມີການແຍກໜ້າທີ່ສະເພາະເຈາະຈົງ, ການເຂົ້າເຖິງຂໍ້ມູນ, ການອະນຸມັດ ແລະ ມີຂັ້ນຕອນການສົມທຽບຄືນ, ການສຶກສາຂອງພະນັກງານ ແລະ ຂະບວນການໃນການປະເມີນ ເຊິ່ງລວມທັງການນຳໃຊ້ການກວດກາພາຍໃນ. ນອກຈາກນີ້, ທາງທະນາຄານຍັງເອົາໃຈໃສ່ໃນການຝຶກອົບຮົມໃຫ້ພະນັກງານ, ການສອນວຽກ ແລະ ມີການປະເມີນຜົນການເຮັດວຽກຂອງພະນັກງານທະນາຄານເອງ.

37. ການບໍລິຫານທຶນ

ທະນາຄານໄດ້ຮັກສາທຶນສຳຮອງຕ່ຳສຸດຕາມລະບຽບການເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ລົງວັນທີ 14 ຕຸລາ 2009 ອອກໂດຍຣັກສາການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ຄຳແນະນຳອື່ນໆ. ຈຸດປະສົງເບື້ອງຕົ້ນຂອງການບໍລິຫານທຶນຂອງທະນາຄານແມ່ນເພື່ອຮັບປະກັນວ່າທະນາຄານໄດ້ປະຕິບັດຕາມຂໍ້ກຳນົດທາງດ້ານເງິນທຶນຂອງ ທຫລ. ທະນາຄານຮັບຮູ້ເຖິງຄວາມຈຳເປັນຂອງທະນາຄານເພື່ອຮັກສາການບໍລິຫານຊັບສິນ ແລະ ໜີ້ສິນໃຫ້ມີປະສິດທິພາບເພື່ອສ້າງສົມດຸນລະຫວ່າງການສ້າງກຳໄລ ແລະ ຄວາມພຽງພໍຂອງທຶນ.

ອີງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ທຶນຕາມລະບຽບການຂອງທະນາຄານທາງຖືກວິເຄາະເປັນ 2 ລະດັບຄື:

- ທຶນຊັ້ນ 1 ປະກອບດ້ວຍ: ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອການຂະຍາຍທຸລະກິດ ແລະ ທຶນອື່ນໆ ແລະ ກຳໄລລໍຖ້າແບ່ງປັນ;
- ທຶນຊັ້ນ 2 ແມ່ນມູນຄ່າທີ່ຕ່ຳກວ່າຂອງ: 1.25% ຂອງຍອດລວມຄວາມສ່ຽງຂອງລາຍການໃນໃບສະຫຼຸບຊັບສິນບັດ ແລະ ຍອດເຫຼືອຂອງເງິນແຮທົ່ວໄປພາຍໃນປີ

ຂອບເຂດຕ່າງໆແມ່ນຖືກນຳໃຊ້ເພື່ອເປັນອີງປະກອບຂອງທຶນອີງໃສ່: ທຶນຊັ້ນ 2 ບໍ່ສາມາດເກີນທຶນຊັ້ນ 1 ໄດ້ ແລະ ໜີ້ສິນສຳຮອງບໍ່ສາມາດເກີນ 50% ຂອງທຶນຊັ້ນ 1.

ການວິເຄາະທຶນແມ່ນອີງຕາມຂໍ້ມູນທາງການເງິນທີ່ໄດ້ຈາກເອກະສານລາຍງານການເງິນລວມກິດຈະການ ຕາມມາດຕະຖານສາກົນດ້ານການລາຍງານການເງິນ ເຊິ່ງມີດັ່ງຕໍ່ໄປນີ້ :

	30 ມິຖຸນາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ທຶນຊັ້ນ **1**	1,092,094	1,117,789
ທຶນຊັ້ນ **2**	27,536	-
ລວມທຶນ	1,119,630	1,117,789
ລົບ : ຫັກອອກຈາກທຶນ (ການລົງທຶນໃນນິຕິບຸກຄົນອື່ນ)	(547,173)	(534,430)
ທຶນສຳລັບການຄິດໄລ່ CAR (A)	**572,457**	**583,359**
ຄວາມສ່ຽງສຳຄັນຢູ່ໃບສະຫລຸບຊັບສິນບັດ	5,998,684	6,457,127
ຄວາມສ່ຽງສຳຄັນຢູ່ລາຍການນອກໃບສະຫລຸບຊັບສິນບັດ	2,535,374	864,203
ລວມຍອດຊັບສິນທີ່ມີຄວາມສ່ຽງສຳຄັນ (B)	**8,534,058**	**7,321,330**
ອັດຕາສ່ວນຄວາມພຽງພໍຂອງທຶນ (A/B)	**6.71%**	**7.97%**

38. ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ

ມູນຄ່າຍຸດຕິທຳໝາຍເຖິງ ມູນຄ່າທີ່ຊັບສິນສາມາດແລກປ່ຽນ ຫລື ໜີ້ສິນສາມາດຊຳລະໄດ້ບົນພື້ນຖານເທົ່າທຽມກັນ. ເນື່ອງຈາກ ວ່າບໍ່ມີລາຄາສົມທຽບຂອງຕະຫລາດ, ຊັບສິນ ແລະ ໜີ້ສິນ ຂອງທະນາຄານຈຶ່ງບໍ່ສາມາດປະເມີນລາຄາຕາມຕະຫລາດໄດ້. ດັ່ງນັ້ນ , ມູນຄ່າຍຸດຕິທາຈຶ່ງຖືກປະເມີນແບບສົມມຸດຕິຖານ ໂດຍອີງຕາມລັກສະນະຂອງຊັບສິນ ແລະ ໜີ້ສິນ. ໃນຄຳເຫັນຂອງຄະນະ ອຳນວຍການ ນອກຈາກພັນທະບັດທີ່ອອກໂດຍກະຊວງການເງິນ, ພັນທະບັດທີ່ອອກໂດຍ ທຫລ ແລະ ເງິນກູ້ຢືມຈາກ ທຫລ, ມູນຄ່າຍັງເຫລືອ ໃນບັນຊີຊັບສິນ ແລະ ໜີ້ສິນ ທີ່ລວມເຂົ້າຢູ່ໃນໃບລາຍງານຖານະການເງິນລວມກິດຈະການ ສຳລັບໄລຍະ 6 ເດືອນຕົ້ນປີ ແມ່ນໄດ້ຖືກປະເມີນມູນຄ່າຍຸດຕິທຳຢ່າງສົມເຫດສົມຜົນ. ໃນການປະເມີນນີ້, ຄະນະອຳນວຍການຂອງທະນາຄານ ສົມມຸດຖານວ່າ ເງິນກູ້ ແລະ ເງິນລ່ວງໜ້າສ່ວນໃຫຍ່ແມ່ນຖືຄອງຈົນຮອດຄົບກຳນົດ ພ້ອມກັບມີມູນຄ່າຍຸດຕິທຳເທົ່າກັບມູນຄ່າ ຕາມບັນຊີທີ່ທັງເຫຼືອຂອງເງິນກູ້ລົບໃຫ້ເງິນແຮ່ຄ່າເຊື່ອມສຳລັບການສູນເສຍເງິນກູ້.

38.1 ການກຳນົດມູນຄ່າຍຸດຕິທຳ ແລະ ລະດັບຊັ້ນຂອງມູນຄ່າຍຸດຕິທຳ

ທະນາຄານໃຊ້ລະດັບຊັ້ນຕໍ່ໄປນີ້ໃນການກຳນົດ ແລະ ເປີດເຜີຍມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນໂດຍວິທີຕີມູນຄ່າ:

ລະດັບ 1: ລາຄາປະກາດ/(ບໍ່ໄດ້ດັດແປງ) ໃນຕະຫຼາດທີ່ມີການຊື້-ຂາຍ ສຳລັບ ຊັບສິນ ຫຼື ໜີ້ສິນ ຢ່າງດຽວກັນ;
ລະດັບ 2: ວິທີການອື່ນໆ ໂດຍນຳໃຊ້ປັດໃຈທີ່ມີຜົນກະທົບສູງຕໍ່ມູນຄ່າຍຸດຕິທຳ ບໍ່ວ່າທາງກົງ ຫຼື ທາງອ້ອມ ເຊິ່ງສາມາດສັງເກດ ເຫັນໄດ້;
ລະດັບ 3: ວິທີການທີ່ນຳໃຊ້ປັດໃຈທີ່ມີຜົນກະທົບສູງຕໍ່ກັບມູນຄ່າຍຸດຕິທຳ ທີ່ຂໍ້ມູນບໍ່ໄດ້ຢູ່ໃນຕະຫຼາດສັງເກດໄດ້

ການວິເຄາະເຄື່ອງມືທາງການເງິນໄດ້ບັນທຶກມູນຄ່າຍຸດຕິທຳໃນແຕ່ລະ ລະດັບຂອງລະດັບຊັ້ນມູນຄ່າຍຸດຕິທຳ ນະວັນທີ 30 ມິຖຸນາ 2015 ດັ່ງຕໍ່ໄປນີ້:

	ລະດັບ 1 *ລ້ານກີບ*	*ລະດັບ 2* *ລ້ານກີບ*	*ລະດັບ 3* *ລ້ານກີບ*	*ລວມ* *ລ້ານກີບ*
ການລົງທຶນທາງການເງິນ - ມູນຄ່າຍຸດຕິທາໂດຍ ຜ່ານກຳໄລຂາດທຶນ				
- *ຫຼັກຊັບທີ່ອອກໂດຍຫ້ວໜ່ວຍທຸລະກິດພາຍໃນ*	-	-	-	-
ການລົງທຶນທາງການເງິນ ປະເພດມີໄວ້ເພື່ອຂາຍ				
ຫຼັກຊັບໜີ້	-	-	-	-
- *ຫຼັກຊັບໜີ້ທີ່ອອກໂດຍລັດຖະບານ*	-	-	-	-
- *ຫຼັກຊັບໜີ້ທີ່ອອກໂດຍທະນາຄານພາຍ ໃນອື່ນໆ*	-	-	-	-
- *ຫຼັກຊັບໜີ້ທີ່ອອກໂດຍບໍລິສັດພາຍໃນ*	-	-	-	-
ຫຼັກຊັບທຶນ	223,244	-	-	223,244
- *ຫຼັກຊັບທຶນທີ່ອອກໂດຍທະນາຄານພາຍ ໃນອື່ນໆ*	-	-	-	*204,214*
- *ຫຼັກຊັບທຶນທີ່ອອກໂດຍບໍລິສັດພາຍໃນ*	*204,214*	-	-	-
- *ອື່ນໆ*	*19,030*	-	-	*19,030*
	223,244	**-**	**-**	**223,244**

38. ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

38.2 ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ບໍ່ໄດ້ບັນທຶກຕາມມູນຄ່າຍຸດຕິທຳ

ທະນາຄານນຳໃຊ້ວິທີ ແລະ ການຄາດຄະເນດັ່ງຕໍ່ໄປນີ້ ໃນການພິຈາລະນາມູນຄ່າຍຸດຕິທຳສຳລັບ ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ບໍ່ໄດ້ບັນທຶກຕາມມູນຄ່າຍຸດຕິທຳໃນເອກະສານລາຍງານການເງິນລວມກິດຈະການ:

ຊັບສິນທີ່ມູນຄ່າຍຸດຕິທຳໃກ້ຄຽງກັບມູນຄ່າຕາມບັນຊີ

ສຳລັບ ຊັບສິນ ແລະ ໜີ້ສິນທີ່ເປັນໄລຍະສັ້ນ (ຕ່ຳກວ່າ 1 ປີ) ມີການຄາດການວ່າ ຈຳນວນຕາມບັນຊີ ໃກ້ຄຽງກັບ ມູນຄ່າຍຸດຕິທຳ. ການຄາດຄະເນນີ້ແມ່ນຍັງໃຊ້ກັບເງິນຝາກທະເສລາຍອັນ.

ເຄື່ອງມືທາງການເງິນທີ່ມີອັດຕາຄົງທີ່

ມູນຄ່າຍຸດຕິທຳຖືກກຳນົດໂດຍວິທີກະແສເງິນສົດແບບສ່ວນຫຼຸດ ໂດຍໃຊ້ດອກເບ້ຍນະທ້າຍໄລຍະຂອງເຄື່ອງມືທາງການເງິນໃນ ຕະຫຼາດທີ່ມີຄວາມສ່ຽງ ແລະ ໄລຍະເວລາທີ່ຄືກັນ. ນອກນັ້ນ ທະນາຄານຍັງຄາດຄະເນວ່າເງິນກູ້ທີ່ໃຫ້ກັບລູກຄ້າແມ່ນຖືໄວ້ຈົນຄົບກຳນົດ. ມູນຄ່າຍຸດຕິທຳຂອງເງິນກູ້ທີ່ໃຫ້ລູກຄ້າແມ່ນກຳນົດຈາກມູນຄ່າຕາມບັນຊີ ລົບໃຫ້ ເງິນແຮ່ຄ່າເຊື່ອມ.

ລາຍການຕໍ່ໄປນີ້ແມ່ນການປຽບທຽບຕາມປະເພດຂອງມູນຄ່າຕາມບັນຊີ ແລະ ມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນຂອງ ທະນາຄານທີ່ບໍ່ໄດ້ບັນທຶກຕາມມູນຄ່າຍຸດຕິທຳໃນເອກະສານລາຍງານການເງິນລວມກິດຈະການ:

	ມູນຄ່າຕາມບັນຊີ ລ້ານກີບ	*ມູນຄ່າຍຸດຕິທຳ ລ້ານກີບ*
ຊັບສິນທາງການເງິນ		
ເງິນສົດ ແລະ ເງິນຝາກຢູ່ ທຫລ	9,028,527	9,028,527
ເງິນຝາກຢູ່ທະນາຄານອື່ນ	2,197,709	2,197,709
ເງິນກູ້ ແລະ ເງິນລ່ວງໜ້າທີ່ໃຫ້ກັບ ລູກຄ້າ ແລະ ທະນາຄານອື່ນ	9,411,587	9,411,656
ການລົງທຶນທາງການເງິນ - ມູນຄ່າຍຸກຕິທຳໂດຍຜ່ານ ກຳໄລ ແລະ ຂາດທຶນ	5,504	5,504
ການລົງທຶນທາງການເງິນທີ່ມີໄວ້ເພື່ອຂາຍ	223,244	223,244
ການລົງທຶນທາງການເງິນທີ່ຖືໄວ້ຈົນຄົບກຳນົດ	1,512,812	1,512,812
	22,379,383	**22,379,452**
ໜີ້ສິນທາງການເງິນ		
ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ	2,246,327	2,246,327
ເງິນກູ້ຍືມຈາກ ທຫລ	247,886	622,857
ໜີ້ທີ່ຕ້ອງສົ່ງລູກຄ້າ	19,946,638	19,946,637
	22,440,851	**22,815,821**

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ (ຕໍ່)
ນະວັນທີ ແລະ ສຳລັບໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2015

39. ກຳໄລຕໍ່ຮຸ້ນ

ມູນຄ່າຂອງກຳໄລຕໍ່ຮຸ້ນ ແມ່ນຄິດໄລ່ຈາກຜົນຫານລະຫວ່າງ ກຳໄລຫຼັງຫັກອາກອນທີ່ຄາດວ່າຈະຕ້ອງຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນ ຂອງທະນາຄານ ກັບ ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນໄລຍະ.

ລາຍການດັ່ງລຸ່ມນີ້ສົ່ງຜົນກະທົບຕໍ່ລາຍໄດ້ ແລະ ຂໍ້ມູນຮຸ້ນ ທີ່ໃຊ້ເຂົ້າໃນການຄິດໄລ່ (ຂາດທຶນ)/ກຳໄລຕໍ່ຮຸ້ນ.

	30 ມິຖຸນາ 2015	*30 ມິຖຸນາ 2014*
ກຳໄລສຸດທິຫຼັງຫັກອາກອນທີ່ຄາດວ່າຈະຕ້ອງໄດ້ຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນ ບົນພື້ນຖານກຳໄລຕໍ່ຮຸ້ນທົ່ວໄປ (ລ້ານກີບ)	68,547	104,042
ຈຳນວນສະເລ່ຍຂອງຮຸ້ນສາມັນ (ຫົວໜ່ວຍ)	136,577,600	136,577,600
ມູນຄ່າໜ້າບັດຕໍ່ຮຸ້ນ (ກີບ)	5,000	5,000
ກຳໄລຕໍ່ຮຸ້ນ (ກີບ)	502	762

40. ເຫດການທີ່ເກີດຂຶ້ນຫຼັງມື້ປິດບັນຊີ

ນອກຈາກລາຍການທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນລວມກິດຈະການສະບັບນີ້, ນະມື້ເຮັດປົດລາຍງານ, ບໍ່ມີ ເຫດການໃດເກີດຂຶ້ນຫລັງຈາກວັນທີ 30 ມິຖຸນາ 2015 ທີ່ມີຜົນກະທົບສຳຄັນຕໍ່ໃບລາຍງານຖານະທາງການເງິນລວມ ກິດຈະການຂອງທະນາຄານ ນະວັນທີ 30 ມິຖຸນາ 2015.

41. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕ່າງປະເທດ ທຽບເທົ່າເງິນກີບລາວໃນ ວັນທີ 30 ມິຖຸນາ 2015

	30 ມິຖຸນາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ໂດລາ ສະຫະລັດ	8,099.00	8,080.00
ເອີໂລ	9,047.00	9,790.00
ບາດໄທ	241.64	246.55
ປອນ ອັງກິດ	12,523.00	12,323.00
ສະວິດ (Swiss Franc)	8,341.00	7,940.00
ເຢນ ຍີ່ປຸ່ນ	64.98	65.91
ໂດລາ ສິງກະໂປ	6,098.00	6,182.00
ໂດລາ ການາດາ	6,224.00	6,753.00
ໂດລາ ອົດສະຕາລີ	6,108.00	6,454.00
ຢວນ ຈີນ	1,291.00	1288.00
ດົ່ງຫວຽດນາມ	0.38	0.38

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ລຳມະນີແສງ ໄຊຍະເພັດ	ທ່ານ ນ. ທອງລິດ ສາວຈັນທະລາ	ທ່ານ ມັນທະລາດ ແກ້ວປະເສີດ
ຫົວໜ້າພະແນກບັນຊີສັງລວມ	ຮອງຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
28 ສິງຫາ 2015